ບົດແນະນຳຕາມຄວາມສະໝັກໃຈ

# ການຄຸ້ມຄອງບໍລິຫານການຄອບຄອງ ນຳໃຊ້ຢ່າງມີຄວາມຮັບຜິດຊອບ

## ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້

## ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ



CSA
Comité de la sécurité alimentaire mondiale

Food and Agriculture Organization of the United Nations

ບົດແນະນຳຕາມຄວາມສະໝັກໃຈ

# ການຄຸ້ມຄອງບໍລິຫານການຄອບຄອງ ນຳໃຊ້ຢ່າງມີຄວາມຮັບຜິດຊອບ

## ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້

## ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ

ຈັດພິມຄັ້ງທີ 2 ໂດຍ
ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ
ນະຄອນຫຼວງວຽງຈັນ, 2016

ວຽກດັ່ງກ່າວນີ້ ຕົ້ນສະບັບ ແມ່ນຖືກຈັດພິມໂດຍ ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ ເປັນພາສາອັງກິດ: Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Contextof National Food Security. ການແປ ແລະ ຈັດພິມ ປຶ້ມແນະນຳສະບັບພາສາລາວຄັ້ງທຳອິດໃນປີ 2013 ແມ່ນໄດ້ຮັບການສະໜັບສະໜູນຈາກອົງການ GIZ. ສ່ວນສະບັບພາສາລາວທີ່ຈັດພິມເປັນຄັ້ງທີ 2 ນີ້ ແມ່ນໄດ້ຮັບການປັບປຸງທາງດ້ານເນື້ອໃນການແປພາສາລາວໂດຍ ການສະໜັບສະໜູນຈາກໂຄງການບໍລິຫານລັດກ່ຽວກັບທີ່ດິນ ປະຈຳພາກພື້ນແມ່ນ້ຳຂອງ (Mekong Region Land Governance Prolect). ຖ້າຫາກມີເນື້ອໃນທີ່ຄາດເຄື່ອນ ແມ່ນໃຫ້ຖືເອົາສະບັບພາສາຕົ້ນສະບັບເປັນບ່ອນອີງ.

ຂໍ້ມູນທີ່ລະບຸ ແລະ ນຳສະເໜີຢູ່ໃນປຶ້ມແນະນຳນີ້ ບໍ່ໄດ້ແມ່ນຄວາມຄິດເຫັນຂອງອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ ກ່ຽວກັບ ສະພາບການຂອງປະເທດໃດໜຶ່ງ ທີ່ມີການກ່າວເຖິງບໍ່ວ່າຈະເປັນເຂດນ້ຳແດນດິນ, ເມືອງ, ຂອບເຂດອຳນາດ ຫລື ຊາຍແດນກໍແລ້ວແຕ່. ນອກຈາກນີ້ ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ ກໍບໍ່ໄດ້ໂຄສະນາສົ່ງເສີມຜະລິດຕະພັນ ແລະ ບໍລິສັດທີ່ເວົ້າເຖິງ ທັງບໍ່ມີຈຸດປະສົງຈະສົ່ງເສີມສິນຄ້າ ແລະ ການບໍລິການອື່ນໆນັ້ນເລີຍ. ຄວາມຄິດເຫັນຢູ່ໃນເອກະສານນີ້ ແມ່ນທັດສະນະຂອງຜູ້ຂຽນ ແຕ່ບໍ່ໄດ້ໝາຍຄວາມວ່າມັນສະທ້ອນຄວາມຄິດເຫັນຂອງອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ.

ສະຫງວນລິຂະສິດ. ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ ຊຸກຍູ້ສົ່ງເສີມໃຫ້ມີການຜະລິດ ແລະເຜີຍແຜ່ປຶ້ມແນະນຳນີ້ໃຫ້ຫລາຍຂຶ້ນອີກ. ຜູ້ໃດຈະນຳໄປໃຊ້ ບໍ່ແມ່ນເພື່ອຈຸດປະສົງທາງການຄ້າ ຈະໄດ້ຮັບອະນຸຍາດ ໂດຍບໍ່ຕ້ອງເສຍຄ່າໃດໆ ຫລັງຈາກທີ່ມີການຮ້ອງຂໍມາ. ການທີ່ຈະນຳໄປຜະລິດຊ້ຳອີກຕື່ມ ເພື່ອນຳໄປຈຳໜ່າຍ ຫລື ເພື່ອຈຸດປະສົງທາງການຄ້າອື່ນໆ ລວມທັງນຳໄປໃຊ້ເພື່ອຈຸດປະສົງດ້ານການສຶກສາອາດຈະໃຫ້ເສຍຄ່າທຳນຽມ. ສ່ວນການເຮັດຄຳຮ້ອງຂໍອະນຸຍາດ ເພື່ອຜະລິດຊ້ຳ ແລະ ເຜີຍແຜ່ເອກະສານ ຊຶ່ງອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ ເປັນເຈົ້າຂອງສິຂະສິດ ແລະ ບັນຫາຕ່າງໆກ່ຽວຂ້ອງກັບລິຂະສິດ ແລະ ໃບອະນຸຍາດນັ້ນຄວນຕິດຕໍ່ທາງ ອີເມລ copyright@fao.org ຫລື ຕິດຕໍ່ກັບຫົວໜ້າສາຂາການພິມເຜີຍແຜນະໂຍບາຍ ແລະ ໃຫ້ການຊ່ວຍເຫລືອທີ່ຫ້ອງການແລກປ່ຽນຄວາມຮູ້, ການວິໄຈ ແລະ ການສົ່ງເສີມ ຂອງອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ, ຖະໜົນ Viale delle Terme di Caracalla,00153 ກຸງໂຣມ, ປະເທດອີຕາລີ.

© FAO, 2016

# ສາລະບານ


ຄຳນຳ IV

ພາກ1: ພາກເລີ່ມຕົ້ນ 1
1. ຈຸດປະສົງ 1
2. ລັກສະນະ ແລະ ຂອບເຂດ 2

ພາກ2: ພາກສະເໜີ 3
3. ຫຼັກການຊີ້ນຳ ຂອງ ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບຜິດຊອບ 3
4. ສິດ ແລະ ຄວາມຮັບຜິດຊອບ ກ່ຽວກັບ ສິດຄອບຄອງນຳໃຊ້ 5
5. ນະໂຍບາຍ, ກອບດ້ານນິຕິກຳ ແລະ ກອບດ້ານການຈັດຕັ້ງ 7
6. ການໃຫ້ບໍລິການ* 9

ພາກ3: ການຮັບຮູ້ທາງກົດໝາຍ ແລະ ການຈັດສັນສິດ ແລະ ໜ້າທີ່ ໃນການຄອບຄອງນຳໃຊ້ 11
7. ມາດຕະການປ້ອງກັນ 11
8. ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ສາທາລະນະ 12
9. ຊາວພື້ນເມືອງ ແລະ ຊຸມຊົນອື່ນ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ 14
10. ການຄອບຄອງນຳໃຊ້ ບໍ່ເປັນທາງການ 16

ພາກ4: ການໂອນ ແລະ ການປ່ຽນແປງອື່ນໆກ່ຽວກັບສິດແລະ ໜ້າທີ່ ໃນການຄອບຄອງນຳໃຊ້ 19
11. ຕະຫຼາດ 19
12. ການລົງທຶນ 20
13. ການຈັດລວມຕອນດິນ ແລະ ວິທີການດັດປັບອື່ນໆ 23
14. ການທົດແທນຄືນ 24
15. ການປະຕິຮູບການແຈກຢາຍຄືນ 25
16. ການເວນຄືນ ແລະ ການຊົດເຊີຍ 26

ພາກ5: ການບໍລິຫານການຄອບຄອງນຳໃຊ້ 29
17. ການບັນທຶກສິດຄອບຄອງນຳໃຊ້ 29
18. ການປະເມີນມູນຄ່າ 30
19. ການເກັບພາສີອາກອນ 31
20. ການວາງແຜນຜັງພື້ນທີ່ແບບຄວບຄຸມ 31
21. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ 32
22. ບັນຫາທີ່ຂ້າມເຂດຊາຍແດນ 33

ພາກ6: ການໂຕ້ຕອບຕໍ່ການປ່ຽນແປງສະພາບດິນຟ້າອາກາດ ແລະ ພາວະສຸກເສີນ 35
23. ການປ່ຽນແປງສະພາບດິນຟ້າອາກາດ 35
24. ໄພພິບັດທາງທຳມະຊາດ 36
25. ຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ 37

ພາກ7: ການສົ່ງເສີມ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ 39

# ຄຳນຳ

ຈຸດປະສົງຂອງ ບົດແນະນຳຕາມຄວາມສະໝັກໃຈນີ້ ແມ່ນເພື່ອໃຊ້ເປັນບ່ອນອີງ ແລະ ເພື່ອໃຫ້ທິດທາງ ໃນການປັບປຸງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໂດຍມີເປົ້າໝາຍລວມແນໃສ່ໃຫ້ບັນລຸໄດ້ຄວາມໝັ້ນຄົງທາງດ້ານສະບຽງອາຫານ ສຳລັບທຸກຄົນ ແລະ ເພື່ອສະໜັບສະໜູນໃຫ້ມີການປະຕິບັດຕົວຈິງຢ່າງຕັ້ງໜ້າຕໍ່ສິດໃນການມີອາຫານພຽງພໍ ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ.

ບົດແນະນຳສະບັບນີ້ ມຸ່ງໝາຍເພື່ອປະກອບສ່ວນຕໍ່ກັບຄວາມພະຍາຍາມໃນທົ່ວໂລກ ແລະ ໃນລະດັບຊາດໃນການລຶບລ້າງຄວາມອຶດຫິວ ແລະ ຄວາມທຸກຍາກ, ໂດຍອີງຕາມຫຼັກການ ຂອງການພັດທະນາແບບຍືນຍົງ ແລະ ດ້ວຍການຮັບຮູ້ວ່າທີ່ດິນເປັນສູນລວມຂອງການພັດທະນາ, ດ້ວຍການສົ່ງເສີມບັນດາສິດຄອບຄອງນຳໃຊ້ ທີ່ໝັ້ນຄົງ ແລະ ຄວາມສາມາດເຂົ້າເຖິງ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງເປັນທຳ.

ການລຶບລ້າງຄວາມອຶດຫິວ ແລະ ຄວາມທຸກຍາກ, ແລະ ການນຳໃຊ້ສິ່ງແວດລ້ອມແບບຍືນຍົງ, ໃນຄວາມໝາຍກວ້າງແມ່ນຂຶ້ນຢູ່ກັບ ວິທີການເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຂອງປະຊາຊົນ, ຊຸມຊົນ ແລະ ພາກສ່ວນອື່ນໆ. ການດຳລົງຊີວິດຂອງປະຊາຊົນສ່ວນຫຼາຍ, ໂດຍສະເພາະປະຊາຊົນຜູ້ທຸກຍາກຢູ່ເຂດຊົນນະບົດ, ແມ່ນຂຶ້ນຢູ່ກັບຄວາມສາມາດເຂົ້າເຖິງ ຊັບພະຍາກອນເຫຼົ່ານີ້ ຢ່າງໝັ້ນຄົງ ແລະ ເປັນທຳ ແລະ ການຄວບຄຸມຊັບພະຍາກອນເຫຼົ່ານີ້. ພວກມັນເປັນແຫຼ່ງອາຫານ ແລະ ບ່ອນຢູ່ອາໄສ; ເປັນພື້ນຖານການປະຕິບັດກິດຈະກຳດ້ານສັງຄົມ, ວັດທະນະທຳ ແລະ ສາດສະໜາ; ແລະ ເປັນປັດໄຈທີ່ເປັນໃຈກາງ ຂອງການເຕີບໂຕທາງດ້ານເສດຖະກິດ.

ສິ່ງສຳຄັນ ແມ່ນຕ້ອງຮັບຮູ້ວ່າ ການຄຸ້ມຄອງບໍລິຫານຢ່າງມີຄວາມຮັບຜິດຊອບ ຕໍ່ການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ແມ່ນມີການເຊື່ອມໂຍງຢ່າງແຍກບໍ່ໄດ້ກັບ ຄວາມສາມາດເຂົ້າເຖິງ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດອື່ນໆ , ເຊັ່ນ ຊັບພະຍາກອນນ້ຳ ແລະ ຊັບພະຍາກອນແຮ່ທາດ. ໃນຂະນະທີ່ມີການຮັບຮູ້ວ່າມີຫຼາກຫຼາຍຮູບແບບ ແລະ ລະບົບຂອງການຄຸ້ມຄອງບໍລິຫານຊັບພະຍາກອນທຳມະຊາດເຫຼົ່ານີ້ ພາຍໃຕ້ເງື່ອນໄຂຂອງປະເທດ, ລັດອາດຕ້ອງການພິຈາລະນາເອົາການຄຸ້ມຄອງບໍລິຫານຊັບພະຍາກອນທຳມະຊາດເຫຼົ່ານີ້ ເຂົ້າໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຕາມຄວາມເໝາະສົມ.

ຮູບການ ທີ່ປະຊາຊົນ, ຊຸມຊົນ ແລະ ພາກສ່ວນອື່ນໆ ໄດ້ມາເຊິ່ງການເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ແມ່ນຖືກກຳນົດ ແລະ ຄຸ້ມຄອງ ໂດຍສັງຄົມ ໂດຍຜ່ານລະບົບການຄອບຄອງນຳໃຊ້. ລະບົບການຄອບຄອງນຳໃຊ້ເຫຼົ່ານີ້ກຳນົດວ່າຜູ້ໃດສາມາດນຳໃຊ້ຊັບພະຍາກອນປະເພດໃດ, ເປັນເວລາດົນປານໃດ ແລະ ພາຍໃຕ້ເງື່ອນໄຂອັນໃດ. ລະບົບດັ່ງກ່າວອາດອີງໃສ່ບັນດານະໂຍບາຍ ແລະ ກົດໝາຍ ທີ່ເປັນລາຍລັກອັກສອນ, ຫຼື ຕາມປະເພນີ ແລະ ວິທີປະຕິບັດທີ່ບໍ່ເປັນລາຍລັກອັກສອນ.

ລະບົບການຄອບຄອງນຳໃຊ້ ໄດ້ປະເຊີນໜ້າກັບຄວາມກົດດັນທີ່ເພີ່ມຂຶ້ນ ຍ້ອນຈຳນວນປະຊາກອນໃນໂລກທີ່ເພີ່ມຂຶ້ນຊຶ່ງຮຽກຮ້ອງໃຫ້ມີຄວາມໝັ້ນຄົງທາງດ້ານສະບຽງອາຫານ, ແລະ ຍ້ອນການເສື່ອມໂຊມທາງດ້ານສິ່ງແວດລ້ອມ ແລະ ການປ່ຽນແປງສະພາບດິນຟ້າອາກາດ ເຮັດໃຫ້ມີທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຫຼຸດລົງ. ສິດຄອບຄອງນຳໃຊ້ທີ່ບໍ່ພຽງພໍ ແລະ ບໍ່ໝັ້ນຄົງ ໄດ້ເພີ່ມຄວາມສ່ຽງ, ຄວາມອຶດຢາກ ແລະ ຄວາມທຸກຍາກ, ແລະ ອາດນຳໄປສູ່ຄວາມຂັດແຍ່ງ ແລະ ການເສື່ອມໂຊມຂອງສິ່ງແວດລ້ອມ ເມື່ອຜູ້ນຳໃຊ້ທີ່ແກ່ງແຍ່ງ ຕໍ່ສູ້ກັນເພື່ອຄວບຄຸມຊັບພະຍາກອນເຫຼົ່ານີ້.

ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ເປັນອົງປະກອບທີ່ສຳຄັນໃນການກຳນົດເງື່ອນໄຂ ແລະ ວິທີການທີ່ປະຊາຊົນ, ຊຸມຊົນ ແລະ ພາກສ່ວນອື່ນໆ ສາມາດໄດ້ຮັບສິດ ແລະ ໜ້າທີ່ກ່ຽວຂ້ອງ ເພື່ອນຳໃຊ້ ແລະ ຄວບຄຸມທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ຫຼາຍບັນຫາກ່ຽວກັບການຄອບຄອງນຳໃຊ້ ເກີດຂຶ້ນຍ້ອນການຄຸ້ມຄອງບໍລິຫານທີ່ອ່ອນແອ, ແລະ ຄວາມພະຍາຍາມເພື່ອແກ້ໄຂບັນຫາ ກ່ຽວກັບການຄອບຄອງນຳໃຊ້ ແມ່ນຖືກກະທົບ ຍ້ອນຄຸນນະພາບຂອງການຄຸ້ມຄອງບໍລິຫານ. ການຄຸ້ມຄອງບໍລິຫານທີ່ອ່ອນແອສົ່ງຜົນກະທົບທາງລົບຕໍ່ສະເຖຍລະພາບທາງສັງຄົມ, ຕໍ່ການນຳໃຊ້ສິ່ງແວດລ້ອມແບບຍືນຍົງ, ການລົງທຶນ ແລະ ການເຕີບໂຕທາງດ້ານເສດຖະກິດ. ປະຊາຊົນອາດມີຊີວິດທີ່ມີຄວາມອຶດຢາກ ແລະ ຄວາມທຸກຍາກ ຖ້າວ່າເຂົາເຈົ້າສູນເສຍສິດຄອບຄອງນຳໃຊ້ ຕໍ່ບ່ອນຢູ່ອາໃສ, ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ກໍຄືຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ ຍ້ອນການປະຕິບັດການຄອບຄອງນຳໃຊ້ທີ່ມີການສໍ້ລາດບັງຫຼວງ ຫຼື ຖ້າວ່າອົງການຈັດຕັ້ງປະຕິບັດ ຫາກບໍ່ສາມາດປົກປ້ອງສິດຄອບຄອງນຳໃຊ້ຂອງເຂົາເຈົ້າ. ປະຊາຊົນຍັງອາດສູນເສຍແມ່ນແຕ່ຊີວິດຂອງເຂົາເຈົ້າ ເມື່ອການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ທີ່ອ່ອນແອ ນຳໄປສູ່ຄວາມຂັດແຍ່ງທີ່ຮຸນແຮງ. ແຕ່ໃນທາງກັບກັນ, ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ຈະເປັນການສົ່ງເສີມການ

ພັດທະນາສັງຄົມ ແລະ ເສດຖະກິດ ແບບຍືນຍົງ ທີ່ສາມາດຊ່ວຍລຶບລ້າງຄວາມທຸກຍາກ ແລະ ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ, ພ້ອມທັງ ຊຸກຍູ້ການລົງທຶນຢ່າງມີຄວາມຮັບຜິດຊອບ.

ເພື່ອເປັນການຕອບສະໜອງຕໍ່ຄວາມສົນໃຈທີ່ເພີ່ມຂຶ້ນ ແລະ ແຜ່ຂະຫຍາຍຢ່າງກ້ວາງຂວາງ, FAO ແລະ ບັນດາຄູ່ຮ່ວມງານໄດ້ລິເລີ່ມການສ້າງຄູ່ມື ກ່ຽວກັບ ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບຜິດຊອບສະບັບນີ້. ຂໍ້ລິເລີ່ມອັນນີ້ ໄດ້ຜັນຂະຫຍາຍ ແລະ ສະໜັບສະໜູນ ບົດແນະນຳຕາມຄວາມສະໝັກໃຈ ເພື່ອສະໜັບສະໜູນການປະຕິບັດຕົວຈິງຢ່າງຕັ້ງໜ້າຕໍ່ສິດທິໃນການມີອາຫານພຽງພໍ ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (ບົດແນະນຳຕາມຄວາມສະໝັກໃຈ ກ່ຽວກັບ ສິດທິດ້ານສະບຽງອາຫານ), ທີ່ຮັບຮອງເອົາໂດຍ ສະພາ FAO ໃນກອງປະຊຸມຄັ້ງທີ່ 127 ໃນເດືອນພະຈິກ 2004, ແລະ ກອງປະຊຸມສາກົນ ກ່ຽວກັບ ການປະຕິຮູບດິນປູກຝັງ ແລະ ການພັດທະນາຊົນນະບົດ ປີ 2006 (ICARRD).

ໃນກອງປະຊຸມຄັ້ງທີ 36 ໃນເດືອນຕຸລາ 2010, ຄະນະກຳມະການຄວາມໝັ້ນຄົງດ້ານສະບຽງອາຫານໂລກ (CFS) ໄດ້ຊຸກຍູ້ການສືບຕໍ່ຂະບວນການຮອບດ້ານ ເພື່ອພັດທະນາບົດແນະນຳສະບັບນີ້ ເພື່ອສະເໜີໃຫ້ CFS ພິຈາລະນາ, ແລະ ໄດ້ຕົກລົງສ້າງຕັ້ງກຸ່ມເຮັດວຽກທີ່ເປີດກວ້າງ ຂອງ CFS ເພື່ອທົບທວນ ຮ່າງສະບັບທຳອິດ ຂອງບົດແນະນຳດັ່ງກ່າວນີ້.

ບົດແນະນຳສະບັບນີ້ ໄດ້ປະຕິບັດຕາມຮູບແບບຂອງບົດນແນະນຳແບບສະໝັກໃຈສະບັບອື່ນໆຂອງ FAO ຊຶ່ງກຳນົດຫຼັກການ ແລະ ມາດຕະຖານທີ່ສາກົນຮອງຮັບ ໃນການປະຕິບັດຢ່າງມີຄວາມຮັບຜິດຊອບ ເຊັ່ນ: ບົດແນະນຳຕາມຄວາມສະໝັກໃຈກ່ຽວກັບສິດທິດ້ານສະບຽງອາຫານ; ຫຼັກປະພຶດຂອງພື້ນທີ່ປະມົງແບບມີຄວາມຮັບຜິດຊອບ; ຫຼັກປະພຶດສາກົນໃນການຈຳໜ່າຍ ແລະ ນຳໃຊ້ ຢາປາບສັດຕູພືດ; ບົດແນະນຳຕາມຄວາມສະໝັກໃຈ ກ່ຽວກັບການຄຸ້ມຄອງປ່າປູກຢ່າງມີຄວາມຮັບຜິດຊອບ; ແລະ ບົດແນະນຳຕາມຄວາມສະໝັກໃຈກ່ຽວກັບການຄຸ້ມຄອງອັກຄີໄພ: ຫຼັກການ ແລະ ມາດຕະການທາງຍຸດທະສາດ. ບັນດາເຄື່ອງມືເຫຼົ່ານີ້ ເປັນເອກະສານທີ່ຂ້ອນຂ້າງສັ້ນ ເຊິ່ງເປັນການວາງກອບທີ່ສາມາດນຳໃຊ້ໃນການພັດທະນາບັນດາຍຸດທະສາດ, ນະໂຍບາຍ, ກົດໝາຍ, ແຜນງານ ແລະ ກິດຈະກຳຕ່າງໆ. ເຄື່ອງມືດັ່ງກ່າວ ຍັງປະກອບດ້ວຍເອກະສານເພີ່ມເຕີມທີ່ຫຼາກຫຼາຍ, ເຊັ່ນ ຂໍ້ແນະນຳເພີ່ມເຕີມ ທີ່ໃຫ້ລາຍລະອຽດທາງວິຊາການສະເພາະດ້ານກ່ຽວກັບ ລັກສະນະສະເພາະ ເມື່ອຈຳເປັນ, ເຄື່ອງມືຝຶກອົບຮົມ ແລະ ສະໜັບສະໜູນ, ແລະ ເປັນທິດຊີ້ນຳເພີ່ມເຕີມເພື່ອຊ່ວຍໃນການຈັດຕັ້ງປະຕິບັດ.

ບົດແນະນຳສະບັບນີ້ ໄດ້ຮັບການຮັບຮອງ ໂດຍ CFS ຢູ່ກອງປະຊຸມ (ພິເສດ) ຄັ້ງທີ່ 38 ໃນວັນທີ 11 ພຶດສະພາ 2012.

ບົດແນະນຳນີ້ ຖືກພັດທະນາຂຶ້ນໂດຍກຸ່ມຄົ້ນຄວ້າແບບເປີດກ້ວາງ ທີ່ໄດ້ຈັດປະຊຸມກັນໃນເດືອນມິຖຸນາ, ກໍລະກົດ ແລະ ຕຸລາ ປີ 2011 ແລະ ໃນເດືອນມີນາ ປີ 2012, ບົນພື້ນຖານຂະບວນການປຶກສາຫາລືແບບມີສ່ວນຮ່ວມໃນລະຫວ່າງ ປີ 2009-2010. ການປຶກສາຫາລືລະດັບພາກພື້ນ ໄດ້ຈັດຂຶ້ນຢູ່ປະເທດ ເບຼຊິລ, ເບີກີນາຟາໂຊ, ເອທີໂອປີ, ຈໍແດນ, ນາມີບີ, ປານາມາ, ໂຣມານີ, ສະຫະພັນລັດເຊຍ; ຊາມົວ ແລະ ຫວຽດນາມ. ກອງປະຊຸມປຶກສາຫາລື ລະດັບພາກພື້ນດັ່ງກ່າວນີ້ ເປັນການເຕົ້າໂຮມຜູ້ເຂົ້າຮ່ວມ ເກືອບ 700 ຄົນ ຈາກ 133 ປະເທດ, ເຊິ່ງຕາງໜ້າໃຫ້ແກ່ພາກລັດ ແລະ ພາກເອກະຊົນ, ພາກປະຊາສັງຄົມ ແລະ ຄະນະນັກວິຊາການ. ຢູ່ໃນກອງປະຊຸມປຶກສາຫາລື 4 ຄັ້ງທີ່ຈັດຂຶ້ນເປັນພິເສດ ສຳລັບພາກປະຊາສັງຄົມທະວີບອາຟຼິກກາ (ຢູ່ປະເທດມາລີ); ທະວີບອາຊີ (ຢູ່ປະເທດມາເລເຊຍ); ທະວີບເອີຣົບ ແລະ ອາຊີຕາເວັນຕົກ (ຢູ່ປະເທດອີຕາລີ); ແລະ ອາເມລິກາລາຕິນ (ຢູ່ປະເທດບຼາຊິລ), ໂດຍມີຜູ້ເຂົ້າຮ່ວມເກືອບ 200 ຄົນ ຈາກ 70 ປະເທດ, ແລະ ການປຶກສາຫາລືເພີ່ມເຕີມຂອງພາກເອກະຊົນ ໄດ້ມີຜູ້ເຂົ້າຮ່ວມກ່ວາ 70 ຄົນ ຈາກ 21 ປະເທດ. ບົດແນະນຳສະບັບນີ້ ຍັງລວມເອົາ ບັນດາຂໍ້ສະເໜີທີ່ໄດ້ຮັບຈາກການທາບທາມຂໍຄຳເຫັນທາງອີເລັກໂຕຼນິກ ຕໍ່ຮ່າງສະບັບເລີ່ມຕົ້ນ. ບັນດາຂໍ້ສະເໜີເພື່ອປັບປຸງຮ່າງສະບັບເລີ່ມຕົ້ນ ແມ່ນໄດ້ຮັບມາຈາກພາກລັດ ແລະ ພາກເອກະຊົນ, ພາກປະຊາສັງຄົມ ແລະ ຄະນະນັກວິຊາການ, ແລະ ຈາກທົ່ວໂລກ.

ບົດແນະນຳສະບັບນີ້ ມີຄວາມສອດຄ່ອງກັບ, ແລະ ປະຕິບັດຕາມ, ບັນດາເຄື່ອງມືລະດັບສາກົນ ແລະ ລະດັບພາກພື້ນ, ລວມທັງ ເປົ້າໝາຍສະຫັດສະຫວັດແຫ່ງການພັດທະນາ, ທີ່ແນໃສ່ສິດທິມະນຸດ ແລະ ສິດຄອບຄອງນຳໃຊ້. ຖ້າບັນດາຜູ້ອ່ານບົດແນະນຳສະບັບນີ້ ຕ້ອງການປັບປຸງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້, ແມ່ນສະເໜີໃຫ້ທົບທວນເບິ່ງເຄື່ອງມືເຫຼົ່ານີ້ຢ່າງເປັນປົກກະຕິ ກ່ຽວກັບພັນທະທີ່ພົວພັນກັບຕົນເອງ ແລະ ພັນທະແບບສະໝັກໃຈ, ແລະ ເພື່ອໄດ້ຮັບຄຳແນະນຳເພີ່ມເຕີມ.

ພາກ 1

# ພາກສະເໜີລວມ

## 1. ຈຸດປະສົງ

1.1 ບົດແນະນຳສະບັບນີ້ ແນໃສ່ເພື່ອປັບປຸງການຄຸ້ມຄອງບໍລິຫານ ການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ຈຸດປະສົງດັ່ງກ່າວ ແມ່ນເພື່ອຜົນປະໂຫຍດຂອງທຸກຝ່າຍ, ໂດຍເນັ້ນໃສ່ ກຸ່ມຄົນທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ, ດ້ວຍເປົ້າໝາຍຂອງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການປະຕິບັດຕົວຈິງຢ່າງຕັ້ງໜ້າຕໍ່ສິດໃນການມີອາຫານທີ່ພຽງພໍ, ການລຶບລ້າງຄວາມທຸກຍາກ, ການດຳລົງຊີວິດທີ່ຍືນຍົງ, ສະເຖຍລະພາບທາງສັງຄົມ, ຄວາມໝັ້ນຄົງດ້ານທີ່ຢູ່ອາໃສ, ການພັດທະນາຊົນນະບົດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ ແລະ ສັງຄົມ ແບບຍືນຍົງ. ທຸກແຜນງານ, ນະໂຍບາຍ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອປັບປຸງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ໂດຍຜ່ານການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຄວນສອດຄ່ອງກັບ ພັນທະທີ່ມີຢູ່ຂອງລັດພາຍໃຕ້ກົດໝາຍສາກົນ, ລວມທັງ ຖະແຫຼງການສາກົນ ກ່ຽວກັບສິດທິມະນຸດ ແລະ ເຄື່ອງມືອື່ນໆທາງດ້ານສິດທິມະນຸດຂອງສາກົນ.

1.2 ບົດແນະນຳສະບັບນີ້ມີຈຸດປະສົງເພື່ອ:

1. ປັບປຸງການຄຸ້ມຄອງບໍລິຫານ ການຄອບຄອງນຳໃຊ້ ດ້ວຍການໃຫ້ຄຳແນະນຳ ແລະ ຂໍ້ມູນ ກ່ຽວກັບວິທີປະຕິບັດທີ່ຖືກຍອມຮັບໃນລະດັບສາກົນ ສຳລັບລະບົບທີ່ໃຊ້ກ່ຽວກັບ ສິດໃນການນຳໃຊ້, ຄຸ້ມຄອງ ແລະ ຄວບຄຸມທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້.
2. ປະກອບສ່ວນເຂົ້າໃນການປັບປຸງ ແລະ ພັດທະນານະໂຍບາຍ, ກອບດ້ານນິຕິກຳ ແລະດ້ານການຈັດຕັ້ງທີ່ຄຸ້ມຄອງບັນດາສິດຄອບຄອງນຳໃຊ້ທີ່ມີຢູ່ຕໍ່ຊັບພະຍາກອນເຫຼົ່ານີ້.
3. ເພີ່ມທະວີ ຄວາມໂປ່ງໃສ ແລະ ປັບປຸງ ການເຮັດວຽກຂອງລະບົບການຄອບຄອງນຳໃຊ້.
4. ເສີມສ້າງຄວາມອາດສາມາດ ແລະ ການດຳເນີນງານຂອງບັນດາອົງການຈັດຕັ້ງປະຕິບັດ; ບັນດາອົງການຕຸລາການ; ອຳນາດການປົກຄອງທ້ອງຖິ່ນ; ການຈັດຕັ້ງຂອງຊາວກະສິກອນ ແລະ ຜູ້ຜະລິດຂະໜາດນ້ອຍ, ຊາວປະມົງ ແລະ ຜູ້ຊົມໃຊ້ປ່າໄມ້; ຜູ້ລ້ຽງສັດ; ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ; ພາກປະຊາສັງຄົມ; ພາກເອກະຊົນ; ຄະນະນັກວິຊາການ; ແລະ ທຸກຄົນທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ກໍ່ຄືການສົ່ງເສີມການຮ່ວມມື ລະຫວ່າງບັນດາພາກສ່ວນທີ່ກ່າວມານັ້ນ.

* ບໍ່ມີຄຳນິຍາມສາກົນກ່ຽວກັບທີ່ດິນທີ່ກ່ຽວກັບສິດຄອບຄອງນຳໃຊ້. ຄວາມໝາຍຂອງຄຳນີ້ອາດຈະຖືກກຳນົດຕາມເນື້ອໃນພາຍໃນປະເທດ

## 2. ລັກສະນະ ແລະ ຂອບເຂດ

2.1 ບົດແນະນຳສະບັບນີ້ແມ່ນແບບສະໝັກໃຈ.

2.2 ບົດແນະນຳສະບັບນີ້ ຄວນຖືກຕີຄວາມໝາຍ ແລະ ນຳໃຊ້ ໂດຍສອດຄ່ອງກັບພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມກັບຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ນຳໃຊ້ໃນພາກພື້ນ ແລະ ສາກົນ. ມັນເປັນການເພີ່ມເຕີມໃສ່ ແລະ ສະໜັບສະໜູນ ຂໍ້ລິເລີ່ມລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນ ທີ່ເອົາໃຈໃສ່ດ້ານສິດທິມະນຸດ ແລະ ສະໜອງສິດຄອບຄອງນຳໃຊ້ທີ່ໝັ້ນຄົງ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ພ້ອມທັງຂໍ້ລິເລີ່ມ ເພື່ອປັບປຸງການຄຸ້ມຄອງບໍລິຫານ. ບໍ່ມີຂໍ້ໃດຢູ່ໃນບົດແນະນຳສະບັບນີ້ ທີ່ຖືວ່າຈຳກັດ ຫຼື ບັນທອນ ພັນທະຕາມກົດໝາຍໃດໆ ທີ່ລັດອາດມີພາຍໃຕ້ກົດໝາຍສາກົນ.

2.3 ບົດແນະນຳສະບັບນີ້ ສາມາດນຳໃຊ້ໂດຍລັດ; ອົງການຈັດຕັ້ງປະຕິບັດ; ອົງການຕຸລາການ; ອຳນາດການປົກຄອງທ້ອງຖິ່ນ, ການຈັດຕັ້ງຂອງຊາວກະສິກອນ ແລະ ຜູ້ຜະລິດຂະໜາດນ້ອຍ, ຊາວປະມົງ, ແລະ ຜູ້ຊົມໃຊ້ປ່າໄມ້; ຜູ້ລ້ຽງສັດ; ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ; ປະຊາສັງຄົມ; ພາກເອກະຊົນ, ຄະນະນັກວິຊາການ; ແລະ ທຸກຄົນທີ່ກ່ຽວຂ້ອງ ເພື່ອປະເມີນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ພ້ອມທັງກຳນົດຫາບ່ອນປັບປຸງ ແລະ ນຳໄປໃຊ້.

2.4 ບົດແນະນຳສະບັບນີ້ມີຂອບເຂດທົ່ວໂລກ. ໂດຍພິຈາລະນາເຖິງສະພາບເງື່ອນໄຂຂອງປະເທດ, ບົດແນະນຳອາດຖືກນຳໃຊ້ໂດຍທຸກປະເທດ ແລະ ທຸກຂົງເຂດ ໃນທຸກລະດັບຂັ້ນຂອງການພັດທະນາເສດຖະກິດ ແລະ ສຳລັບການຄຸ້ມຄອງບໍລິຫານທຸກຮູບແບບຂອງການຄອບຄອງນຳໃຊ້, ລວມທັງ ການຄອບຄອງນຳໃຊ້ ຂອງພາກລັດ, ພາກເອກະຊົນ, ຊຸມຊົນ, ລວມໝູ່, ແບບດັ້ງເດີມ ແລະ ຕາມປະເພນີ.

2.5 ບົດແນະນຳສະບັບນີ້ ຄວນຖືກຕີຄວາມໝາຍ ແລະ ນຳໃຊ້ ໂດຍສອດຄ່ອງກັບລະບົບ ແລະ ສະຖາບັນກົດໝາຍພາຍໃນປະເທດ.

# ບັນຫາໂດຍລວມ

ພາກນີ້ ເນັ້ນເຖິງແງ່ຂອງການຄຸ້ມຄອງບໍລິຫານ ການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ກ່ຽວຂ້ອງກັບ ບັນດາສິດ ແລະ ຄວາມຮັບຜິດຊອບ; ນະໂຍບາຍ, ກອບດ້ານນິຕິກຳ ແລະ ດ້ານການຈັດຕັ້ງ; ແລະ ການໃຫ້ບໍລິການ.

ໃນຂົງເຂດຂອງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ລັດມີພັນທະພາຍໃຕ້ສົນທິສັນຍາດ້ານສິດທິມະນຸດສາກົນທີ່ມີຜົນບັງຄັບໃຊ້. ພາກທີ 2 ຄວນມີຄວາມໝາຍສອດຄ່ອງກັບວັກ 2.2.

## 3. ຫຼັກການຊີ້ນຳ ຂອງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຢ່າງມີຄວາມຮັບຜິດຊອບ

### 3A. ຫຼັກການລວມ

3.1 ລັດຄວນ:

1. ຮັບຮູ້ ແລະ ເຄົາລົບ ຜູ້ຖືສິດຄອບຄອງນຳໃຊ້ທີ່ຊອບທຳທຸກຄົນ ແລະ ສິດຂອງເຂົາເຈົ້າ. ລັດຄວນໃຊ້ມາດຕະການທີ່ສົມເຫດສົມຜົນ ເພື່ອກຳນົດ, ບັນທຶກ ແລະ ເຄົາລົບຜູ້ຖືສິດຄອບຄອງນຳໃຊ້ທີ່ຊອບທຳ ແລະ ສິດຂອງເຂົາເຈົ້າ, ບໍ່ວ່າສິດນັ້ນຈະໄດ້ຮັບການບັນທຶກໄວ້ຢ່າງເປັນທາງການຫຼືບໍ່ກໍ່ຕາມ; ເພື່ອຫຼີກເວັ້ນການລະເມີດ ສິດຄອບຄອງນຳໃຊ້ ຂອງຜູ້ອື່ນ; ແລະ ເພື່ອປະຕິບັດຕາມໜ້າທີ່ທີ່ຕິດພັນກັບສິດຄອບຄອງນຳໃຊ້.

2. ປົກປ້ອງສິດຄອບຄອງນຳໃຊ້ທີ່ຊອບທຳ ຈາກໄພຂົ່ມຂູ່ ແລະ ການລະເມີດ. ລັດຄວນປົກປ້ອງຜູ້ຖືສິດຄອບຄອງນຳໃຊ້ ບໍ່ໃຫ້ເຂົາເຈົ້າສູນເສຍສິດຄອບຄອງນຳໃຊ້ ຂອງເຂົາເຈົ້າຢ່າງໄຮ້ເຫດຜົນ, ລວມທັງ ການຖືກບັງຄັບໃຫ້ອອກຈາກທີ່ດິນ; ແລະ ເພື່ອໃຫ້ສອດຄ່ອງກັບພັນທະທີ່ລັດມີຢູ່ ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ.

3. ສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການຊົມໃຊ້ສິດຄອບຄອງນຳໃຊ້ ທີ່ຊອບທຳ. ລັດຄວນໃຊ້ມາດຕະການທີ່ຕັ້ງໜ້າ ເພື່ອສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການປະຕິບັດສິດຄອບຄອງນຳໃຊ້ຢ່າງເຕັມສ່ວນ ຫຼື ການເຮັດການປ່ຽນໂອນກ່ຽວກັບສິດ, ເຊັ່ນ ຮັບປະກັນວ່າທຸກຄົນສາມາດເຂົ້າເຖິງການບໍລິການ.

4. ສະໜອງການເຂົ້າເຖິງຄວາມຍຸຕິທຳ ເພື່ອຮັບມືກັບການລະເມີດສິດຄອບຄອງນຳໃຊ້ທີ່ຊອບທຳ. ລັດຄວນມີ ເຄື່ອງມືທີ່ມີປະສິດທິຜົນ ທີ່ທຸກຄົນເຂົ້າເຖິງໄດ້, ໂດຍຜ່ານອົງການຕຸລາການ ຫຼື ວິທີທາງອື່ນ, ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້; ແລະ

ເພື່ອໃຫ້ມີການບັງຄັບປະຕິບັດຜົນການຕັດສິນຢ່າງທັນການ ແລະ ພໍຈ່າຍໄດ້.ລັດຄວນຈ່າຍຄ່າທົດແທນໃຫ້ທັນເວລາ, ຍຸຕິທຳ ເມື່ອສິດຄອບຄອງນຳໃຊ້ ໄດ້ຖືກນຳໄປໃຊ້ເຂົ້າໃນເປົ້າໝາຍສາທາລະນະປະໂຫຍດ.

5. ປ້ອງກັນຂໍ້ຂັດແຍ່ງກ່ຽວກັບການຄອບຄອງນຳໃຊ້, ຂໍ້ຂັດແຍ່ງທີ່ໃຊ້ຄວາມຮຸນແຮງ ແລະ ການສໍ້ລາດບັງຫຼວງ. ລັດຄວນໃຊ້ມາດຕະການທີ່ຈິງຈັງ ເພື່ອປ້ອງກັນບໍ່ໃຫ້ຂໍ້ຂັດແຍ່ງເກີດຂຶ້ນ ແລະ ບໍ່ໃຫ້ຂະຫຍາຍເປັນຂໍ້ຂັດແຍ່ງທີ່ຮຸນແຮງ. ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ ໃນທຸກຮູບແບບ, ໃນທຸກຂັ້ນ, ແລະ ໃນທຸກສະພາບແວດລ້ອມ.

3.2 ພາກສ່ວນທີ່ບໍ່ຂຶ້ນກັບລັດ ລວມທັງ ພາກທຸລະກິດ ມີຄວາມຮັບຜິດຊອບໃນການເຄົາລົບສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳ. ພາກທຸລະກິດ ຄວນກະທຳການ ດ້ວຍຄວາມຮອບຄອບ ເພື່ອຫຼີກເວັ້ນການລະເມີດສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳຂອງຜູ້ອື່ນ. ໃນນັ້ນ ຄວນປະກອບດ້ວຍ ລະບົບຄຸ້ມຄອງຄວາມສ່ຽງ ເພື່ອປ້ອງກັນ ແລະ ແກ້ໄຂຜົນກະທົບທາງລົບຕໍ່ສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳ. ອົງກອນທຸລະກິດ ຄວນໃຫ້ການຮ່ວມມື ໃນກົນໄກນອກຕຸລາການ ເພື່ອສະໜອງການຢຽວຢາ, ລວມທັງ ກົນໄກແກ້ໄຂຄຳຮ້ອງທຸກທີ່ມີປະສິດທິຜົນຢູ່ຂັ້ນປະຕິບັດການ, ໃນບ່ອນທີ່ເໝາະສົມ, ໃນຈຸດທີ່ເຂົາເຈົ້າເປັນຜູ້ເຮັດ ຫຼື ມີສ່ວນເຮັດໃຫ້ເກີດ ຜົນກະທົບທາງລົບ ຕໍ່ສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳ. ພາກທຸລະກິດ ຄວນຈຳແນກ ແລະ ປະເມີນຜົນກະທົບຕົວຈິງ ຫຼື ທີ່ອາດເປັນໄປໄດ້ຕໍ່ສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳທີ່ເຂົາເຈົ້າອາດມີສ່ວນກ່ຽວຂ້ອງ. ສຳລັບພາກລັດ, ໂດຍສອດຄ່ອງກັບພັນທະສາກົນຂອງຕົນ, ລັດຄວນສະໜອງ ການເຂົ້າເຖິງການແກ້ໄຂທີ່ມີປະສິດທິຜົນທາງກົດໝາຍຕໍ່ ຜົນກະທົບທາງລົບ ຈາກພາກທຸລະກິດ ຕໍ່ສິດທິມະນຸດ ແລະ ສິດຄອບຄອງທີ່ຊອບທຳ. ບ່ອນທີ່ກ່ຽວພັນເຖິງບໍລິສັດຂ້າມຊາດ, ລັດຖະບານຂອງເຂົາເຈົ້າ ມີບົດບາດໃນການໃຫ້ການຊ່ວຍເຫຼືອບໍລິສັດ ແລະ ຊ່ວຍລັດເຈົ້າພາບເພື່ອຮັບປະກັນວ່າທຸລະກິດຈະບໍ່ມີສ່ວນກ່ຽວຂ້ອງກັບການລະເມີດສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳ. ລັດຄວນນຳໃຊ້ຂັ້ນຕອນເພີ່ມເຕີມ ເພື່ອປົກປ້ອງການລະເມີດ ສິດທິມະນຸດ ແລະ ສິດຄອບຄອງນຳໃຊ້ທີ່ຊອບທຳ ໂດຍພາກທຸລະກິດ ເຊິ່ງລັດເປັນເຈົ້າຂອງ ຫຼື ເປັນຜູ້ຄວບຄຸມ, ຫຼື ທຸລະກິດທີ່ໄດ້ຮັບການສະໜັບສະໜູນ ແລະ ການບໍລິການ ທີ່ສຳຄັນຈາກອົງການຂອງລັດ.

## 3B. ຫຼັກການຈັດຕັ້ງປະຕິບັດ

ຫຼັກການຈັດຕັ້ງປະຕິບັດເຫຼົ່ານີ້ ມີຄວາມສຳຄັນເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບ.

1. ກຽດສັກສີ ຂອງມະນຸດ: ຮັບຮູ້ ກຽດສັກສີທີ່ມີຕິດຕົວ ແລະ ສິດທິມະນຸດ ທີ່ເທົ່າທຽມກັນ ແລະ ບໍ່ສາມາດປ່ຽນໂອນໄດ້ ຂອງທຸກຄົນ.

2. ບໍ່ມີການຈຳແນກ: ບໍ່ຄວນມີຜູ້ໃດຖືກຈຳແນກ ບໍ່ວ່າຈະຕາມກົດໝາຍ, ນະໂຍບາຍ ກໍ່ຄືໃນພາກປະຕິບັດ.

3. ຄວາມເປັນທຳ ແລະ ຄວາມຍຸຕິທຳ: ການຮັບຮູ້ວ່າ ຄວາມສະເໝີພາບລະຫວ່າງບຸກຄົນອາດຮຽກຮ້ອງໃຫ້ໃຫ້ມີການຮັບຮູ້ຄວາມແຕກຕ່າງ ລະຫວ່າງ ບຸກຄົນ, ແລະ ໃຫ້ມີການດຳເນີນການໃນທາງບວກ, ລວມທັງການເພີ່ມອຳນາດ, ເພື່ອສົ່ງເສີມສິດຄອບຄອງນຳໃຊ້ທີ່ເປັນທຳ ແລະ ການເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ສຳລັບທຸກຄົນ ລວມທັງ ແມ່ຍິງ ແລະ ຜູ້ຊາຍ, ຄົນໄວໜຸ່ມ ແລະ ກຸ່ມຄົນທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດໂດຍຮີດຄອງປະເພນີ, ຕາມເງື່ອນໄຂຂອງປະເທດ.

4. ຄວາມສະເໝີພາບຍິງ-ຊາຍ: ຮັບປະກັນສິດສະເໝີພາບ ຂອງແມ່ຍິງ ແລະ ຜູ້ຊາຍ ໃນການຊົມໃຊ້ສິດທິມະນຸດ, ໄປພ້ອມໆກັບການຮັບຮູ້ເຖິງຄວາມແຕກຕ່າງ ລະຫວ່າງ

ແມ່ຍິງ ແລະ ຜູ້ຊາຍ ແລະ ນຳໃຊ້ມາດຕະການສະເພາະ ທີ່ແນໃສ່ເລັ່ງລັດໃຫ້ມີຄວາມສະເໝີພາບໃນຕົວຈິງເມື່ອຈຳເປັນ. ລັດຄວນຮັບປະກັນວ່າໃຫ້ແມ່ຍິງ ແລະ ເດັກເພດຍິງ ມີສິດຄອບຄອງນຳໃຊ້ ແລະ ເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງສະເໝີພາບ ໂດຍບໍ່ຂຶ້ນກັບສະຖານະທາງພົນລະເມືອງ ແລະ ສະຖານະການແຕ່ງງານຂອງເຂົາເຈົ້າ.

5. ວິທີການແບບຮອບດ້ານ ແລະ ຍືນຍົງ: ຮັບຮູ້ວ່າຊັບພະຍາກອນທຳມະຊາດ ແລະ ການນຳໃຊ້ພວກມັນ ແມ່ນກ່ຽວພັນກັນ, ແລະ ນຳໃຊ້ວິທີການບໍລິຫານທີ່ຄົບຊຸດ ແລະ ຍືນຍົງ.

6. ການປຶກສາຫາລື ແລະ ການມີສ່ວນຮ່ວມ: ໃຫ້ມີສ່ວນຮ່ວມ ແລະ ຊອກຫາການສະໜັບສະໜູນ ຈາກບັນດາບຸກຄົນ ທີ່ມີສິດຄອບຄອງນຳໃຊ້ທີ່ຊອບທຳ, ຜູ່ທີ່ອາດຖືກກະທົບຈາກການຕັດສິນໃຈ, ກ່ອນທີ່ຈະຕັດສິນໃຈ ແລະ ຕອບສະໜອງຕໍ່ການປະກອບສ່ວນຂອງເຂົາເຈົ້າ; ໂດຍຄຳນຶງເຖິງຄວາມບໍ່ສົມດູນຂອງອຳນາດທີ່ມີຢູ່ລະຫວ່າງພາກສ່ວນກ່ຽວຂ້ອງຕ່າງໆ ແລະ ຮັບປະກັນ ການເຂົ້າຮ່ວມຢ່າງຫ້າວຫັນ, ເປັນອິດສະລະ, ມີປະສິດທິຜົນ, ມີຄວາມໝາຍ ແລະ ໄດ້ຮັບຊາບ ໂດຍບຸກຄົນ ແລະ ກຸ່ມທີ່ກ່ຽວພັນກັບຂະບວນການຕັດສິນໃຈ.

7. ຫຼັກນິຕິທຳ: ນຳໃຊ້ວິທີການທີ່ອີງໃສ່ລະບຽບຫຼັກການ ໂດຍຜ່ານບັນດາກົດໝາຍທີ່ພິມເຜີຍແຜ່ໃນພາສາທີ່ສອດຄ່ອງ, ໃຊ້ໄດ້ກັບທຸກຄົນ, ມີຜົນບັງຄັບໃຊ້ຢ່າງເທົ່າທຽມ ແລະ ມີຄວາມເປັນເອກະລາດໃນການພິຈາລະນາ, ແລະ ສອດຄ່ອງກັບບັນດາພັນທະທີ່ມີຢູ່ຂອງເຂົາເຈົ້າ ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນບັງຄັບໃຊ້ ໃນລະດັບພາກພື້ນ ແລະ ລະດັບສາກົນ.

8. ຄວາມໂປ່ງໃສ: ກຳນົດຢ່າງຈະແຈ້ງ ແລະ ໂຄສະນາເຜີຍແຜ່ຢ່າງກ້ວາງຂວາງບັນດານະໂຍບາຍ, ກົດໝາຍ ແລະ ຂັ້ນຕອນ ໃນພາສາທີ່ສອດຄ່ອງ, ແລະ ໂຄສະນາເຜີຍແຜ່ຢ່າງກວ້າງຂວາງກ່ຽວກັບການຕັດສິນໃຈ ໃນພາສາທີ່ສອດຄ່ອງ ແລະ ໃນຮູບແບບທີ່ທຸກຄົນສາມາດເຂົ້າເຖິງໄດ້.

9. ຄວາມຮັບຜິດຊອບ: ໃຫ້ບຸກຄົນ, ຂະແໜງການຂອງລັດ, ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຮັບຜິດຊອບຕໍ່ການກະທຳ ແລະ ການຕັດສິນໃຈຂອງເຂົາເຈົ້າ ຕາມຫຼັກນິຕິທຳ.

10. ການປັບປຸງຢ່າງຕໍ່ເນື່ອງ: ລັດຄວນປັບປຸງກົນໄກການຕິດຕາມກວດກາ ແລະ ວິເຄາະການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ເພື່ອພັດທະນາບັນດາແຜນງານທີ່ອີງໃສ່ຫຼັກຖານ ແລະ ຮັບປະກັນການປັບປຸງຢ່າງຕໍ່ເນື່ອງ.

## 4. ສິດ ແລະ ຄວາມຮັບຜິດຊອບ ກ່ຽວກັບ ການຄອບຄອງນຳໃຊ້

4.1 ລັດຄວນພະຍາຍາມເພື່ອຮັບປະກັນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ເນື່ອງຈາກວ່າ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ເປັນຈຸດໃຈກາງ ເພື່ອໃຫ້ໄດ້ມາເຊິ່ງສິດທິມະນຸດ, ຄວາມໝັ້ນຄົງດ້ານສະບຽງອາຫານ, ການລຶບລ້າງຄວາມທຸກຍາກ, ການດຳລົງຊີວິດແບບຍືນຍົງ, ສະເຖຍລະພາບທາງສັງຄົມ, ຄວາມໝັ້ນຄົງດ້ານບ່ອນຢູ່ອາໃສ, ການພັດທະນາຊົນນະບົດ, ແລະ ການເຕີບໂຕທາງດ້ານເສດຖະກິດ ແລະ ສັງຄົມ.

4.2 ລັດຄວນຮັບປະກັນວ່າທຸກການກະທຳ ກ່ຽວກັບ ການຄອບຄອງນຳໃຊ້ ແລະ ການຄຸ້ມຄອງບໍລິຫານສິ່ງດັ່ງກ່າວ ມີຄວາມສອດຄ່ອງກັບບັນດາພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ແລະ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາ

ທີ່ມີຜົນປະຕິບັດຢູ່ລະດັບພາກພື້ນ ແລະ ສາກົນ.

4.3 ທຸກຝ່າຍຄວນຮັບຮູ້ວ່າບໍ່ມີສິດຄອບຄອງນຳໃຊ້ອັນໃດ, ລວມທັງກຳມະສິດສ່ວນຕົວ, ທີ່ເຕັມສ່ວນເດັດຂາດ. ສິດຄອບຄອງນຳໃຊ້ທັງໝົດຖືກຈຳກັດດ້ວຍບັນດາສິດຂອງຜູ້ອື່ນ ແລະ ດ້ວຍມາດຕະການຕ່າງໆ ທີ່ລັດນຳໃຊ້ ຊຶ່ງມີຄວາມຈຳເປັນສຳລັບເປົ້າໝາຍສາທາລະນະປະໂຫຍດ. ມາດຕະການດັ່ງກ່າວຄວນຖືກກຳນົດໂດຍກົດໝາຍ, ພຽງເພື່ອຈຸດປະສົງໃນການສົ່ງເສີມສະຫວັດດີການທົ່ວໄປ, ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສອດຄ່ອງກັບພັນທະທາງດ້ານສິດທິມະນຸດຂອງລັດ. ສິດຄອບຄອງນຳໃຊ້ຍັງຖືກສົມດູນໂດຍໜ້າທີ່. ທຸກພາກສ່ວນຄວນເຄົາລົບ ຕໍ່ການປົກປັກຮັກສາໄລຍະຍາວ ແລະ ການນຳໃຊ້ຢ່າງຍືນຍົງ ສຳລັບທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້.

4.4 ບົນພື້ນຖານການພິຈາລະນາສິດຄອບຄອງນຳໃຊ້ ໃຫ້ສອດຄ່ອງກັບກົດໝາຍຂອງຊາດ, ລັດຄວນໃຫ້ການຮັບຮູ້ທາງກົດໝາຍ ຕໍ່ສິດຄອບຄອງນຳໃຊ້ທີ່ຊອບທຳ ຊຶ່ງປັດຈຸບັນຍັງບໍ່ທັນໃນຮັບການປົກປ້ອງໂດຍກົດໝາຍ. ບັນດານະໂຍບາຍແລະກົດໝາຍທີ່ຮັບປະກັນສິດຄອບຄອງນຳໃຊ້ຄວນບໍ່ມີລັກສະນະຈຳແນກ ແລະ ແນໃສ່ບົດບາດຍິງ-ຊາຍ. ໂດຍສອດຄ່ອງກັບຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມ ຂອງບົດແນະນຳສະບັບນີ້, ລັດຄວນກຳນົດ ປະເພດຂອງສິດທີ່ຖືວ່າຊອບທຳ ຜ່ານກົດລະບຽບທີ່ໄດ້ຮັບການໂຄສະນາເຜີຍແຜ່ຢ່າງກ້ວາງຂວາງ. ທຸກຮູບແບບຂອງການຄອບຄອງນຳໃຊ້ ຄວນຊ່ວຍໃຫ້ທຸກຄົນໄດ້ຮັບຄວາມໝັ້ນຄົງໃນການຖືຄອງ ໃນລະດັບທີ່ຮັບປະກັນການປົກປ້ອງຕາມກົດໝາຍ ຈາກການບັງຄັບໃຫ້ອອກຈາກພື້ນທີ່ໂດຍບໍ່ສອດຄ່ອງກັບພັນທະທີ່ມີຢູ່ຂອງລັດພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ແລະ ຕໍ່ກັບການຄຸກຄາມ ແລະ ການຂົ່ມຂູ່ອື່ນໆ.

4.5 ລັດຄວນປົກປ້ອງສິດຄອງຄອງນຳໃຊ້ທີ່ຊອບທຳ, ແລະ ຮັບປະກັນວ່າປະຊາຊົນ ຈະບໍ່ຖືກຂັບໄລ່ຕາມລຳພັງໃຈ ແລະ ຮັບປະກັນວ່າສິດຄອບຄອງນຳໃຊ້ ທີ່ຊອບທຳ ຂອງເຂົາເຈົ້າ ຈະບໍ່ຖືກທຳລາຍ ຫຼື ລ່ວງລະເມີດ ໃນທາງອື່ນ.

4.6 ລັດຄວນກຳຈັດ ແລະ ຫ້າມທຸກຮູບແບບຂອງການຈຳແນກທີ່ພົວພັນກັບສິດຄອບຄອງນຳໃຊ້, ລວມທັງ ບັນດາການຈຳແນກທີ່ເປັນຜົນມາຈາກການປ່ຽນແປງສະຖານະພາບຂອງການແຕ່ງງານ, ການຂາດຄວາມສາມາດທາງກົດໝາຍ ແລະ ການຂາດຄວາມສາມາດໃນການເຂົ້າເຖິງຊັບພະຍາກອນດ້ານເສດຖະກິດ. ໂດຍສະເພາະ ລັດຄວນຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍມີສິດຄອບຄອງນຳໃຊ້ທີ່ເທົ່າທຽມກັນ, ລວມທັງສິດໃນການສືບທອດ ແລະ ເຮັດພິໃນກຳເພື່ອມອບສິດເຫຼົ່ານັ້ນ. ປະຕິບັດການດັ່ງກ່າວຂອງລັດ ຄວນສອດຄ່ອງກັບບັນດາພັນທະຂອງຕົນພາຍໃຕ້ກົດໝາຍ ແລະ ນິຕິກຳແຫ່ງຊາດ ແລະ ກົດໝາຍສາກົນ ແລະ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດ ໃນລະດັບພາກພື້ນ ແລະ ລະດັບສາກົນ.

4.7 ລັດຄວນພິຈາລະນາ ໃຫ້ການຊ່ວຍເຫຼືອໂດຍບໍ່ມີການຈຳແນກ ແລະ ແນໃສ່ບົດບາດຍິງຊາຍຢູ່ບ່ອນທີ່ປະຊາຊົນບໍ່ສາມາດດຳເນີນການດ້ວຍຕົວເຂົາເຈົ້າເອງ ເພື່ອໃຫ້ໄດ້ມາເຊິ່ງ ສິດຄອບຄອງນຳໃຊ້ ເພື່ອຄວາມຢູ່ລອດ, ການເຂົ້າເຖິງການບໍລິການຂອງພາກສ່ວນຈັດຕັ້ງປະຕິບັດ ແລະ ອົງການຕຸລາການ, ຫຼື ການເຂົ້າຮ່ວມໃນຂະບວນການ ຊຶ່ງອາດມີຜົນກະທົບຕໍ່ການຄອບຄອງນຳໃຊ້ຂອງເຂົາເຈົ້າ.

4.8 ເນື່ອງຈາກວ່າສິດທິມະນຸດທັງໝົດ ແມ່ນເປັນສາກົນ, ບໍ່ສາມາດແບ່ງແຍກໄດ້, ເພິ່ງພາອາໃສເຊິ່ງກັນ ແລະ ກັນ ແລະ ກ່ຽວພັນກັນ, ສະນັ້ນ ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ບໍ່ຄວນຖືເອົາສະເພາະແຕ່ ສິດທີ່ພົວພັນໂດຍກົງຕໍ່ຄວາມສາມາດເຂົ້າເຖິງແລະການນຳໃຊ້ທີ່ດິນ, ພື້ນທີ່ປະມົງແລະປ່າໄມ້ເທົ່ານັ້ນ, ແຕ່ຄວນພິຈາລະນາເຖິງ

2

ທຸກສິດທິທາງພົນລະເຮືອນ, ສິດທິທາງການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ ນຳອີກ. ເພື່ອເຮັດໄດ້ແນວນັ້ນ, ລັດຄວນເຄົາລົບ ແລະ ປົກປ້ອງສິດທິທາງພົນລະເຮືອນ ແລະ ສິດທິທາງການເມືອງ ຂອງຜູ້ປົກປ້ອງສິດທິມະນຸດ, ລວມທັງສິດທິມະນຸດຂອງຊາວນາ, ຊາວພື້ນເມືອງ, ຊາວປະມົງ, ຜູ້ລ້ຽງສັດ ແລະ ກຳມະກອນຢູ່ເຂດຊົນນະບົດ, ແລະ ລັດຄວນປະຕິບັດບັນດາພັນທະທາງດ້ານສິດທິມະນຸດຂອງຕົນ ໃນເວລາປະຕິບັດຕໍ່ ບຸກຄົນ ແລະ ສະມາຄົມທີ່ມີບົດບາດໃນການ ປົກປ້ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້.

4.9 ໂດຍຜ່ານອົງການຕຸລາການ ແລະ ອົງການບໍລິຫານ ທີ່ມີຄວາມເປັນກາງ ແລະ ມີຄວາມສາມາດ, ລັດຄວນເອື້ອອຳນວຍການເຂົ້າເຖິງວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ທີ່ທັນການ, ພໍຈ່າຍໄດ້ ແລະ ມີປະສິດທິຜົນ, ລວມເຖິງ ວິທີການທາງເລືອກອື່ນໃນການແກ້ໄຂຂໍ້ຂັດແຍ່ງລັກສະນະນັ້ນ, ແລະ ຄວນມີວິທີການຢຽວຢາ ທີ່ມີປະສິດທິພາບ ຊຶ່ງອາດລວມເຖິງສິດໃນການອຸທອນ ຕາມຄວາມເໝາະສົມ. ການຢຽວຢາດັ່ງກ່າວ ຄວນມີການບັງຄັບປະຕິບັດໃນທັນທີ ແລະ ອາດລວມມີການສົ່ງຄືນໃຫ້ເຈົ້າຂອງ, ການຊົດໃຊ້ຄ່າເສຍຫາຍ, ການທົດແທນຄ່າເສຍຫາຍ, ແລະ ການປົວແປງຄວາມເສຍຫາຍ. ລັດຄວນພະຍາຍາມເພື່ອຮັບປະກັນວ່າກຸ່ມຄົນທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ ໄດ້ມີໂອກາດເຂົ້າເຖິງກົນໄກດັ່ງກ່າວ, ໂດຍສອດຄ່ອງກັບ ວັກ 6.6 ແລະ 21.6. ລັດຄວນຮັບປະກັນໃຫ້ທຸກຄົນທີ່ຖືກລະເມີດສິດທິມະນຸດ ໃນຂົງເຂດຂອງການຄອບຄອງນຳໃຊ້ ສາມາດເຂົ້າເຖິງວິທີການແກ້ໄຂຂໍ້ຂັດແຍ່ງ ແລະ ການຢຽວຢາທີ່ກ່າວນັ້ນ.

4.10 ລັດຄວນຍິນດີຮັບເອົາ ແລະ ເອື້ອອຳນວຍໃຫ້ແກ່ການມີສ່ວນຮ່ວມຂອງບັນດາຜູ້ນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມຢ່າງເຕັມສ່ວນ ໃນຂະບວນການແບບມີສ່ວນຮ່ວມຂອງການຄຸ້ມຄອງບໍລິການການຄອບຄອງນຳໃຊ້, ໂດຍສະເພາະ, ການສ້າງ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍ ແລະ ກົດໝາຍ ແລະ ການຕັດສິນໃຈກ່ຽວກັບການພັດທະນາດິນແດນ, ຕາມຄວາມເໝາະສົມກັບບົດບາດຂອງລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ, ໂດຍສອດຄ່ອງກັບກົດໝາຍ ແລະ ນິຕິກຳ ຂອງຊາດ.

## 5. ນະໂຍບາຍ, ກອບດ້ານນິຕິກຳ ແລະ ກອບດ້ານການຈັດຕັ້ງ ທີ່ກ່ຽວພັນກັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້

5.1 ລັດຄວນສະໜອງ ແລະ ຮັກສານະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງ ທີ່ສົ່ງເສີມການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບ. ກອບວຽກເຫຼົ່ານີ້ແມ່ນຂຶ້ນກັບ ແລະ ຖືກສະໜັບສະໜູນ ໂດຍການປະຕິຮູບລະບົບນິຕິກຳ, ການບໍລິການຂອງລັດ ແລະ ອົງການຕຸລາການ ຢ່າງກວ້າງຂວາງ.

5.2 ລັດຄວນຮັບປະກັນວ່າ ນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງ ໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ມີຄວາມສອດຄ່ອງກັບພັນທະທີ່ມີຢູ່ພາຍໃຕ້ກົດໝາຍ ຂອງຊາດ ແລະ ກົດໝາຍສາກົນ, ແລະ ຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດຢູ່ໃນລະດັບພາກພື້ນ ແລະ ລະດັບສາກົນ.

5.3 ອີງຕາມກົດໝາຍຂອງຊາດ, ລັດຄວນຮັບປະກັນວ່າ ນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງ ສຳລັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຮັບຮູ້ ແລະ ເຄົາລົບສິດຄອບຄອງນຳໃຊ້ທີ່ຊອບທຳ ລວມທັງສິດຄອບຄອງນຳໃຊ້ຕາມປະເພນີທີ່ຊອບທຳ ທີ່ປັດຈຸບັນຍັງບໍ່ໄດ້ຮັບການປົກປ້ອງໂດຍກົດໝາຍ; ແລະ ຄວນເອື້ອອຳນວຍ, ສົ່ງເສີມ ແລະ ປົກປ້ອງ ການປະຕິບັດສິດຄອບຄອງນຳໃຊ້. ບັນດາກອບວຽກດັ່ງກ່າວ ຄວນສະທ້ອນໃຫ້ເຫັ

ນຄວາມສຳຄັນທາງດ້ານສັງຄົມ, ວັດທະນະທຳ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ລັດຄວນສະໜອງກອບວຽກ ທີ່ບໍ່ມີການຈຳແນກ ແລະ ທີ່ສົ່ງເສີມຄວາມເປັນທຳທາງສັງຄົມ ແລະ ຄວາມສະເໝີພາບຍິງຊາຍ. ກອບດັ່ງກ່າວ ຄວນສະທ້ອນເຖິງສາຍພົວພັນທີ່ເຊື່ອມໂຍງກັນ ລະຫວ່າງ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ແລະ ການນຳໃຊ້ສິ່ງເຫຼົ່ານັ້ນ, ແລະ ສ້າງວິທີການແບບຄົບຊຸດສຳລັບການບໍລິຫານຊັບພະຍາກອນເຫຼົ່ານັ້ນ.

5.4 ລັດຄວນພິຈາລະນາເຖິງອຸປະສັກສະເພາະຕ່າງໆ ທີ່ແມ່ຍິງ ແລະ ເດັກເພດຍິງປະເຊີນ ກ່ຽວກັບການຄອບຄອງນຳໃຊ້ ກໍຄືສິດຄອບຄອງນຳໃຊ້ທີ່ກ່ຽວພັນກັນ, ແລະ ຄວນນຳໃຊ້ມາດຕະການເພື່ອຮັບປະກັນວ່າກອບນິຕິກຳ ແລະ ນະໂຍບາຍ ສາມາດໃຫ້ການປົກປ້ອງຢ່າງພຽງພໍ ຕໍ່ແມ່ຍິງ ແລະ ຮັບປະກັນວ່າບັນດາກົດໝາຍທີ່ຮັບຮູ້ສິດຄອບຄອງນຳໃຊ້ຂອງແມ່ຍິງ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຖືກບັງຄັບໃຊ້. ລັດຄວນຮັບປະກັນໃຫ້ແມ່ຍິງສາມາດເຂົ້າຮ່ວມຢ່າງຖືກຕ້ອງຕາມກົດໝາຍໃນການເຮັດສັນຍາ ທີ່ກ່ຽວຂ້ອງກັບສິດຄອບຄອງນຳໃຊ້ ບົນພື້ນຖານຄວາມສະເໝີພາບກັບເພດຊາຍ ແລະ ຄວນພະຍາຍາມ ເພື່ອສະໜອງການບໍລິການທາງດ້ານກົດໝາຍ ແລະ ການຊ່ວຍເຫຼືອອື່ນໆເພື່ອເຮັດໃຫ້ແມ່ຍິງສາມາດປ້ອງກັນສິດຜົນປະໂຫຍດໃນການຄອບຄອງນຳໃຊ້ຂອງເຂົາເຈົ້າ.

5.5 ລັດຄວນພັດທະນາ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຜ່ານຂະບວນການແບບມີສ່ວນຮ່ວມ ໂດຍໃຫ້ທຸກພາກສ່ວນກ່ຽວຂ້ອງເຂົ້າຮ່ວມ, ເພື່ອຮັບປະກັນໃຫ້ທັງຜູ້ຊາຍ ແລະ ແມ່ຍິງ ຮ່ວມຕັ້ງແຕ່ຕົ້ນ. ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການ ຄວນພິຈາລະນາເຖິງຄວາມສາມາດໃນການຈັດຕັ້ງປະຕິບັດ, ຊຶ່ງຄວນລວມເອົາວິທີທາງທີ່ແນໃສ່ບົດບາດຍິງຊາຍ, ສະແດງອອກຢ່າງຈະແຈ້ງໃນພາສາທີ່ສອດຄ່ອງ, ແລະ ມີການໂຄສະນາເຜີຍແຜ່ຢ່າງກ້ວາງຂວາງ.

5.6 ລັດຄວນມອບຄວາມຮັບຜິດຊອບໃຫ້ຂັ້ນຕ່າງໆ ຂອງລັດຖະບານ ທີ່ສາມາດໃຫ້ບໍລິການແກ່ປະຊາຊົນຢ່າງມີປະສິດຕິຜົນ. ລັດຄວນກຳນົດຢ່າງຈະແຈ້ງ ບົດບາດ ແລະ ຄວາມຮັບຜິດຊອບຂອງບັນດາຂະແໜງການທີ່ເຮັດວຽກກ່ຽວກັບ ການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ລັດຄວນຮັບປະກັນໃຫ້ມີການປະສານສົມທົບ ລະຫວ່າງ ອົງການຈັດຕັ້ງປະຕິບັດ, ກໍ່ຄືການປະສານສົມທົບກັບລັດຖະບານຂັ້ນທ້ອງຖິ່ນ, ແລະ ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ທີ່ດິນຕາມປະເພນີ.

5.7 ລັດຄວນກຳນົດ ແລະ ໂຄສະນາເຜີຍແຜ່ ບັນດາກາລະໂອກາດ ສຳລັບພາກປະຊາສັງຄົມ, ພາກເອກະຊົນ ແລະ ຄະນະນັກວິຊາການ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງ ຕາມຄວາມເໝາະສົມ.

5.8 ລັດ ແລະ ພາກສ່ວນອື່ນໆ ຄວນກວດຄືນ ແລະ ຕິດຕາມກວດກາ ນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງຢ່າງເປັນປົກກະຕິ ເພື່ອຮັກສາໄວ້ເຊິ່ງປະສິດທິຜົນ. ບັນດາອົງການຈັດຕັ້ງປະຕິບັດ ແລະ ອົງການຕຸລາການ ຄວນໃຫ້ພາກປະຊາສັງຄົມ, ຕົວແທນຜູ້ນຳໃຊ້ ແລະ ສະທາລະນະຊົນທົ່ວໄປໄດ້ມີສ່ວນຮ່ວມ ເພື່ອປັບປຸງການບໍລິການ ແລະ ພະຍາຍາມເພື່ອປ້ອງກັນການສໍ້ລາດບັງຫຼວງ ໂດຍຜ່ານຂະບວນການ ແລະ ການຕັດສິນບັນຫາທີ່ໂປ່ງໃສ. ຂໍ້ມູນຂ່າວສານ ກ່ຽວກັບການປ່ຽນແປງ ແລະ ຜົນກະທົບທີ່ຄາດໄວ້ລ່ວງໜ້າ ຄວນຖືກລະບຸໄວ້ຢ່າງຈະແຈ້ງ ແລະ ໄດ້ຮັບການໂຄສະນາເຜີຍແຜ່ຢ່າງກ້ວາງຂວາງ ໃນພາສາທີ່ສອດຄ່ອງ.

5.9 ລັດຄວນຮັບຮູ້ວ່າ ບັນດານະໂຍບາຍ ແລະ ກົດໝາຍ ກ່ຽວກັບສິດຄອບຄອງນຳໃຊ້ ແມ່ນດຳເນີນການຢູ່ໃນ ສະພາບເງື່ອນໄຂ ທາງດ້ານການເມືອງ, ກົດໝາຍ, ສັງຄົມ, ວັດທະນະທຳ, ສາດສະໜາ, ເສດຖະກິດ ແລະ ສິ່ງແວດລ້ອມ ທີ່ກວ້າງຂວາງ. ຖ້າຫາກສະພາບເງື່ອນໄຂທີ່ກ້ວາງຂວາງເຫຼົ່ານັ້ນ ມີການປ່ຽນແປງ, ແລະ ຖ້າຫາກມີຄວາມຈຳເປັນປະຕິຮູບການຄອບຄອງ

2

ນຳໃຊ້, ລັດຄວນຊອກຫາຊ່ອງທາງເພື່ອສ້າງຄວາມເຫັນເປັນເອກະພາບລະດັບຊາດ ກ່ຽວກັບການປະຕິຮູບທີ່ສະເໜີ.

## 6. ການໃຫ້ບໍລິການ

6.1 ຕາມຂອບເຂດທີ່ຊັບພະຍາກອນອະນຸຍາດໃຫ້, ລັດຄວນຮັບປະກັນວ່າ ບັນດາອົງການຈັດຕັ້ງປະຕິບັດ ແລະ ອົງການຕຸລາການ ມີຊັບພະຍາກອນມະນຸດ, ຄວາມອາດສາມາດທາງດ້ານວັດຖຸ, ການເງິນ ແລະ ຄວາມສາມາດໃນຮູບແບບອື່ນໆ ເພື່ອຈັດຕັ້ງປະຕິບັດ ນະໂຍບາຍ ແລະ ກົດໝາຍຢ່າງທັນເວລາ, ມີປະສິດທິຜົນ ແລະ ແນໃສ່ບົດບາດຍິງຊາຍ. ພະນັກງານ ຢູ່ໃນການຈັດຕັ້ງທຸກຂັ້ນຄວນໄດ້ຮັບການຝຶກອົບຮົມຢ່າງຕໍ່ເນື່ອງ, ແລະ ຖືກບັນຈຸເຂົ້າໃນວຽກງານໂດຍການພິຈາລະນາເພື່ອຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມສະເໝີພາບທາງສັງຄົມ.

6.2 ລັດຄວນຮັບປະກັນວ່າ ການໃຫ້ບໍລິການທີ່ກ່ຽວພັນກັບການຄອບຄອງນຳໃຊ້ ແລະ ການບໍລິຫານສິ່ງດັ່ງກ່າວ ແມ່ນສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ ຢູ່ໃນພາກພື້ນ ແລະ ສາກົນ.

6.3 ລັດຄວນສະໜອງການບໍລິການທີ່ທັນການ, ສາມາດເຂົ້າເຖິງໄດ້ ແລະ ບໍ່ມີການຈຳແນກ ເພື່ອປົກປ້ອງສິດຄອບຄອງນຳໃຊ້, ເພື່ອສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການຊົມໃຊ້ບັນດາສິດເຫຼົ່ານັ້ນ, ແລະ ເພື່ອແກ້ໄຂຂໍ້ຂັດແຍ່ງ. ລັດຄວນກຳຈັດເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການທີ່ບໍ່ຈຳເປັນ ແລະ ພະຍາຍາມເພື່ອຜ່ານຜ່າອຸປະສັກທີ່ກ່ຽວພັນກັບສິດຄອບຄອງນຳໃຊ້. ລັດຄວນກວດຄືນການໃຫ້ບໍລິການຂອງບັນດາອົງການຈັດຕັ້ງປະຕິບັດ ແລະ ອົງການຕຸລາການ, ແລະ ສະເໜີການປັບປຸງ ໃນບ່ອນທີ່ຈຳເປັນ.

6.4 ລັດຄວນຮັບປະກັນວ່າອົງການຈັດຕັ້ງປະຕິບັດແລະອົງການຕຸລາການຮັບໃຊ້ປະຊາຊົນທັງປະເທດ, ໂດຍການໃຫ້ບໍລິການແກ່ທຸກຄົນ, ລວມທັງຜູ້ທີ່ອາໃສຢູ່ເຂດຫ່າງໄກສອກຫຼີກ. ການສະໜອງການບໍລິການ ຕ້ອງດຳເນີນການຢ່າງວ່ອງໄວ ແລະ ມີປະສິດທິພາບ ໂດຍນຳໃຊ້ເຕັກໂນໂລຢີທີ່ແທດເໝາະກັບທ້ອງຖິ່ນ ເພື່ອເພີ່ມປະສິດທິພາບ ແລະ ຄວາມສາມາດເຂົ້າເຖິງ. ຄວນສ້າງຂໍ້ແນະນຳພາຍໃນ ເພື່ອໃຫ້ພະນັກງານສາມາດຈັດຕັ້ງປະຕິບັດນະໂຍບາຍ ແລະ ກົດໝາຍໃນຮູບແບບທີ່ໜ້າເຊື່ອຖືແລະ ສະໝ່ຳສະເໝີ. ຂັ້ນຕອນຄວນຖືກຄັດຈ້ອນໃຫ້ງ່າຍດາຍ ໂດຍບໍ່ເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງການຄອບຄອງນຳໃຊ້ ຫຼື ຕໍ່ຄຸນນະພາບ ຂອງຄວາມຍຸຕິທຳ.ບັນດາອຸປະກອນເພື່ອອະທິບາຍຄວນໄດ້ຮັບການໂຄສະນາເຜີຍແຜ່ຢ່າງກ້ວາງຂວາງໃນພາສາທີ່ສອດຄ່ອງ ແລະ ຄວນແຈ້ງໃຫ້ຜູ້ນຳໃຊ້ຮັບຊາບ ກ່ຽວກັບ ສິດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ.

6.5 ລັດຄວນສ້າງນະໂຍບາຍ ແລະ ກົດໝາຍ ເພື່ອສົ່ງເສີມການແບ່ງປັນ ຂໍ້ມູນແຜນຜັງ ແລະ ຂໍ້ມູນຂ່າວສານອື່ນໆ ກ່ຽວກັບສິດຄອບຄອງນຳໃຊ້ ເພື່ອການນຳໃຊ້ຢ່າງມີປະສິດທິຜົນ ໂດຍລັດ ແລະ ອົງການຈັດຕັ້ງປະຕິບັດ, ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ, ພາກປະຊາສັງຄົມ, ພາກເອກະຊົນ, ຄະນະນັກວິຊາການ ແລະ ມະຫາຊົນທົ່ວໄປ. ມາດຕະຖານແຫ່ງຊາດຄວນໄດ້ຮັບການພັດທະນາເພື່ອການນຳໃຊ້ຂໍ້ມູນຂ່າວສານຮ່ວມກັນ, ໂດຍພິຈາລະນາເອົາມາດຕະຖານ ລະດັບພາກພື້ນ ແລະ ລະດັບສາກົນ.

6.6 ລັດ ແລະ ພາກສ່ວນອື່ນໆ ຄວນພິຈາລະນາກ່ຽວກັບມາດຕະການເພີ່ມເຕີມ ເພື່ອສະໜັບສະໜູນກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ ທີ່ບໍ່ສາມາດເຂົ້າເຖິງການບໍລິການທາງດ້ານບໍລິຫານ ແລະ ດ້ານຕຸລາການ. ມາດຕະການເຫຼົ່ານີ້ ຄວນປະກອບດ້ວຍ ການສະໜັບສະໜູນທາງດ້ານກົດໝາຍ ເຊັ່ນ: ຄວາມຊ່ວຍເຫຼືອດ້ານກົດໝາຍທີ່ມີຄ່າໃຊ້ຈ່າຍພໍຮັບໄດ້, ແລະ ອາດລວມເຖິງການສະໜອງ

ການບໍລິການ ໂດຍຜູ້ຊ່ວຍດ້ານກົດໝາຍ ຫຼື ຜູ້ຊ່ວຍນັກສຳຫຼວດ ແລະ ການໃຫ້ບໍລິການແບບເຄື່ອນທີ່ ສຳລັບຊຸມຊົນທີ່ຢູ່ເຂດຫ່າງໄກ ແລະ ຊາວພື້ນເມືອງທີ່ເຄື່ອນຍ້າຍຖິ່ນຖານ.

6.7 ລັດຄວນຊຸກຍູ້ອົງການຈັດຕັ້ງປະຕິບັດ ແລະ ອົງການຕຸລາການ ໃຫ້ສົ່ງເສີມວັດທະນະທຳ ທີ່ຖືເອົາການບໍລິການ ແລະ ການປະພຶດຢ່າງມີຈັນຍາບັນ. ອົງການຈັດຕັ້ງປະຕິບັດ ແລະ ອົງການຕຸລາການ ຄວນຊອກຫາຄວາມຄິດຄວາມເຫັນຕອບກັບຢ່າງເປັນປົກກະຕິ, ເຊັ່ນ ໂດຍຜ່ານການສຳຫຼວດຂໍ້ມູນ ແລະ ກຸ່ມຄົ້ນຄວ້າຈຸດສຸມ, ເພື່ອຍົກສູງມາດຕະຖານ ແລະ ປັບປຸງການໃຫ້ບໍລິການ, ເພື່ອໃຫ້ບັນລຸຕາມຄາດໝາຍ ແລະ ເພື່ອຕອບສະໜອງໄດ້ຕາມຄວາມຈຳເປັນອັນໃໝ່. ລັດຄວນໂຄສະນາເຜີຍແຜ່ ມາດຕະຖານການປະຕິບັດ ແລະ ລາຍງານຜົນຮັບຢ່າງເປັນປົກກະຕິ. ບັນດາຜູ້ນຳໃຊ້ ຄວນມີກົນໄກເພື່ອແກ້ໄຂການຮ້ອງທຸກ ບໍ່ວ່າຈະເຮັດພາຍໃນອົງການຈັດຕັ້ງປະຕິບັດ, ເຊັ່ນ ດ້ວຍການທົບທວນໂດຍຜູ້ບໍລິຫານ, ຫຼື ການທົບທວນຈາກພາຍນອກ, ເຊັ່ນ ໂດຍການທົບທວນແບບເອກະລາດ ຫຼື ໂດຍຜ່ານຜູ້ກວດກາຈາກສະພາ.

6.8 ບັນດາສະມາຄົມວິຊາຊີບທີ່ກ່ຽວຂ້ອງກັບການບໍລິການທີ່ຕິດພັນກັບການຄອບຄອງນຳໃຊ້ ຄວນພັດທະນາ, ໂຄສະນາເຜີຍແຜ່ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ພຶດຕິກຳທີ່ມີຈັນຍາບັນໃນລະດັບສູງ. ພາກສ່ວນລັດ ແລະ ພາກເອກະຊົນ ຄວນປະຕິບັດຕາມມາດຕະຖານທາງດ້ານຈັນຍາບັນທີ່ກ່ຽວຂ້ອງ ແລະ ຄວນຖືກລົງໂທດໃນກໍລະນີທີ່ມີການລະເມີດ. ຢູ່ບ່ອນທີ່ຍັງບໍ່ມີສະມາຄົມລັກສະນະດັ່ງກ່າວ ລັດຄວນຮັບປະກັນໃຫ້ມີສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງຂຶ້ນ.

6.9 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງທີ່ພົວພັນກັບສິດຄອບຄອງນຳໃຊ້. ລັດຄວນດຳເນີນການດັ່ງກ່າວ ໂດຍສະເພາະ ຜ່ານການປຶກສາຫາລື ແລະ ການມີສ່ວນຮ່ວມ, ຫຼັກນິຕິທຳ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ. ລັດຄວນວາງ ແລະ ບັງຄັບປະຕິບັດ ມາດຕະການຕ້ານການສໍ້ລາດບັງຫຼວງ ລວມທັງ ດ້ວຍການນຳໃຊ້ແຊັກ ແລະ ໃບດຸ່ນດ່ຽງ, ຈຳກັດການໃຊ້ອຳນາດໃນທາງທີ່ຜິດຕາມລຳພັງໃຈ, ຈັດການກັບຜົນປະໂຫຍດທັບຊ້ອນ ແລະ ອອກກົດລະບຽບ ແລະ ລະບຽບການທີ່ຈະແຈ້ງ. ລັດຄວນຈັດໃຫ້ມີການທົບທວນທາງດ້ານບໍລິຫານ ແລະ/ຫຼື ທາງດ້ານຕຸລາການ ຕໍ່ບັນດາຂໍ້ຕົກລົງຂອງອົງການຈັດຕັ້ງປະຕິບັດ. ພະນັກງານທີ່ເຮັດວຽກກ່ຽວກັບການບໍລິຫານການຄອບຄອງນຳໃຊ້ ຄວນເປັນຜູ້ຮັບຜິດຊອບຕໍ່ການກະທຳຂອງຕົນ. ເຂົາເຈົ້າຄວນໄດ້ຮັບການສະໜອງເຄື່ອງມືເພື່ອປະຕິບັດໜ້າທີ່ຂອງຕົນຢ່າງມີປະສິດທິຜົນ. ເຂົາເຈົ້າຄວນໄດ້ຮັບການປົກປ້ອງ ຈາກການຖືກແຊກແຊງ ໃນໜ້າທີ່ຂອງຕົນ ແລະ ຈາກການແກ້ແຄ້ນ ຍ້ອນການລາຍງານການກະທຳທີ່ສໍ້ລາດບັງຫຼວງ.

ພາກ 3

3

# ການຮັບຮູ້ທາງກົດໝາຍ ແລະ ການຈັດສັນສິດ ແລະ ໜ້າທີ່ ໃນການຄອບຄອງນຳໃຊ້

ພາກນີ້ ເວົ້າເຖິງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໃນແງ່ການຮັບຮູ້ຕາມກົດໝາຍ ຕໍ່ສິດຄອບຄອງນຳໃຊ້ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆທີ່ມີລະບົບການຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ກໍ່ຄື ສິດຄອບຄອງນຳໃຊ້ທີ່ບໍ່ເປັນທາງການ; ແລະ ການຈັດສັນສິດຄອບຄອງນຳໃຊ້ ໃນເບື້ອງຕົ້ນ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ພາກລັດເປັນເຈົ້າຂອງ ຫຼື ຢູ່ໃນການຄວບຄຸມຂອງພາກລັດ.

## 7. ມາດຕະການປ້ອງກັນ

7.1 ເມື່ອລັດຮັບຮູ້ ຫຼື ຈັດສັນສິດຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ອີງຕາມກົດໝາຍຂອງຊາດ ເຂົາເຈົ້າຄວນສ້າງລະບົບການປ້ອງກັນ ເພື່ອຫຼີກເວັ້ນຈາກການລະເມີດ ຫຼື ທຳລາຍສິດຄອບຄອງນຳໃຊ້ຂອງຄົນອື່ນ, ລວມທັງສິດຄອບຄອງນຳໃຊ້ ທີ່ຊອບທຳ ທີ່ບໍ່ໄດ້ຮັບການປົກປ້ອງໂດຍກົດໝາຍໃນປັດຈຸບັນ. ໂດຍສະເພາະ ມາດຕະການປ້ອງກັນຄວນປົກປ້ອງແມ່ຍິງ ແລະ ກຸ່ມທີ່ມີຄວາມສ່ຽງ ທີ່ຖືສິດຄອບຄອງນຳໃຊ້ເພີ່ມເຕີມ ເຊັ່ນ ສິດໃນການເກັບຜົນ.

7.2 ລັດຄວນຮັບປະກັນວ່າທຸກການດຳເນີນການກ່ຽວກັບການຮັບຮູ້ທາງກົດໝາຍ ແລະ ການຈັດສັນສິດ ແລະ ໜ້າທີ່ຂອງການຄອບຄອງນຳໃຊ້ ສອດຄ່ອງກັບພັນທະທີ່ຕົນມີຢູ່ພາຍໃຕ້ກົດໝາຍຂອງຊາດແລະກົດໝາຍສາກົນພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາ ທີ່ມີຜົນນຳໃຊ້ ຢູ່ໃນພາກພື້ນ ແລະ ສາກົນ.

7.3 ບ່ອນທີ່ລັດ ມີເຈດຕະນາຈະຮັບຮູ້ ຫຼື ຈັດສັນສິດຄອບຄອງນຳໃຊ້, ກ່ອນອື່ນໝົດ ລັດຄວນລະບຸສິດຄອບຄອງນຳໃຊ້ທີ່ມີຢູ່ທັງໝົດ ແລະ ຜູ້ຖືສິດນັ້ນ, ບໍ່ວ່າຈະຖືກບັນທຶກໄວ້ຫຼືບໍ່ກໍ່ຕາມ. ຊາວພື້ນເມືອງ ແລະ ຊຸມຊົນອື່ນ ທີ່ມີລະບົບການຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ຜູ້ຖືຄອງຂະໜາດນ້ອຍ ແລະ ທຸກຄົນ ທີ່ອາດໄດ້ຮັບຜົນກະທົບ ຄວນໄດ້ເຂົ້າຮ່ວມໃນຂະບວນການປຶກສາຫາລື, ໂດຍສອດຄ່ອງກັບ ວັກ 3ຂ.6 ແລະ 9.9. ລັດຄວນ ສະໜອງການເຂົ້າເຖິງຄວາມຍຸຕິທຳ, ໂດຍສອດຄ່ອງກັບ ວັກ 4.9 ຖ້າປະຊາຊົນເຊື່ອວ່າສິດຄອບຄອງນຳໃຊ້ຂອງເຂົາເຈົ້າບໍ່ໄດ້ຖືກຮັບຮູ້.

7.4 ລັດຄວນຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍ ໄດ້ຊົມໃຊ້ສິດແບບດຽວກັນ ຢູ່ໃນບັນດາສິດຄອບຄອງນຳໃຊ້ທີ່ຖືກຮັບຮູ້ໃໝ່ນີ້,ແລະຮັບປະກັນວ່າສິດເຫຼົ່ານັ້ນໄດ້ສະແດງໄວ້ຢູ່ໃນເອກະສານການບັນທຶກ. ໃນບ່ອນທີ່ເປັນໄປໄດ້, ການຮັບຮູ້ທາງກົດໝາຍ ແລະ ການຈັດສັນສິດຄອບຄອງນຳໃຊ້

ຂອງ ບຸກຄົນ, ຄອບຄົວ ແລະ ຊຸມຊົນ ຄວນເຮັດເປັນລະບົບ, ໂດຍດຳເນີນໄປໃນແຕ່ລະເຂດ ຕາມລະດັບບຸລິມະສິດຂອງຊາດ, ເພື່ອເຮັດໃຫ້ກຸ່ມຄົນທຸກຍາກ ແລະ ມີຄວາມສ່ຽງໃນສັງຄົມ ມີໂອກາດຢ່າງເຕັມສ່ວນ ໃນການໄດ້ຮັບການຮັບຮູ້ຕາມກົດໝາຍຕໍ່ສິດຄອບຄອງນຳໃຊ້ຂອງ ເຂົາເຈົ້າ. ຄວນໃຫ້ການສະໜັບສະໜູນທາງດ້ານກົດໝາຍ, ໂດຍສະເພາະຕໍ່ຜູ້ທີ່ທຸກຍາກ ແລະ ມີຄວາມສ່ຽງ. ວິທີທາງທີ່ແທດເໝາະກັບ ທ້ອງຖິ່ນຄວນຖືກນຳມາໃຊ້ເພື່ອເພີ່ມຄວາມໂປ່ງ ໃສ ໃນເວລາທີ່ເລີ່ມຕົ້ນສ້າງການບັນທຶກກ່ຽວກັບສິດຄອບຄອງນຳໃຊ້, ລວມທັງການສ້າງແຜນ ທີ່ຂອງສິດຄອບຄອງນຳໃຊ້.

7.5 ລັດຄວນຮັບປະກັນໃຫ້ຜູ້ທີ່ມີສິດຄອບຄອງນຳໃຊ້ທີ່ຖືກຮັບຮູ້ ຫຼື ຜູ້ທີ່ໄດ້ຮັບການຈັດສັນສິດຄອບ ຄອງນຳໃຊ້ໃຫ້ໃໝ່ ໄດ້ຮູ້ຢ່າງເຕັມສ່ວນກ່ຽວກັບສິດ ແລະ ໜ້າທີ່ຂອງຕົນ. ຖ້າຫາກຈຳເປັນ, ລັດ ຄວນໃຫ້ການສະໜັບສະໜູນແກ່ປະຊາຊົນເຫຼົ່ານັ້ນ ເພື່ອໃຫ້ເຂົາເຈົ້າສາມາດຊົມໃຊ້ສິດຄອບ ຄອງນຳໃຊ້ ແລະ ໄດ້ປະຕິບັດໜ້າທີ່ຂອງຕົນ.

7.6 ຢູ່ບ່ອນທີ່ບໍ່ສາມາດໃຫ້ການຮັບຮູ້ທາງດ້ານກົດໝາຍຕໍ່ສິດຄອບຄອງນຳໃຊ້ໄດ້, ລັດຄວນປ້ອງ ກັນການບັງຄັບໃຫ້ອອກຈາກພື້ນທີ່ ທີ່ບໍ່ສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນ ພາຍໃຕ້ກົດໝາຍ ຂອງຊາດ ແລະ ກົດໝາຍສາກົນ, ແລະ ອີງຕາມຫຼັກການຂອງບົດແນະນຳສະບັບນີ້.

3

## 8. ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ສາທາລະນະ

8.1 ບ່ອນທີ່ລັດເປັນເຈົ້າຂອງຫຼືຄວບຄຸມທີ່ດິນ,ພື້ນທີ່ປະມົງແລະປ່າໄມ້,ລັດຄວນກຳນົດການນຳໃຊ້ ແລະ ການຄວບຄຸມຊັບພະຍາກອນເຫຼົ່ານີ້ ໂດຍອີງຕາມຈຸດປະສົງທີ່ກ້ວາງຂວາງ ທາງດ້ານ ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ. ລັດຄວນຮັບປະກັນວ່າທຸກການກະທຳແມ່ນມີຄວາມ ສອດຄ່ອງກັບພັນທະທີ່ຕົນມີຢູ່ ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳ ນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ ຢູ່ໃນພາກພື້ນ ແລະ ສາກົນ.

8.2 ບ່ອນທີ່ລັດ ເປັນເຈົ້າຂອງ ຫຼື ຄວບຄຸມການນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ສິດຄອບ ຄອງທີ່ຊອບທຳຂອງບຸກຄົນແລະຊຸມຊົນ,ລວມທັງລະບົບການຄອບຄອງຕາມປະເພນີຢູ່ບ່ອນທີ່ ເໝາະສົມ, ຄວນຖືກຮັບຮູ້, ໄດ້ຮັບການເຄົາລົບ ແລະ ປົກປ້ອງ, ໂດຍສອດຄ່ອງກັບພັນທະທີ່ມີຢູ່ ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບ ສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ ຢູ່ໃນພາກພື້ນ ແລະ ສາກົນ. ຕໍ່ບັນຫານີ້, ປະເພດຂອງສິດຄອບຄອງນຳໃຊ້ທີ່ຊອບທຳ ຄວນຖືກກຳນົດຂຶ້ນ ແລະ ຖືກໂຄສະນາເຜີຍແຜ່ ໂດຍຜ່ານຂະບວນການທີ່ມີຄວາມໂປ່ງໃສ, ແລະ ອີງຕາມກົດໝາຍຂອງຊາດ.

8.3 ເມື່ອເຫັນວ່າມີ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ລັດເປັນເຈົ້າຂອງ ຖືກນຳໃຊ້ ແລະ ຄຸ້ມຄອງແບບລວມໝູ່ (ຢູ່ບາງປະເທດເອີ້ນວ່າດິນລວມ), ບ່ອນທີ່ເປັນໄປໄດ້, ລັດຄວນຮັບຮູ້ແລະ ປົກປ້ອງ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ລັດເປັນເຈົ້າຂອງດັ່ງກ່າວ ພ້ອມທັງລະບົບທີ່ກ່ຽວ ຂ້ອງກັບການນຳໃຊ້ ແລະ ຄຸ້ມຄອງແບບລວມໝູ່, ລວມທັງ ຢູ່ໃນຂັ້ນຕອນການຈັດສັນຂອງລັດ.

8.4 ລັດຄວນພະຍາຍາມເພື່ອສ້າງ ຂໍ້ມູນຂ່າວສານທີ່ທັນສະພາບ ກ່ຽວກັບການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ລັດເປັນເຈົ້າຂອງ ຫຼື ຄວບຄຸມ ດ້ວຍການສ້າງ ແລະ ປັບປຸງ ບັນຊີຂໍ້ມູນທີ່ສາມາດເຂົ້າເຖິງ ໄດ້. ບັນຊີຂໍ້ມູນດັ່ງກ່າວ ຄວນບັນທຶກ ບັນດາຂະແໜງການທີ່ຮັບ ຜິດຊອບໃນການບໍລິຫານ ແລະ ບັນທຶກທຸກໆສິດຄອບຄອງນຳໃຊ້ທີ່ຊອບທຳ ທີ່ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ຖືຄອງດ້ວຍລະບົບຄອບຄອງນຳໃຊ້ຕາມປະເພນີ ແລະ ຂອງພາກເອກະຊົນ. ບ່ອນທີ່ເປັນໄປໄດ້, ລັດຄວນຮັບປະກັນວ່າສິດຄອບຄອງນຳໃຊ້ທີ່ເປັນຂອງລັດ ໄດ້ຖືກບັນທຶກ

ໄວ້ລວມກັນກັບສິດຄອບຄອງນຳໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ດ້ວຍລະບົບການຄອບຄອງນຳໃຊ້ຕາມປະເພນີ ແລະ ຂອງພາກເອກະຊົນ ໃນລະບົບບັນທຶກອັນດຽວກັນ, ຫຼື ມີການເຊື່ອມໂຍງເຂົ້າກັນໃນກອບລວມອັນດຽວກັນ.

8.5 ລັດຄວນກຳນົດວ່າ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໃດແດ່ ທີ່ຕົນເປັນເຈົ້າຂອງ ຫຼື ຄວບຄຸມ ຈະຖືກສະຫງວນເອົາໄວ້ ແລະ ຖືກນຳໃຊ້ໂດຍພາກລັດ, ແລະ ອັນໃດຈະຖືກຈັດສັນໃຫ້ຄົນອື່ນນຳໃຊ້ ແລະ ພາຍໃຕ້ເງື່ອນໄຂອັນໃດ.

8.6 ລັດຄວນພັດທະນາ ແລະ ໂຄສະນາເຜີຍແຜ່ ບັນດານະໂຍບາຍທີ່ກວມເອົາການນຳໃຊ້ ແລະ ຄວບຄຸມທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ຖືກສະຫງວນໄວ້ໂດຍພາກລັດ ແລະ ຄວນພະຍາຍາມສ້າງນະໂຍບາຍ ທີ່ສົ່ງເສີມການແຈກຢາຍຜົນປະໂຫຍດຢ່າງເປັນທຳ ຈາກທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ລັດເປັນເຈົ້າຂອງ. ນະໂຍບາຍຄວນພິຈາລະນາເຖິງສິດຄອບຄອງນຳໃຊ້ຂອງຄົນອື່ນ ແລະ ທຸກຄົນທີ່ອາດໄດ້ຮັບຜົນກະທົບຄວນໄດ້ເຂົ້າຮ່ວມໃນຂະບວນການປຶກສາຫາລືໂດຍສອດຄ່ອງກັບ ຫຼັກການຂອງການປຶກສາຫາລື ແລະ ການເຂົ້າຮ່ວມ ຂອງບົດແນະນຳສະບັບນີ້. ການບໍລິຫານ ແລະ ການປ່ຽນໂອນ ທີ່ກ່ຽວຂ້ອງກັບຊັບພະຍາກອນເຫຼົ່ານີ້ ຄວນໄດ້ຮັບການດຳເນີນການຢ່າງມີປະສິດທິຜົນ, ໂປ່ງໃສ ແລະ ມີຄວາມຮັບຜິດຊອບ ໃນການປະຕິບັດນະໂຍບາຍຂອງລັດໃຫ້ປະກົດຜົນເປັນຈິງ.

8.7 ລັດຄວນພັດທະນາ ແລະ ໂຄສະນາເຜີຍແຜ່ ນະໂຍບາຍທີ່ກວມເອົາການຈັດສັນສິດຄອບຄອງນຳໃຊ້ທີ່ດິນ ໃຫ້ແກ່ພາກສ່ວນອື່ນ ແລະ ຄວນແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ຕາມຄວາມເໝາະສົມ. ນະໂຍບາຍ ໃນການຈັດສັນສິດຄອບຄອງນຳໃຊ້ຄວນສອດຄ່ອງກັບຈຸດປະສົງທີ່ກວ້າງຂວາງ ທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ. ຊຸມຊົນທ້ອງຖິ່ນທີ່ນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຕາມປະເພນີ ຄວນໄດ້ຮັບການພິຈາລະນາຢ່າງເໝາະສົມ ໃນການຈັດສັນສິດຄອບຄອງນຳໃຊ້ຄືນໃໝ່. ນະໂຍບາຍ ຄວນພິຈາລະນາເຖິງສິດຄອບຄອງນຳໃຊ້ຂອງພາກສ່ວນອື່ນ ແລະ ທຸກຄົນທີ່ອາດໄດ້ຮັບຜົນກະທົບຄວນໄດ້ເຂົ້າຮ່ວມໃນຂະບວນການປຶກສາຫາລື, ການເຂົ້າຮ່ວມ ແລະ ຂະບວນການຕັດສິນໃຈ. ນະໂຍບາຍດັ່ງກ່າວ ຄວນຮັບປະກັນວ່າການຈັດສັນສິດຄອບຄອງນຳໃຊ້ຈະບໍ່ເປັນໄພຂົ່ມຂູ່ຕໍ່ການດຳລົງຊີວິດຂອງປະຊາຊົນດ້ວຍການຕັດການເຂົ້າເຖິງຢ່າງຊອບທຳຂອງເຂົາເຈົ້າຕໍ່ຊັບພະຍາກອນເຫຼົ່ານີ້.

8.8 ລັດມີອຳນາດ ໃນການຈັດສັນສິດຄອບຄອງນຳໃຊ້ ໃນຫຼາກຫຼາຍຮູບແບບ, ນັບແຕ່ ການນຳໃຊ້ຢ່າງຈຳກັດ ໄປເຖິງ ກຳມະສິດຢ່າງເຕັມສ່ວນ. ນະໂຍບາຍຄວນຮັບຮູ້ຂອບເຂດຂອງສິດຄອບຄອງນຳໃຊ້ ແລະ ຜູ້ໄດ້ຮັບສິດນັ້ນ. ນະໂຍບາຍ ຄວນກຳນົດເອົາວິທີການຈັດສັນສິດ, ເຊັ່ນ ການຈັດສັນທີ່ອີງໃສ່ ປະຫວັດການນຳໃຊ້ ຫຼື ວິທີທາງອື່ນ. ໃນກໍລະນີຈຳເປັນ, ຜູ້ທີ່ໄດ້ຮັບການຈັດສັນສິດຄອບນຳໃຊ້ ຄວນໄດ້ຮັບການຊ່ວຍເຫຼືອ ເພື່ອໃຫ້ເຂົາເຈົ້າສາມາດຊົມໃຊ້ສິດຂອງຕົນໄດ້. ລັດຄວນຕັດສິນໃຈ ວ່າຈະສະຫງວນຮູບແບບໃດໜຶ່ງ ຂອງການຄວບຄຸມ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ໄດ້ຖືກຈັດສັນໃຫ້ນັ້ນ ຫຼື ບໍ່.

8.9 ລັດຄວນຈັດສັນສິດຄອບຄອງນຳໃຊ້ແລະມອບໝາຍໜ້າທີ່ໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ແບບໂປ່ງໃສ ແລະ ມີສ່ວນຮ່ວມ, ໂດຍນຳໃຊ້ຂັ້ນຕອນທີ່ງ່າຍດາຍທີ່ມີຄວາມຈະແຈ້ງ, ເຂົ້າເຖິງ ແລະ ເຂົ້າໃຈໄດ້ ໂດຍທຸກຄົນ, ໂດຍສະເພາະ ແມ່ນຊາວພື້ນເມືອງ ແລະ ຊຸມຊົນອື່ນໆທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ. ຄວນສະໜອງຂໍ້ມູນຂ່າວສານໃນພາສາທີ່ສອດຄ່ອງໃຫ້ແກ່ທຸກຄົນທີ່ຄວນເຂົ້າຮ່ວມ, ລວມທັງ ຜ່ານຂໍ້ຄວາມທີ່ເນັ້ນເຖິງບົດບາດຍິງຊາຍ. ເມື່ອເປັນໄປໄດ້, ລັດຄວນຮັບປະກັນໃຫ້ມີການຈົດບັນທຶກ ສິດຄອບຄອງນຳໃຊ້ທີ່ໄດ້ຮັບການຈັດສັນໃໝ່ ຮ່ວມກັບສິດຄອບຄອງນຳໃຊ້ອື່ນໆ ຢູ່ໃນລະບົບບັນທຶກຂໍ້ມູນດຽວກັນ, ຫຼື ເຊື່ອມໂຍງເຂົ້າໃນກອບລວມ. ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນສືບຕໍ່ຄວາມພະຍາຍາມເພື່ອຫຼີກເວັ້ນບໍ່ໃຫ້ມີການສໍ້ລາດບັງຫຼວງ ຢູ່ໃນການຈັດສັນສິດຄອບຄອງນຳໃຊ້.

8.10 ຕາມຂອບເຂດທີ່ຊັບພະຍາກອນອະນຸຍາດໃຫ້, ລັດຄວນຮັບປະກັນວ່າ ອົງການທີ່ມີຄວາມອາດສາມາດ ທີ່ຮັບຜິດຊອບກ່ຽວກັບທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຕ້ອງມີ ຄວາມສາມາດທາງດ້ານບຸກຄະລາກອນ, ດ້ານວັດຖຸ, ດ້ານການເງິນ ແລະ ໃນດ້ານອື່ນໆ. ຖ້າຫາກມີການມອບໝາຍຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້, ຜູ້ໄດ້ຮັບມອບໝາຍຄວນໄດ້ຮັບການຝຶກອົບຮົມ ແລະ ການສະໜັບສະໜູນອື່ນໆ ເພື່ອໃຫ້ເຂົາເຈົ້າສາມາດປະຕິບັດໜ້າທີ່ຮັບຜິດຊອບເຫຼົ່ານັ້ນ.

8.11 ລັດຄວນຕິດຕາມຜົນຮັບຂອງແຜນງານການຈັດສັນ, ລວມທັງ ບັນດາຜົນກະທົບຈາກຄວາມແຕກຕ່າງທາງເພດ ຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການລຶບລ້າງຄວາມທຸກຍາກ ກໍ່ຄືຜົນກະທົບຕໍ່ຈຸດປະສົງທາງດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ, ແລະ ນຳສະເໜີມາດຕະການແກ້ໄຂທີ່ຕ້ອງການ.

## 9. ຊາວພື້ນເມືອງ ແລະ ຊຸມຊົນອື່ນ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ

9.1 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນຮັບຮູ້ວ່າ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ມີຄຸນຄ່າທາງດ້ານສັງຄົມ, ດ້ານວັດທະນະທຳ, ດ້ານຈິດໃຈ, ດ້ານເສດຖະກິດ, ດ້ານສິ່ງແວດລ້ອມ ແລະ ດ້ານການເມືອງ ຕໍ່ກັບຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ.

9.2 ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີການຄອບຄອງນຳໃຊ້ຕາມປະເພນີ ທີ່ຄຸ້ມຄອງບໍລິຫານດ້ວຍຕົນເອງ ດ້ານທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຄວນສົ່ງເສີມ ແລະ ສະໜອງສິດທີ່ເປັນທຳ, ໝັ້ນຄົງ ແລະ ຍືນຍົງ ຕໍ່ກັບຊັບພະຍາກອນເຫຼົ່ານັ້ນ, ໂດຍເອົາໃຈໃສ່ເປັນພິເສດຕໍ່ການໃຫ້ໂອກາດເຂົ້າເຖິງທີ່ເປັນທຳສຳລັບແມ່ຍິງ. ການເຂົ້າຮ່ວມຢ່າງມີປະສິດທຜົນຂອງສະມາຊິກທຸກຄົນ, ທັງ ຜູ້ຊາຍ, ແມ່ຍິງ ແລະ ຊາວໜຸ່ມ, ໃນການຕັດສິນໃຈ ກ່ຽວກັບລະບົບການຄອບຄອງນຳໃຊ້ຂອງເຂົາເຈົ້າ, ຄວນໄດ້ຮັບການສົ່ງເສີມໂດຍຜ່ານ ສະຖາບັນທ້ອງຖິ່ນ ຫຼື ສາຖະບັນພື້ນເມືອງຂອງເຂົາເຈົ້າ, ລວມທັງລະບົບການຄອບຄອງນຳໃຊ້ແບບລວມໝູ່. ໃນບ່ອນທີ່ຈຳເປັນ, ຊຸມຊົນຄວນໄດ້ຮັບຄວາມຊ່ວຍເຫຼືອ ເພື່ອເພີ່ມຄວາມອາດສາມາດຂອງສະມາຊິກ ເພື່ອເຂົ້າຮ່ວມຢ່າງເຕັມສ່ວນໃນການຕັດສິນໃຈ ແລະ ການຄຸ້ມຄອງບໍລິຫານ ລະບົບການຄອບຄອງນຳໃຊ້ຂອງເຂົາເຈົ້າ.

9.3 ລັດຄວນຮັບປະກັນວ່າທຸກການກະທຳມີຄວາມສອດຄ່ອງກັບພັນທະທີ່ຕົນມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ໃນພາກພື້ນ ແລະ ສາກົນ. ໃນກໍລະນີຂອງຊາວພື້ນເມືອງ, ລັດຄວນປະຕິບັດຕາມພັນທະທີ່ກ່ຽວຂ້ອງຂອງຕົນ ແລະ ພັນທະສັນຍາແບບສະໝັກໃຈ ເພື່ອປົກປ້ອງ, ສົ່ງເສີມ ແລະ ຈັດຕັ້ງປະຕິບັດສິດທິມະນຸດ, ນັບທັງ ສົນທິສັນຍາວ່າດ້ວຍອົງການຈັດຕັ້ງແຮງງານສາກົນ (ເລກທີ 169) ກ່ຽວກັບ ຄົນພື້ນເມືອງ ແລະ ຊົນເຜົ່າ ໃນປະເທດທີ່ເປັນເອກະລາດ, ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ແລະ ຖະແຫຼງການຂອງສະຫະປະຊາຊາດວ່າດ້ວຍສິດທິຂອງຄົນພື້ນເມືອງ.

9.4 ລັດຄວນໃຫ້ການຮັບຮູ້ ແລະ ການປົກປ້ອງທີ່ເໝາະສົມ ຕໍ່ສິດຄອບຄອງນຳໃຊ້ທີ່ຊອບທຳ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ, ໂດຍສອດຄ່ອງກັບບັນດາພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ ຢູ່ໃນພາກພື້ນ ແລະ ສາກົນ. ການຮັບຮູ້ດັ່ງກ່າວ ຄວນພິຈາລະນາເຖິງ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ຖືກນຳໃຊ້ໂດຍຊຸມຊົນໃດໜຶ່ງສະເພາະ ແລະ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ໃຊ້ຮ່ວມກັນ, ແລະ ເຄົາ

ລົບຕໍ່ຫຼັກການລວມຂອງການຄຸ້ມຄອງບໍລິຫານຢ່າງມີຄວາມຮັບຜິດຊອບ. ຂໍ້ມູນຂ່າວສານກ່ຽວກັບການຮັບຮູ້ດັ່ງກ່າວ ຄວນໄດ້ຮັບການໂຄສະນາເຜີຍແຜ່ ໃນສະຖານທີ່ທີ່ສາມາດເຂົ້າເຖິງໄດ້, ໃນຮູບແບບທີ່ເໝາະສົມທີ່ເຂົ້າໃຈງ່າຍ ແລະ ໃນພາສາທີ່ສອດຄ່ອງ.

9.5 ບ່ອນທີ່ຊາວພື້ນເມືອງ ແລະ ຊຸມຊົນອື່ນທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີມີສິດຄອບຄອງນຳໃຊ້ທີ່ຊອບທຳ ຕໍ່ທີ່ດິນຂອງບັນພະບູລຸດທີ່ເຂົາເຈົ້າອາໃສຢູ່, ລັດຄວນຮັບຮູ້ ແລະ ປົກປ້ອງສິດເຫຼົ່ານີ້. ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ບໍ່ຄວນຖືກບັງຄັບໃຫ້ອອກຈາກທີ່ດິນບັນພະບູລຸດດັ່ງກ່າວ.

9.6 ລັດຄວນພິຈາລະນາ ດັດປັບນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງ, ເພື່ອຮັບຮູ້ລະບົບການຄອບຄອງນຳໃຊ້ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ. ບ່ອນທີ່ການປະຕິຮູບດ້ານລັດຖະທຳມະນູນ ຫຼື ດ້ານນິຕິກຳ ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ສິດທິຂອງແມ່ຍິງ ແລະ ເຮັດໃຫ້ເຂົາເຈົ້າມີຂໍ້ຂັດແຍ່ງກັບປະເພນີປະຕິບັດ, ທຸກພາກສ່ວນຄວນຮ່ວມມືກັນ ເພື່ອບັນຈຸການປ່ຽນແປງດັ່ງກ່າວ ເຂົ້າໃນໃນລະບົບການຄອບຄອງນຳໃຊ້ຕາມປະເພນີ.

9.7 ພື້ນທີ່ປະມົງໃນການຮ່າງນະໂຍບາຍ ແລະ ກົດໝາຍ, ລັດຄວນພິຈາລະນາເຖິງ ຄຸນຄ່າທາງສັງຄົມ, ວັດທະນະທຳ, ຈິດໃຈ, ເສດຖະກິດ ແລະ ສິ່ງແວດລ້ອມ ຂອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ມີຢູ່ພາຍໃຕ້ລະບົບການຄອບຄອງນຳໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ. ໃນເວລາພັດທະນານະໂຍບາຍ ແລະ ກົດໝາຍທີ່ກ່ຽວພັນກັບລະບົບການຄອບຄອງນຳໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ.ຄວນມີການເຂົ້າຮ່ວມຢ່າງເຕັມສ່ວນ ແລະ ມີປະສິດທິຜົນຂອງສະມາຊິກທຸກຄົນ ຫຼື ຜູ້ຕາງໜ້າຂອງບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ, ລວມທັງ ສະມາຊິກຜູ້ທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ

9.8 ລັດຄວນປົກປ້ອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ເພື່ອບໍ່ໃຫ້ບຸກຄົນອື່ນນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຂອງເຂົາເຈົ້າໂດຍບໍ່ໄດ້ຮັບອະນຸຍາດ. ໃນກໍລະນີທີ່ຊຸມຊົນໃດໜຶ່ງບໍ່ຄັດຄ້ານ, ລັດຄວນຊ່ວຍບັນທຶກເອກະສານຢ່າງເປັນທາງການ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບລັກສະນະ ແລະ ທີ່ຕັ້ງຂອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ຖືກນຳໃຊ້ ແລະ ຄວບຄຸມໂດຍຊຸມຊົນນັ້ນ. ຢູ່ບ່ອນທີ່ສິດຄອບຄອງນຳໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ໄດ້ຮັບການບັນທຶກໄວ້ຢ່າງເປັນທາງການ, ສິດຄອບຄອງນຳໃຊ້ເຫຼົ່ານັ້ນ ຄວນໄດ້ຮັບການບັນທຶກໄວ້ຮ່ວມກັບ ສິດຄອບຄອງນຳໃຊ້ອື່ນໆຂອງລັດ, ເອກະຊົນ ແລະ ຊຸມຊົນ ເພື່ອປ້ອງກັນການຮຽກຮ້ອງສິດທີ່ຊ້ຳຊ້ອນກັນ.

9.9 ລັດ ແລະ ພາກສ່ວນອື່ນໆຄວນປຶກສາຫາລືດ້ວຍຄວາມຈິງໃຈ ກັບຊາວພື້ນເມືອງ ກ່ອນຈະລິເລີ່ມໂຄງການໃດໜຶ່ງ ຫຼື ກ່ອນຈະຮັບຮອງເອົາ ແລະ ຈັດຕັ້ງປະຕິບັດມາດຕະການທາງດ້ານນິຕິກຳ ຫຼື ມາດຕະການທາງດ້ານບໍລິຫານ ທີ່ສົ່ງຜົນກະທົບຕໍ່ຊັບພະຍາກອນ ທີ່ຊຸມຊົນຖືສິດຢູ່. ໂຄງການລັກສະນະນີ້ຄວນອີງໃສ່ການປຶກສາຫາລື ທີ່ມີປະສິດທິຜົນ ແລະ ມີຄວາມໝາຍສຳຄັນ ກັບຊາວພື້ນເມືອງ, ໂດຍຜ່ານສະຖາບັນທີ່ເປັນຕົວແທນຂອງເຂົາເຈົ້າ ເພື່ອໃຫ້ໄດ້ຮັບຄວາມຍິນຍອມຢ່າງມີອິດສະຫຼະ, ລ່ວງໜ້າ ແລະ ຖືກແຈ້ງໃຫ້ຊາບ ພາຍໃຕ້ ຖະແຫຼງການຂອງສະຫະປະຊາຊາດ ວ່າດ້ວຍ ສິດທິຂອງຊາວພື້ນເມືອງ ແລະ ໂດຍຄຳນຶງເຖິງ ຈຸດຢືນສະເພາະ ແລະ ຄວາມເຂົ້າໃຈຂອງແຕ່ລະປະເທດ. ຂະບວນການປຶກສາຫາລື ແລະ ຕັດສິນໃຈ ຄວນໄດ້ຮັບການຈັດຕັ້ງໂດຍບໍ່ມີການຂົ່ມຂູ່ ແລະ ຄວນຖືກດຳເນີນດ້ວຍຄວາມໄວ້ວາງໃຈ. ຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມ ຕາມທີ່ກຳນົດໄວ້ໃນວັກ 3ຂ.6 ຄວນຖືກນຳໃຊ້ ໃນກໍລະນີຂອງຊຸມຊົນອື່ນທີ່ອະທິບາຍໄວ້ໃນໝວດນີ້.

9.10 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນພະຍາຍາມ, ຕາມຄວາມຈໍາເປັນ, ຮ່ວມກັບສະຖາບັນທີ່ເປັນຕົວແທນ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ໂດຍການຮ່ວມມືກັບຊຸມຊົນທີ່ໄດ້ຮັບຜົນກະທົບ, ເພື່ອສະໜອງການຊ່ວຍເຫຼືອທາງດ້ານວິຊາການ ແລະ ດ້ານກົດໝາຍ ໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອເຂົ້າຮ່ວມໃນການພັດທະນານະໂຍບາຍ, ກົດໝາຍ ແລະ ໂຄງການ ກ່ຽວກັບການຄອບຄອງນໍາໃຊ້ ທີ່ບໍ່ມີລັກສະນະຈໍາແນກ ແລະ ແນໃສ່ບົດບາດຍິງຊາຍ.

9.11 ລັດຄວນເຄົາລົບ ແລະ ສົ່ງເສີມ ວິທີປະຕິບັດຕາມປະເພນີທີ່ນໍາໃຊ້ໂດຍຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນໍາໃຊ້ຕາມປະເພນີ ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຄອບຄອງນໍາໃຊ້ ຢູ່ພາຍໃນຊຸມຊົນ ໂດຍສອດຄ່ອງກັບພັນທະທີ່ຕົນມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ, ພ້ອມທັງຄໍານຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນໍາໃຊ້ໃນພາກພື້ນ ແລະ ສາກົນ. ສໍາລັບ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ຖືກນໍາໃຊ້ໂດຍຫຼາຍກວ່າໜຶ່ງຊຸມຊົນ, ວິທີທາງແກ້ໄຂຂໍ້ຂັດແຍ່ງ ລະຫວ່າງຊຸມຊົນ ຄວນໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ ຫຼື ພັດທະນາຂຶ້ນ.

9.12 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ ທີ່ກ່ຽວຂ້ອງກັບລະບົບການຄອບຄອງນໍາໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນໍາໃຊ້ຕາມປະເພນີ, ດ້ວຍການປຶກສາຫາລື ແລະ ການມີສ່ວນຮ່ວມ, ແລະ ດ້ວຍການເພີ່ມອໍານາດແກ່ຊຸມຊົນ.

3

## 10. ການຄອບຄອງນໍາໃຊ້ ບໍ່ເປັນທາງການ

10.1 ຢູ່ບ່ອນທີ່ມີການຄອບຄອງທີ່ບໍ່ເປັນທາງການ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ລັດຄວນຮັບຮູ້ສິ່ງດັ່ງກ່າວ ດ້ວຍການເຄົາລົບສິດຢ່າງເປັນທາງການທີ່ມີຢູ່ ຕາມກົດໝາຍຂອງຊາດ ແລະ ດ້ວຍການຮັບຮູ້ສະພາບຄວາມເປັນຈິງ ແລະ ສົ່ງເສີມ ສະຫວັດດີພາບທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ. ລັດຄວນສົ່ງເສີມນະໂຍບາຍ ແລະ ກົດໝາຍ ເພື່ອໃຫ້ການຮັບຮູ້ຕໍ່ການຄອບຄອງນໍາໃຊ້ທີ່ບໍ່ເປັນທາງການດັ່ງກ່າວ. ຂະບວນການສ້າງນະໂຍບາຍ ແລະ ກົດໝາຍ ຄວນເປັນແບບມີສ່ວນຮ່ວມ, ແນໃສ່ບົດບາດຍິງຊາຍ ແລະ ພະຍາຍາມສ້າງບົດບັນຍັດເພື່ອສະໜັບສະໜູນທາງດ້ານວິຊາການ ແລະ ດ້ານກົດໝາຍ ໃຫ້ແກ່ຊຸມຊົນ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບ. ໂດຍສະເພາະ, ລັດຄວນຮັບຮູ້ຕໍ່ການປາກົດຕົວຂອງການຄອບຄອງທີ່ບໍ່ເປັນທາງການ ທີ່ເກີດຂຶ້ນຈາກການຍ້າຍຖິ່ນຖານຂະໜາດໃຫຍ່.

10.2 ລັດຄວນຮັບປະກັນວ່າທຸກການກະທໍາ ກ່ຽວກັບການຄອບຄອງນໍາໃຊ້ທີ່ບໍ່ເປັນທາງການ ມີຄວາມສອດຄ່ອງກັບພັນທະທີ່ຕົນມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄໍານຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນໍາໃຊ້ ຢູ່ໃນພາກພື້ນ ແລະ ສາກົນ, ລວມທັງສິດທິໃນການມີບ່ອນຢູ່ອາໃສຢ່າງພຽງພໍ ຕາມຄວາມເໝາະສົມ.

10.3 ເມື່ອໃດກໍຕາມທີ່ລັດໃຫ້ການຮັບຮູ້ທາງກົດໝາຍຕໍ່ການຄອບຄອງນໍາໃຊ້ທີ່ບໍ່ເປັນທາງການ, ການຮັບຮູ້ດັ່ງກ່າວຄວນຖືກປະຕິບັດຜ່ານຂະບວນການແບບມີສ່ວນຮ່ວມ, ແນໃສ່ບົດບາດຍິງຊາຍ, ໂດຍຄໍານຶງເຖິງຜູ້ທີ່ນໍາໃຊ້ເປັນພິເສດ. ເພື່ອປະຕິບັດໄດ້ແນວນັ້ນ, ລັດຄວນເອົາໃຈໃສ່ເປັນພິເສດຕໍ່ຊາວກະສິກອນ ແລະ ຜູ້ຜະລິດອາຫານຂະໜາດນ້ອຍ. ຂະບວນການເຫຼົ່ານີ້ ຄວນເອື້ອອໍານວຍແກ່ການເຂົ້າເຖິງການບໍລິການໃນການເຮັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ຫຼຸດຄ່າໃຊ້ຈ່າຍລົງ. ລັດຄວນພະຍາຍາມ ເພື່ອໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ດ້ານກົດໝາຍ ແກ່ຊຸມຊົນ ແລະ ຜູ້ເຂົ້າຮ່ວມ.

10.4 ລັດຄວນນຳໃຊ້ທຸກມາດຕະການທີ່ເໝາະສົມ ເພື່ອຈຳກັດການຄອບຄອງນຳໃຊ້ທີ່ບໍ່ເປັນທາງການ ເຊິ່ງເກີດຈາກຂໍ້ຮຽກຮ້ອງທີ່ສັບຊ້ອນເກີນໄປທາງດ້ານກົດໝາຍ ແລະ ດ້ານບໍລິຫານ ສຳລັບການປ່ຽນປະເພດການນຳໃຊ້ ແລະ ການພັດທະນາບົນທີ່ດິນ. ບັນດາຂໍ້ຮຽກຮ້ອງ ແລະ ຂະບວນການ ໃນການພັດທະນາຄວນຈະແຈ້ງ, ງ່າຍດາຍ ແລະ ພໍຈ່າຍໄດ້ ເພື່ອຫຼຸດຜ່ອນພາລະໃນການປະຕິບັດຕາມ.

10.5 ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ, ໂດຍສະເພາະດ້ວຍການເພີ່ມຄວາມໂປ່ງໃສ, ໃຫ້ຜູ່ຜູ້ຕັດສິນໃຈເປັນຜູ່ຮັບຜິດຊອບ ແລະ ຮັບປະກັນວ່າໄດ້ມີການຕັດສິນໃຈຢ່າງເປັນກາງ ແລະ ທັນການ.

10.6 ບ່ອນໃດທີ່ເປັນໄປບໍ່ໄດ້ ທີ່ຈະໃຫ້ການຮັບຮູ້ທາງກົດໝາຍໃຫ້ແກ່ການຄອບຄອງນຳໃຊ້ທີ່ບໍ່ເປັນທາງການ, ລັດຄວນປ້ອງກັນບໍ່ໃຫ້ມີການບັງຄັບໃຫ້ອອກຈາກພື້ນທີ່ ເຊິ່ງລະເມີດພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ, ແລະ ໂດຍສອດຄ່ອງກັບບົດບັນຍັດທີ່ກ່ຽວຂ້ອງ ໃນຂໍ້ 16.

3

# ພາກ 4

# ການໂອນ ແລະ ການປ່ຽນແປງອື່ນໆກ່ຽວກັບສິດ ແລະ ໜ້າທີ່ໃນການຄອບຄອງນຳໃຊ້

ພາກນີ້ເວົ້າເຖິງການຄຸ້ມຄອງບໍລິຫານການຄອງຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ເມື່ອສິດ ແລະ ໜ້າທີ່ກ່ຽວຂ້ອງ ທີ່ມີຢູ່ໄດ້ຖືກໂອນ ຫຼື ຈັດສັນຄືນແບບສະໝັກໃຈ ຫຼື ບໍ່ສະໝັກໃຈໂດຍຜ່ານຕະຫຼາດ, ຜ່ານການປ່ຽນໂອນສິດຄອບຄອງນຳໃຊ້ ອັນເນື່ອງມາຈາກການລົງທຶນ, ການໂຮມຕອນດິນ ແລະ ວິທີການດັດປັບອື່ນໆ, ການທົດແທນຄືນ, ການປະຕິຮູບການແຈກຢາຍຄືນ ຫຼື ການເວນຄືນທີ່ດິນ.

## 11. ຕະຫຼາດ

11.1 ບ່ອນໃດທີ່ເໝາະສົມລັດຄວນຮັບຮູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ຕະຫຼາດການຂາຍ ແລະ ການໃຫ້ເຊົ່າທີ່ຍຸຕິທຳ ແລະ ໂປ່ງໃສ ຊຶ່ງເປັນເຄື່ອງມືໃນການໂອນສິດນຳໃຊ້ ແລະ ກຳມະສິດ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ບ່ອນໃດທີ່ຕະຫຼາດກ່ຽວກັບສິດຄອບຄອງນຳໃຊ້ໄດ້ດຳເນີນການ, ລັດຄວນຮັບປະກັນວ່າທຸກກິດຈະກຳສອດຄ່ອງກັບພັນທະພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ມີຜົນນຳໃຊ້ໃນພາກພື້ນ ແລະ ສາກົນ. ການເຄື່ອນໄຫວປ່ຽນແປງກ່ຽວກັບສິດຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຄວນສອດຄ່ອງກັບກົດລະບຽບການນຳໃຊ້ທີ່ດິນແຫ່ງຊາດ ແລະ ບໍ່ເປັນອັນຕະລາຍຕໍ່ເປົ້າໝາຍຫຼັກຂອງການພັດທະນາ.

11.2 ລັດຄວນເອື້ອອຳນວຍ ໃຫ້ແກ່ການດຳເນີນງານຂອງຕະຫຼາດທີ່ໂປ່ງໃສ ແລະ ມີປະສິດທິພາບ ເພື່ອສົ່ງເສີມການມີສ່ວນຮ່ວມພາຍໃຕ້ເງື່ອນໄຂ ແລະ ໂອກາດ ເທົ່າທຽມກັນ ເພື່ອການໂອນສິດຄອບຄອງນຳໃຊ້ທີ່ໃຫ້ຜົນປະໂຫຍດຮ່ວມກັນ ຊຶ່ງຫຼຸດຜ່ອນຂໍ້ຂັດແຍ່ງ ແລະ ການຂາດສະຖຽລະພາບ; ສົ່ງເສີມການນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ທີ່ຍືນຍົງ ແລະ ປົກປັກຮັກສາສິ່ງແວດລ້ອມ; ສົ່ງເສີມການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ທີ່ພົວພັນກັບທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໂດຍອີງຕາມສົນທິສັນຍາທີ່ມີຜົນບັງຄັບໃຊ້; ຂະຫຍາຍໂອກາດທາງເສດຖະກິດ; ແລະ ເພີ່ມການມີສ່ວນຮ່ວມຂອງຜູ້ທຸກຍາກ. ລັດຄວນນຳໃຊ້ມາດຕະການເພື່ອປ້ອງກັນຜົນກະທົບອັນບໍ່ເພິ່ງປາດຖະໜາ ຕໍ່ຊຸມຊົນທ້ອງຖິ່ນ, ຊາວພື້ນເມືອງ ແລະ ກຸ່ມທີ່ມີຄວາມສ່ຽງ ຊຶ່ງອາດເກີດຈາກ ເຊັ່ນ ໃນການເກງກຳໄລທີ່ດິນ, ການສະສົມທີ່ດິນ ແລະ ການລະເມີດຮູບແບບຂອງການຄອບຄອງນຳໃຊ້ທີ່ດິນຕາມປະເພນີ. ລັດ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຄວນຮັບຮູ້ ແລະ ເຂົ້າໃຈວ່າ ຄຸນຄ່າຕ່າງໆ ເຊັ່ນ ຄຸນຄ່າທາງດ້ານສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ ແມ່ນບໍ່ສາມາດໄດ້ຮັບບໍລິການທີ່ດີ ຈາກຕະຫຼາດທີ່ຂາດການຄວບຄຸມ. ລັດຄວນປົກປ້ອງຜົນປະໂຫຍດຢ່າງກ້ວາງຂວາງຂອງຊຸມຊົນ ໂດຍຜ່ານນະໂຍບາຍ ແລະ ກົດໝາຍ ທີ່ກ່ຽວຂ້ອງກັບການຄອບຄອງນຳໃຊ້ ທີ່ເໝາະສົມ.

11.3 ລັດຄວນສ້າງນະໂຍບາຍ, ກົດໝາຍ ແລະ ລະບົບນິຕິກຳ ລວມທັງອົງການນິຕິກຳ ເພື່ອຮັບປະກັນໃຫ້ຕະຫຼາດດຳເນີນການໄດ້ຢ່າງໂປ່ງໃສ ແລະ ມີປະສິດທິພາບ ເພື່ອສະໜອງການເຂົ້າເຖິງທີ່ບໍ່ມີລັກສະນະຈຳແນກ ແລະ ປ້ອງກັນວິທີປະຕິບັດທີ່ບໍ່ມີຄວາມສາມາດແຂ່ງຂັນ. ລັດຄວນເຮັດໃຫ້ຂັ້ນຕອນການບໍລິຫານໃຫ້ງ່າຍດາຍຂຶ້ນ ເພື່ອຫຼີກລຽງບໍ່ໃຫ້ຜູ້ທຸກຍາກ ແລະ ຜູ້ມີຄວາມສ່ຽງສູງສຸດ ມີຄວາມທໍ້ຖອຍໃຈ ທີ່ຈະເຂົ້າມາມີສ່ວນຮ່ວມໃນຕະຫຼາດ.

11.4 ລັດ ແລະ ພາກສ່ວນອື່ນໆ ຄວນຮັບປະກັນວ່າຂໍ້ມູນຂ່າວສານກ່ຽວກັບທຸລະກຳດ້ານຕະຫຼາດ ແລະ ຂໍ້ມູນຂ່າວສານກ່ຽວກັບມູນຄ່າຕະຫຼາດ ມີຄວາມໂປ່ງໃສ ແລະ ຖືກເຜີຍແຜ່ຢ່າງກ້ວາງຂວາງ, ໂດຍມີຂໍ້ຈຳກັດດ້ານຄວາມເປັນສ່ວນຕົວ. ລັດຄວນຕິດຕາມຂໍ້ມູນຂ່າວສານ ແລະ ດຳເນີນມາດຕະການໃນກໍລະນີທີ່ຕະຫຼາດສ້າງຜົນກະທົບທາງລົບ ຫຼື ຂັດຂວາງການເຂົ້າຮ່ວມທີ່ກ້ວາງຂວາງ ແລະ ເປັນທຳ.

11.5 ລັດຄວນຈັດຕັ້ງລະບົບບັນທຶກຂໍ້ມູນທີ່ເໝາະສົມ ແລະ ເຊື່ອຖືໄດ້ ເຊັ່ນ: ສະໝຸດທະບຽນທີ່ດິນ ຊຶ່ງໃຫ້ຂໍ້ມູນທີ່ເຂົ້າເຖິງໄດ້ກ່ຽວກັບສິດ ແລະ ພັນທະຂອງການຄອບຄອງນຳໃຊ້ ເພື່ອເພີ່ມ ຄວາມໝັ້ນຄົງຂອງການຄອບຄອງນຳໃຊ້ ແລະ ຫຼຸດຜ່ອນຕົ້ນທຶນ ແລະ ຄວາມສ່ຽງໃນການປ່ຽນໂອນ.

11.6 ລັດຄວນສ້າງມາດຕະການປ້ອງກັນເພື່ອປົກປ້ອງສິດຄອບຄອງນຳໃຊ້ ທີ່ຊອບທຳຂອງຄູ່ຜົວເມຍ, ສະມາຊິກຄອບຄົວ ແລະ ບຸກຄົນອື່ນໆ ທີ່ບໍ່ໄດ້ຂຽນໄວ້ວ່າເປັນຜູ້ຖືສິດຄອບຄອງນຳໃຊ້ ໃນລະບົບບັນທຶກຂໍ້ມູນ ເຊັ່ນ: ສະໝຸດທະບຽນທີ່ດິນ.

11.7 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນປະຕິບັດຕາມມາດຕະຖານດ້ານຈັນຍາບັນທີ່ມີຜົນ. ຄວນໂຄສະນາເຜີຍແຜ່ ແລະ ຕິດຕາມການຈັດຕັ້ງປະຕິບັດມາດຕະຖານເຫຼົ່ານີ້ໃນການດຳເນີນຕະຫຼາດເພື່ອປ້ອງກັນການສໍ້ລາດບັງຫຼວງ, ໂດຍສະເພາະດ້ວຍການເປີດເຜີຍຂໍ້ມູນຕໍ່ສາທາລະນະ.

11.8 ໂດຍເຫັນຄວາມສຳຄັນກັບຜູ້ຜະລິດຂະໜາດນ້ອຍ ເພື່ອຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ ແລະ ສະເຖຍລະພາບທາງສັງຄົມ, ລັດຄວນຮັບປະກັນວ່າ ໃນເວລາອຳນວຍຄວາມສະດວກໃຫ້ແກ່ການດຳເນີນຕະຫຼາດ ການປ່ຽນໂອນສິດຄອບຄອງນຳໃຊ້, ລັດຍັງໄດ້ປົກປ້ອງສິດຄອບຄອງນຳໃຊ້ ຂອງຜູ້ຜະລິດຂະໜາດນ້ອຍ.

## 12. ການລົງທຶນ

12.1 ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ ຄວນຮັບຮູ້ວ່າການລົງທຶນຢ່າງມີຄວາມຮັບຜິດຊອບຂອງພາກລັດ ແລະ ພາກເອກະຊົນ ແມ່ນມີຄວາມສຳຄັນ ໃນການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ. ການຄຸ້ມຄອງບໍລິຫານຢ່າງມີຄວາມຮັບຜິດຊອບ ໃນການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ເປັນການຊຸກຍູ້ເຈົ້າຂອງສິດຄອບຄອງນຳໃຊ້ ໃຫ້ມີການລົງທຶນຢ່າງມີຄວາມຮັບຜິດຊອບ ຕໍ່ຊັບພະຍາກອນດັ່ງກ່າວ, ເພີ່ມການຜະລິດກະສິກຳແບບຍືນຍົງ ແລະ ເຮັດໃຫ້ມີລາຍຮັບສູງຂຶ້ນ. ລັດຄວນສົ່ງເສີມ ແລະ ສະໜັບສະໜູນການລົງທຶນຢ່າງມີຄວາມຮັບຜິດຊອບໃນທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຊຶ່ງສະໜັບສະໜູນວັດຖຸປະສົງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຢ່າງກ້ວາງຂວາງພາຍໃຕ້ຄວາມຫຼາກຫຼາຍຂອງລະບົບການກະເສດ. ລັດຄວນຮັບປະກັນວ່າ ມາດຕະການຈັດຕັ້ງປະຕິບັດຕ່າງໆ ແມ່ນສອດຄ່ອງກັບພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດລະດັບພາກພື້ນ ແລະ ສາກົນ.

12.2 ໂດຍຄຳນຶງວ່າ ຜູ້ຜະລິດຂະໜາດນ້ອຍ ແລະ ອົງການຈັດຕັ້ງຂອງເຂົາເຈົ້າ ຢູ່ບັນດາປະເທດກຳລັງພັດທະນາ ປະກອບເປັນຫຸ້ນສ່ວນສຳຄັນໃນການລົງທຶນດ້ານກະສິກຳ ຊຶ່ງປະກອບສ່ວນຢ່າງໃຫຍ່ຫຼວງ

4

ຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ, ໂພຊະນາການ, ການລົບລ້າງຄວາມທຸກຍາກ ແລະ ຄວາມສາມາດຟື້ນຟູຕົວເອງໄດ້ຂອງສິ່ງແວດລ້ອມ, ລັດຄວນສະໜັບສະໜູນການລົງທຶນ ໂດຍຜູ້ຜະລິດຂະໜາດໜ້ອຍ ແລະ ໂດຍພາກລັດ ແລະ ເອກະຊົນ ທີ່ເນັ້ນໃສ່ຜູ້ຖືຄອງຂະໜາດນ້ອຍ.

12.3 ທຸກຮູບແບບຂອງການປ່ຽນໂອນສິດຄອບຄອງນຳໃຊ້ ອັນເປັນຜົນມາຈາກການລົງທຶນໃສ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຄວນຖືກຈັດຕັ້ງປະຕິບັດຢ່າງໂປ່ງໃສ ໄປຕາມນະໂຍບາຍເສດຖະກິດແຫ່ງຊາດທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບເປົ້າໝາຍການເຕີບໂຕດ້ານເສດຖະກິດສັງຄົມ ແລະ ການພັດທະນາຊັບພະຍາກອນມະນຸດແບບຍືນຍົງ ໂດຍເນັ້ນໃສ່ຜູ້ຖືຄອງຂະໜາດນ້ອຍ.

12.4 ການລົງທຶນຢ່າງມີຄວາມຮັບຜິດຊອບຄວນ ບໍ່ກໍ່ໃຫ້ເກີດຜົນເສຍຫາຍ, ຄວນມີມາດຕະການປ້ອງກັນການສູນເສັຍສິດ ຂອງຜູ້ເປັນເຈົ້າຂອງສິດຄອບຄອງນຳໃຊ້ຢ່າງຊອບທຳ ແລະ ປ້ອງກັນຄວາມເສັຍຫາຍຕໍ່ສິ່ງແວດລ້ອມ ແລະ ຄວນເຄົາລົບສິດທິມະນຸດ. ການລົງທຶນດັ່ງກ່າວນັ້ນ ຄວນຖືກດຳເນີນໂດຍການຮ່ວມມືກັບໜ່ວຍງານທີ່ກ່ຽວຂ້ອງຂອງລັດຢູ່ແຕ່ລະຂັ້ນ ແລະ ຮ່ວມກັບເຈົ້າຂອງສິດຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຂັ້ນທ້ອງຖິ່ນ ໂດຍເຄົາລົບສິໃນການຄອບຄອງນຳໃຊ້ຢ່າງຊອບທຳຂອງເຂົາເຈົ້າ. ການລົງທຶນຄວນແນໃສ່ເພື່ອປະກອບສ່ວນເຂົ້າໃນຈຸດປະສົງດ້ານນະໂຍບາຍ ເຊັ່ນ: ລົບລ້າງຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ແບບຍືນຍົງ; ຊ່ວຍເຫຼືອຊຸມຊົນ; ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ; ສົ່ງເສີມແລະຮັບປະກັນລະບົບການຜະລິດອາຫານຢູ່ຂັ້ນທ້ອງຖິ່ນ; ຍົກລະດັບການພັດທະນາເສດຖະກິດ ແລະ ສັງຄົມແບບຍືນຍົງ; ສ້າງວຽກເຮັດງານທຳ; ກະຈາຍຮູບແບບການທຳມາຫາກິນ; ສະໜອງຜົນປະໂຫຍດໃຫ້ແກ່ປະເທດຊາດ ກໍຄືປະຊາຊົນທັງໝົດ ລວມທັງຜູ້ທຸກຍາກ ແລະ ຜູ້ມີຄວາມສ່ຽງທີ່ສຸດ; ແລະ ສອດຄ່ອງກັບກົດໝາຍຂອງຊາດ ກໍຄືມາດຕະຖານແຮງງານສາກົນ ແລະ ພັນທະທີ່ກ່ຽວຂ້ອງກັບມາດຕະຖານຂອງອົງການແຮງງານສາກົນຕາມຄວາມເໝາະສົມ.

12.5 ລັດ, ໂດຍມີການປຶກສາຫາລື ແລະ ການມີສ່ວນຮ່ວມທີ່ເໝາະສົມ, ຄວນສະໜອງລະບຽບການທີ່ໂປ່ງໃສກ່ຽວກັບຂະໜາດ, ຂອບເຂດ ແລະ ລັກສະນະຂອງການປ່ຽນໂອນ ທີ່ໄດ້ຮັບອະນຸມັດກ່ຽວກັບສິດຄອບຄອງນຳໃຊ້ແລະຄວນກຳນົດວ່າອັນໃດທີ່ພາໃຫ້ມີການປ່ຽນໂອນຂະໜາດໃຫຍ່ກ່ຽວກັບສິດຄອບຄອງນຳໃຊ້ ໂດຍອີງຕາມສະພາບເງື່ອນໄຂຂອງປະເທດຕົນ.

12.6 ລັດຄວນສະໜອງມາດຕະການປ້ອງກັນເພື່ອປົກປ້ອງສິດຄອບຄອງນຳໃຊ້ທີ່ຊອບທຳ, ສິດທິມະນຸດ, ການດຳລົງຊີວິດ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສິ່ງແວດລ້ອມ ຈາກຄວາມສ່ຽງຊຶ່ງອາດຈະເກີດຂຶ້ນຈາກການປ່ຽນໂອນສິດຄອບຄອງນຳໃຊ້ຂະໜາດໃຫຍ່. ມາດຕະການປ້ອງກັນດັ່ງກ່າວອາດລວມເອົາທັງການວາງເພດານທີ່ສາມາດອະນຸຍາດການປ່ຽນໂອນກ່ຽວກັບທີ່ດິນ ແລະ ວາງລະບຽບການອະນຸມັດ ກໍລະນີເກີນເພດານ ເຊັ່ນໃຫ້ລັດຖະສະພາເປັນຜູ້ອະນຸມັດ. ລັດຄວນພິຈາລະນາສົ່ງເສີມຮູບແບບຕ່າງໆຂອງການຜະລິດ ແລະ ການລົງທຶນທີ່ຈະບໍ່ເຮັດໃຫ້ມີການໂອນສິດຄອບຄອງນຳໃຊ້ຂະໜາດໃຫຍ່ໄປໃຫ້ນັກລົງທຶນ ແລະ ຄວນສົ່ງເສີມການຮ່ວມມືກັບຜູ້ຖືສິດຄອບຄອງນຳໃຊ້ ຢູ່ຂັ້ນທ້ອງຖິ່ນ.

12.7 ສຳລັບຊາວພື້ນເມືອງແລະຊຸມຊົນຂອງເຂົາເຈົ້າ, ລັດຄວນຮັບປະກັນວ່າທຸກມາດຕະການ ຈັດຕັ້ງປະຕິບັດສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນ ພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ, ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດໃນລະດັບພາກພື້ນ ແລະ ສາກົນ ລວມທັງສົນທິສັນຍາ (ເລກທີ 169) ຂອງອົງການແຮງງານສາກົນກ່ຽວກັບຊາວພື້ນເມືອງ ແລະ ຊົນເຜົ່າຢູ່ໃນປະເທດທີ່ເປັນເອກະລາດ ແລະ ຖະແຫຼງການຂອງສະຫະປະຊາຊາດວ່າດ້ວຍສິດທິຂອງຊາວພື້ນເມືອງ. ລັດ ແລະ ພາກສ່ວນອື່ນໆຄວນສົນທະນາຢ່າງຈິງຈັງກັບຊາວພື້ນເມືອງກ່ອນທີ່ຈະລິເລີ່ມໂຄງການລົງທຶນໃດໜຶ່ງ ທີ່ກະທົບໃສ່ແຫຼ່ງຊັບພະຍາກອນທີ່ຊຸມຊົນມີສິດຄຸ້ມຄອງ. ໂຄງການດັ່ງກ່າວ ຄວນອີງໃສ່ການປຶກສາຫາລືກັບສະມາຊິກຂອງຊາວພື້ນເມືອງ ຢ່າງມີປະສິດທິພາບ ແລະ ມີຄວາມໝາຍ ດັ່ງລາຍລະອຽດຢູ່ໃນວັກ 9.9. ຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳສະບັບນີ້ ຄວນຖືກນຳໃຊ້ສຳລັບການລົງທຶນທີ່ນຳໃຊ້ຊັບພະຍາກອນຂອງຊຸມຊົນອື່ນໆ.



4

12.8 ລັດຄວນສົນທະນາກັບພາກສ່ວນທີ່ຖືກຜົນກະທົບທັງໝົດ ແລະ ສອດຄ່ອງກັບຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳນີ້, ກຳນົດເງື່ອນໄຂ ທີ່ສົ່ງເສີມການລົງທຶນທີ່ຢ່າງຄວາມຮັບຜິດຊອບ ແລະ ຈາກນັ້ນ ຄວນພັດທະນາ ແລະ ເຜີຍແຜ່ນະໂຍບາຍ ແລະ ກົດໝາຍທີ່ສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ໂດຍເຄົາລົບສິດທິມະນຸດ ແລະ ສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການນຳໃຊ້ສິ່ງແວດລ້ອມແບບຍືນຍົງ. ບັນດາກົດໝາຍຄວນຮຽກຮ້ອງໃຫ້ມີສັນຍາການລົງທຶນ ເພື່ອກຳນົດຈະແຈ້ງ ກ່ຽວກັບສິດ ແລະ ໜ້າທີ່ຂອງຄູ່ສັນຍາທຸກຝ່າຍ. ສັນຍາການລົງທຶນຄວນປະຕິບັດຕາມກອບນິຕິກຳຂອງຊາດ ແລະ ລະບຽບການລົງທຶນ.

12.9 ລັດຄວນສ້າງຂໍ້ກຳນົດສຳລັບການລົງທຶນ ທີ່ກ່ຽວຂ້ອງກັບທຸກຮູບແບບການປ່ຽນໂອນສິດຄອບຄອງນຳໃຊ້, ຊຶ່ງລວມທັງຂໍ້ຕົກລົງກ່ຽວກັບການຊື້ເອົາສິດດັ່ງກ່າວ ແລະ ການຮ່ວມທຶນ ໃຫ້ສອດຄ່ອງກັບຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳສະບັບນີ້, ຮ່ວມກັບຜູ້ທີ່ ຖືສິດຄອບຄອງນຳໃຊ້ລວມທັງສິດຍ່ອຍຕ່າງໆທີ່ອາດໄດ້ຮັບຜົນກະທົບ. ລັດ ແລະ ພາກສ່ວນກ່ຽວຂ້ອງອື່ນໆຄວນແຈ້ງໃຫ້ບຸກຄົນ, ຄອບຄົວ ແລະ ຊຸມຊົນຮູ້ເຖິງສິດຄອບຄອງນຳໃຊ້ຂອງເຂົາເຈົ້າ ແລະ ໃຫ້ການຊ່ວຍເຫຼືອພັດທະນາຄວາມອາດສາມາດຂອງເຂົາເຈົ້າໃນການປຶກສາຫາລື ແລະ ການເຂົ້າມາມີສ່ວນຮ່ວມ ລວມທັງການຊ່ວຍເຫຼືອດ້ານວິຊາສະເພາະຖ້າຈຳເປັນ.

12.10 ໃນເມື່ອການລົງທຶນພົວພັນກັບການປ່ຽນໂອນສິດຄອບຄອງນຳໃຊ້ຂະໜາດໃຫຍ່,ລວມທັງການຊື້ເອົາ ແລະ ການຮ່ວມທຶນ ກຳລັງຖືກພິຈາລະນາ, ລັດຄວນໃຫ້ພາກສ່ວນກ່ຽວຂ້ອງດຳເນີນການປະເມີນຜົນຢ່າງເປັນອິດສະລະກ່ຽວກັບຜົນກະທົບດ້ານບວກ ແລະ ດ້ານລົບທີ່ອາດເກີດຂຶ້ນຍ້ອນການລົງທຶນດັ່ງກ່າວຕໍ່ສິດຄອບຄອງນຳໃຊ້, ຄວາມໝັ້ນຄົງດ້ານສະບຽງອາຫານ, ແລະ ການປະຕິບັດຕົວຈິງຢ່າງຕັ້ງໜ້າຕໍ່ສິດທິໃນການມີອາຫານພຽງພໍ,ການດຳລົງຊີວິດ ແລະຕໍ່ສິ່ງແວດລ້ອມ.ລັດຄວນຮັບປະກັນວ່າສິດຄອບຄອງນຳໃຊ້ທີ່ຊອບທຳທີ່ມີຢູ່ ແລະ ການຮຽກຮ້ອງສິດ ລວມທັງການຄອບຄອງນຳໃຊ້ຕາມປະເພນີ ແລະ ແບບບໍ່ເປັນທາງການ, ຕະຫຼອດເຖິງສິດ ແລະ ການດຳລົງຊີວິດຂອງບຸກຄົນອື່ນໆທີ່ໄດ້ຮັບຜົນກະທົບຈາກການລົງທຶນ ເຊັ່ນ ຜູ້ທຳການຜະລິດຂະໜາດນ້ອຍ ໄດ້ຖືກລະບຸຢ່າງເປັນລະບົບ ແລະ ຍຸຕິທຳ. ຂະບວນການດັ່ງກ່າວນີ້ຄວນຖືກນຳມາດຳເນີນການ ພາຍໃຕ້ການປຶກສາຫາລືກັບພາກສ່ວນທີ່ຖືກຜົນກະທົບທັງໝົດ ໂດຍໃຫ້ສອດຄ່ອງກັບຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳສະບັບນີ້. ລັດຄວນຮັບປະກັນວ່າສິດຄອບຄອງນຳໃຊ້ທີ່ຊອບທຳທີ່ມີຢູ່ ຈະບໍ່ເສັຍຫາຍຈາກການລົງທຶນດັ່ງກ່າວ.

12.11 ຄູ່ສັນຍາຝ່າຍຕ່າງໆຄວນສະໜອງຂໍ້ມູນທີ່ຄົບຖ້ວນ ເພື່ອຮັບປະກັນວ່າພາກສ່ວນກ່ຽວຂ້ອງທັງໝົດມີສ່ວນຮ່ວມ ແລະ ໄດ້ຮັບຊາບໃນການເຈລະຈາ ແລະ ຄວນພະຍາຍາມເຮັດໃຫ້ຂໍ້ຕົກລົງໄດ້ຖືກບັນທຶກເປັນເອກະສານໄວ້ ແລະ ເປັນທີ່ເຂົ້າໃຈຂອງຜູ້ທີ່ໄດ້ຮັບຜົນກະທົບທັງໝົດ. ຂັ້ນຕອນການເຈລະຈາຄວນບໍ່ມີລັກສະນະຈຳແນກ ແລະ ຄວນແນໃສ່ບົດບາດຍິງຊາຍ.

12.12 ຜູ້ລົງທຶນມີຄວາມຮັບຜິດຊອບໃນການເຄົາລົບກົດໝາຍ ແລະ ນິຕິກຳຂອງຊາດ ພ້ອມທັງຮັບຮູ້ ແລະ ເຄົາລົບສິດຄອບຄອງນຳໃຊ້ຂອງຜູ້ອື່ນ ແລະ ຫຼັກນິຕິທຳທີ່ສອດຄ່ອງກັບຫຼັກການລວມສຳລັບພາກສ່ວນທີ່ບໍ່ຂຶ້ນກັບລັດ ດັ່ງທີ່ໄດ້ລະບຸໄວ້ໃນບົດແນະນຳສະບັບນີ້. ການລົງທຶນຄວນບໍ່ມີສ່ວນສ້າງຄວາມບໍ່ໝັ້ນຄົງທາງດ້ານ ສະບຽງອາຫານ ແລະ ທຳລາຍສິ່ງແວດລ້ອມ.

12.13 ຜູ້ຊ່ຽວຊານທີ່ສະໜອງການບໍລິການໃຫ້ລັດ, ນັກລົງທຶນ ແລະ ຜູ້ຖືສິດຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຄວນພະຍາຍາມໃຊ້ທຸກຄວາມສາມາດໃນເວລາໃຫ້ບໍລິການ ໂດຍບໍ່ຄຳນຶງເຖິງວ່າຈະມີການຮ້ອງຂໍສະເພາະ ຫຼື ບໍ່.

12.14 ລັດ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ຖືກກະທົບຄວນປະກອບສ່ວນຕິດຕາມການຈັດຕັ້ງປະຕິບັດ ແລະ ຕິດຕາມຜົນກະທົບຂອງຂໍ້ຕົກລົງກ່ຽວກັບການປ່ຽນໂອນຂະໜາດໃຫຍ່ ຕໍ່ທີ່ດິນ ລວມທັງການຊື້ເອົາ ແລະ ການຮ່ວມທຶນ. ເມື່ອຈຳເປັນ, ລັດຄວນມີມາດຕະການແກ້ໄຂ ເພື່ອບັງຄັບປະຕິບັດຂໍ້ຕົກລົງ ແລະ

ປົກປ້ອງສິດຄອບຄອງນຳໃຊ້ ແລະ ສິດອື່ນໆ ພ້ອມກັບມີກົນໄກເພື່ອໃຫ້ພາກສ່ວນທີ່ໄດ້ຮັບຜົນກະທົບສາມາດສະເໜີໃຊ້ມາດຕະການດັ່ງກ່າວໄດ້.

12.15 ເມື່ອລັດລົງທຶນ ຫຼື ສົ່ງເສີມການລົງທຶນຢູ່ຕ່າງປະເທດ, ຄວນຮັບປະກັນວ່າການດຳເນີນການຂອງຕົນສອດຄ່ອງກັບການປົກປ້ອງສິດຄອບຄອງນຳໃຊ້ທີ່ຊອບທຳ, ການສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ພັນທະທີ່ມີຢູ່ຂອງຕົນ ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາພາຍໃຕ້ສົນທິສັນຍາທີ່ນຳໃຊ້ຢູ່ໃນພາກພື້ນ ແລະ ສາກົນ.

## 13. ການຈັດລວມຕອນດິນ ແລະ ວິທີການດັດປັບອື່ນໆ

13.1 ເມື່ອເຫັນວ່າເໝາະສົມ, ລັດອາດພິຈາລະນາຈັດລວມຕອນດິນ, ແລກປ່ຽນ ຫຼື ວິທີການແບບສະໝັກໃຈອື່ນໆ ເພື່ອດັດປັບຕອນດິນ ຫຼື ດັດປັບການຖືສິດ ເພື່ອຊ່ວຍເຈົ້າຂອງດິນ ແລະ ຜູ້ນຳໃຊ້ດິນປັບປຸງຮູບຮ່າງ ແລະ ການນຳໃຊ້ຕອນດິນ ຫຼື ການຖືຄອງສິດໃນທີ່ດິນ ໄດ້ດີກ່ວາເກົ່າ ລວມທັງການສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການພັດທະນາຊົນນະບົດແບບຍືນຍົງ. ລັດຄວນຮັບປະກັນວ່າມາດຕະການທັງໝົດນີ້ແມ່ນສອດຄ່ອງກັບພັນທະຂອງຕົນພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາພາຍໃຕ້ສົນທິສັນຍາທີ່ນຳໃຊ້ໃນພາກພື້ນ ແລະ ສາກົນ ແລະ ຮັບປະກັນວ່າຜູ້ເຂົ້າຮ່ວມຢ່າງໜ້ອຍມີສະພາບດີຂຶ້ນກວ່າແຕ່ກ່ອນ ຫຼັງຈາກມີລະບົບນີ້. ວິທີການນີ້ຄວນຖືກນຳໃຊ້ເພື່ອປະສານເອົາຄວາມຕ້ອງການຂອງຜູ້ເປັນເຈົ້າຂອງ ແລະ ຜູ້ໃຊ້ ຫຼາຍໆຄົນໃຫ້ເຂົ້າຢູ່ໃນການດັດປັບທີ່ຊອບທຳອັນດຽວກັນຊອບທຳ.

13.2 ເມື່ອເຫັນສົມຄວນ, ລັດອາດພິຈາລະນາການສ້າງຕັ້ງທະນາຄານທີ່ດິນ ອັນເປັນພາກສ່ວນໜຶ່ງຂອງໂຄງການລວມຕອນດິນ ເພື່ອໃຫ້ໄດ້ຮັບ ແລະ ຖືສິດຕອນດິນໄວ້ຊົ່ວຄາວຈົນກ່ວາຕອນດິນດັ່ງກ່າວຈະຖືກຈັດແບ່ງໃຫ້ຜູ້ໄດ້ຮັບຜົນປະໂຫຍດ

13.3 ເມື່ອເຫັນສົມຄວນ, ລັດອາດສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການຈັດລວມຕອນດິນ ແລະ ທະນາຄານທີ່ດິນ ໃນໂຄງການປົກປັກຮັກສາສິ່ງແວດລ້ອມ ແລະ ໂຄງການໂຄງລ່າງພື້ນຖານເພື່ອອຳນວຍຄວາມສະດວກໃຫ້ແກ່ການເວນຄືນທີ່ດິນເອກະຊົນ ສຳລັບໂຄງການສາທາລະນະດັ່ງກ່າວ, ແລະ ເພື່ອຈັດສັນທີ່ດິນໃຫ້ເຈົ້າຂອງທີ່ດິນ, ຊາວນາ ແລະ ຜູ້ຜະລິດອາຫານຂະໜາດນ້ອຍທີ່ໄດ້ຮັບຜົນກະທົບເພື່ອເປັນການຊົດເຊີຍເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ ແລະ ແມ່ນແຕ່ເພີ່ມການຜະລິດຂຶ້ນອີກ.

13.4 ເມື່ອມີການເຮັດກະສິກຳແບບຄອບຄົວ ແລະ ມີປ່າໄມ້ກະແຈກກະຈາຍ ເປັນຕອນດິນຫຼາຍໆຕອນເຮັດໃຫ້ຕົ້ນທຶນການຜະລິດສູງຂຶ້ນ, ລັດອາດພິຈາລະນາການຈັດລວມຕອນດິນ ແລະ ສ້າງທະນາຄານດິນ ເພື່ອປັບປຸງໂຄງສ້າງທີ່ດິນທຳການຜະລິດ ແລະ ປ່າໄມ້ເຫຼົ່ານັ້ນ. ລັດບໍ່ຄວນດຳເນີນການລວມຕອນດິນຢູ່ບ່ອນທີ່ມີຕອນດິນການກະແຈກກະຈາຍ ແຕ່ໃຫ້ຜົນປະໂຫຍດ ເຊັ່ນ: ການຫຼຸດຜ່ອນຄວາມສ່ຽງ ຫຼື ການປູກພືດຫຼາກຫຼາຍຊະນິດ. ໂຄງການລວມຕອນດິນເພື່ອປັບໂຄງສ້າງດິນທຳການຜະລິດຄວນຖືກປະສານເຂົ້າກັບແຜນງານຊ່ວຍເຫຼືອຊາວກະສິກອນ ເຊັ່ນ: ການປົວແປງລະບົບຊົນລະປະທານ ແລະ ຖະໜົນຫົນທາງຢູ່ຕາມທ້ອງຖິ່ນຕ່າງໆ. ຄວນສ້າງມາດຕະການ ເພື່ອປົກປ້ອງການລົງທຶນໃສ່ການລວມຕອນດິນ ໂດຍການຈຳກັດບໍ່ໃຫ້ແບ່ງແຍກຕອນດິນທີ່ຖືກລວມເຂົ້າກັນແລ້ວ ໃນຕໍ່ໜ້າ.

13.5 ລັດຄວນສ້າງຍຸດທະສາດສຳລັບວິທີການດັດປັບຕອນດິນຄືນໃໝ່ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການສະເພາະດ້ານຂອງທ້ອງຖິ່ນ. ຍຸດທະສາດດັ່ງກ່າວນັ້ນ ຄວນໃຫ້ຄວາມສຳຄັນດ້ານສັງຄົມ, ເສດຖະກິດ ແລະ ຄວາມຍືນຍົງຂອງສິ່ງແວດລ້ອມ ລວມທັງບົດບາດຍິງຊາຍ. ຍຸດທະສາດ ຄວນກຳນົດຫຼັກການ ແລະ ຈຸດປະສົງຂອງວິທີການດັດປັບຕອນດິນຄືນໃໝ່; ກຳນົດຜູ້ໄດ້ຮັບຜົນປະໂຫຍດ, ແລະ ກຳນົດການພັດທະນາຄວາມອາດສາມາດ ແລະ ຄວາມຮູ້ຢູ່ໃນພາກລັດ, ພາກເອກະຊົນ,

ອົງການຈັດຕັ້ງຊາວກະສິກອນ ແລະ ຜູ້ຜະລິດຂະໜາດນ້ອຍ, ຊາວປະມົງ ແລະ ຜູ້ນຳໃຊ້ປ່າໄມ້ ແລະ ນັກວິຊາການ. ກົດໝາຍຕ່າງໆ ຄວນສ້າງຂັ້ນຕອນທີ່ຈະແຈ້ງ ແລະ ຄຸ້ມທຶນ ເພື່ອດັດປັບຕອນດິນຄືນ ຫຼື ດັດປັບການຖືຄອງສິດ ແລະ ການນຳໃຊ້ຕອນດິນເຫຼົ່ານັ້ນ.

13.6 ລັດຄວນສ້າງຕັ້ງລະບົບຄວາມປອດໄພທີ່ເໝາະສົມ ໃນບັນດາໂຄງການ ທີ່ນຳໃຊ້ວິທີການດັດປັບຕອນດິນຄືນ. ບຸກຄົນ, ຊຸມຊົນ ຫຼື ປະຊາຊົນທີ່ອາດຈະຖືກຜົນກະທົບຈາກໂຄງການຄວນໄດ້ຮັບການຕິດຕໍ່ ແລະ ໄດ້ຮັບຂໍ້ມູນທີ່ພຽງພໍໃນພາສາທີ່ເຂົາເຈົ້ານຳໃຊ້. ຄວນໃຫ້ການຊ່ວຍເຫຼືອດ້ານນິຕິກຳ ແລະ ດ້ານວິຊາການ. ວິທີການແບບມີສ່ວນຮ່ວມ ແລະ ແນໃສ່ບົດບາດຍິງຊາຍ ຄວນຖືກນຳໃຊ້ໂດຍຄຳນຶງເຖິງສິດທິຂອງຊາວພື້ນເມືອງ. ການປົກປ້ອງສິ່ງແວດລ້ອມຄວນຖືກຈັດຕັ້ງປະຕິບັດເພື່ອການປ້ອງກັນ ຫຼືການຫຼຸດຄວາມເສື່ອມໂຊມ ຫຼືການສູນເສັຽຂອງຊີວະນາໆພັນ ແລະ ໃຫ້ລາງວັນສຳລັບການປ່ຽນແປງທີ່ສົ່ງເສີມການຄຸ້ມຄອງດິນທີ່ດີ, ພາກປະຕິບັດທີ່ດີ ແລະ ການຮຽກຮ້ອງເອົາສິດຄືນ.

## 14. ການທົດແທນຄືນ

14.1 ອີງຕາມເງື່ອນໄຂຂອງປະເທດ ແລະ ໃນບ່ອນທີ່ເໝາະສົມ, ລັດຄວນພິຈາລະນາການທົດແທນຄືນແກ່ການສູນເສັຍສິດຄອບຄອງນຳໃຊ້ທີ່ຊອບທຳ ຕໍ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ລັດຄວນຮັບປະກັນວ່າ ມາດຕະການທັງໝົດສອດຄ່ອງກັບພັນທະທີ່ມີຢູ່ຂອງພວກເຂົາພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດໃນພາກພື້ນ ແລະ ສາກົນ.

14.2 ຫາກເປັນໄປໄດ້, ລັດຄວນສົ່ງຕອນດິນ ຫຼື ການຖືຄອງສິດເດີມ ຄືນໃຫ້ຜູ້ທີ່ປະສົບຄວາມສູນເສັຍ ຫຼື ທາຍາດຂອງເຂົາເຈົ້າ ໂດຍມະຕິຕົກລົງຂອງອົງການທີ່ມີຄວາມສາມາດຂອງຊາດ. ເມື່ອຕອນດິນເດີມ ຫຼື ການຖືຄອງສິດເດີມ ບໍ່ສາມາດສົ່ງຄືນໄດ້, ລັດຄວນໃຫ້ການຊົດເຊີຍທີ່ທັນການ ໃນຮູບແບບເປັນເງິນ ແລະ/ຫຼື ເປັນດິນຕອນອື່ນ ຫຼື ການຖືຄອງສິດອື່ນ ແລະ ຮັບປະກັນການປະຕິບັດທີ່ເປັນທຳຕໍ່ຜູ້ທີ່ໄດ້ຮັບຜົນກະທົບທຸກຄົນ.

14.3 ບ່ອນທີ່ເໝາະສົມ, ຄວາມກັງວົນຂອງຊາວພື້ນເມືອງກ່ຽວກັບການທົດແທນຄືນ ຄວນໄດ້ຮັບການແກ້ໄຂ ຕາມເງື່ອນໄຂຂອງປະເທດ ແລະ ອີງຕາມລະບຽບກົດໝາຍຂອງຊາດ.

14.4 ລັດຄວນສ້າງບັນດານະໂຍບາຍ ແລະ ກົດໝາຍ ທີ່ແນໃສ່ບົດບາດຍິງຊາຍ ທີ່ກຳນົດຂັ້ນຕອນການທົດແທນຄືນທີ່ຈະແຈ້ງ, ໂປ່ງໃສ. ຂໍ້ມູນກ່ຽວກັບຂັ້ນຕອນການທົດແທນຄືນ ຄວນຖືກນຳໄປເຜີຍແຜ່ຢ່າງກວ້າງຂວາງ ໃນພາສາທີ່ເຂົາເຈົ້າໃຊ້. ຜູ້ຮຽກຮ້ອງສິດ ຄວນໄດ້ຮັບການຊ່ວຍເຫຼືອຢ່າງພຽງພໍ ລວມທັງຜ່ານການຊ່ວຍເຫຼືອດ້ານນິຕິກຳ ແລະ ຈາກຜູ້ຊ່ວຍນັກກົດໝາຍ ໃນທຸກຂັ້ນຕອນ. ລັດຄວນຮັບປະກັນວ່າການຮ້ອງຂໍທົດແທນຄືນ ໄດ້ຖືກດຳເນີນຢ່າງທັນການ. ເມື່ອຈຳເປັນ, ຜູ້ຮ້ອງຂໍທີ່ປະສົບຜົນສຳເລັດ ຄວນໄດ້ຮັບການບໍລິການຊ່ວຍເຫຼືອ ເພື່ອໃຫ້ພວກເຂົາໄດ້ຊົມໃຊ້ສິດຄອບຄອງນຳໃຊ້ຂອງຕົນ ແລະ ປະຕິບັດໜ້າທີ່ຂອງຕົນ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຄວນຖືກນຳໄປເຜີຍແຜ່ຢ່າງກ້ວາງຂວາງ.

## 15. ການປະຕິຮູບການແຈກຢາຍຄືນ

15.1 ການປະຕິຮູບການແຈກຢາຍຄືນ ສາມາດເອື້ອອຳນວຍ ໃຫ້ແກ່ການເຂົ້າເຖິງທີ່ດິນຢ່າງກ້ວາງຂວາງ ແລະ ເປັນທຳ ແລະ ແກ່ການພັດທະນາຊົນນະບົດແບບຄອບຄຸມ. ກ່ຽວກັບບັນຫານີ້, ບ່ອນທີ່ມີຄວາມເໝາະສົມ ແລະ ອີງໃສ່ເງື່ອນໄຂຂອງປະເທດ, ລັດອາດພິຈາລະນາການຈັດ

4

ສັນທີ່ດິນລັດ, ນຳໃຊ້ກົນໄກແບບສະໝັກໃຈ ແລະ ອີງໃສ່ຕະຫຼາດ ກໍຄືການເວນຄືນເອົາທີ່ດິນ, ພື້ນທີ່ປະມົງ ຫຼື ປ່າໄມ້ຂອງເອກະຊົນ ເພື່ອເປົ້າໝາຍສາທາລະນະປະໂຫຍດ.

15.2 ລັດອາດພິຈາລະນາເພດານຂອງທີ່ດິນ ຊຶ່ງເປັນໜຶ່ງໃນທາງເລືອກດ້ານນະໂຍບາຍ ໃນສະພາບເງື່ອນໄຂການຈັດຕັ້ງປະຕິບັດການປະຕິຮູບການແຈກຢາຍຄືນ.

15.3 ໃນເງື່ອນໄຂຂອງປະເທດ ແລະ ອີງຕາມກົດໝາຍ ແລະ ນິຕິກຳຂອງປະເທດ, ການປະຕິຮູບລະບົບໂດຍການແຈກຢາຍຄືນອາດຖືກພິຈາລະນາ ເພື່ອເຫດຜົນທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ເຊັ່ນ: ຢູ່ບ່ອນທີ່ມີລະດັບການຖືຄອງສິດໜ້າແໜ້ນ ບວກໃສ່ຄວາມທຸກຍາກລະດັບສູງໃນເຂດຊົນນະບົດ ເປັນຜົນໃຫ້ບໍ່ສາມາດເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້, ໂດຍເຄົາລົບສິດຂອງຜູ້ຖືຄອງທີ່ຊອບທຳທັງໝົດ, ທີ່ສອດຄ່ອງກັບເນື້ອໃນຂອງຂໍ້ທີ 15. ການປະຕິຮູບການແຈກຢາຍຄືນຄວນຮັບປະກັນການເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງສະເໝີພາບລະຫວ່າງຜູ້ຍິງ ແລະ ຜູ້ຊາຍ.

15.4 ເມື່ອລັດເລືອກທີ່ຈະຈັດຕັ້ງປະຕິບັດການປະຕິຮູບການແຈກຢາຍຄືນ, ລັດຄວນຮັບປະກັນວ່າການປະຕິຮູບສອດຄ່ອງກັບພັນທະຂອງຕົນພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ກໍຄືພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດຢູ່ພາກພື້ນ ແລະ ສາກົນ. ການປະຕິຮູບຄວນເປັນໄປຕາມລະບຽບກົດໝາຍ ແລະ ຖືກຈັດຕັ້ງປະຕິບັດໄປຕາມຂັ້ນຕອນ ແລະ ກົດໝາຍຂອງຊາດ. ລັດຄວນເອື້ອອຳນວຍໃຫ້ແກ່ການປຶກສາຫາລື, ໂດຍສອດຄ່ອງກັບບົດແນະນຳສະບັບນີ້, ກ່ຽວກັບການແຈກຢາຍຄືນ ລວມທັງສ້າງຄວາມສົມດູນແກ່ຄວາມຕ້ອງການຂອງໝົດທຸກພາກສ່ວນ ແລະ ກ່ຽວກັບວິທີການທີ່ຈະນຳໃຊ້. ຄວນສ້າງການເປັນຫຸ້ນສ່ວນກັນຂຶ້ນ ລະຫວ່າງ ລັດ, ຊຸມຊົນ, ພາກປະຊາສັງຄົມ, ພາກເອກະຊົນ, ອົງການຈັດຕັ້ງຊາວກະສິກອນ ແລະ ຜູ້ຜະລິດອາຫານຂະໜາດນ້ອຍ, ຜູ້ທຳພື້ນທີ່ປະມົງ ແລະ ຜູ້ນຳໃຊ້ປ່າໄມ້ ແລະ ພາກສ່ວນອື່ນໆ. ການປະກອບສ່ວນດ້ານການເງິນ ແລະ ອື່ນໆ ທີ່ຄາດຫວັງຈາກຜູ້ໄດ້ຮັບຜົນປະໂຫຍດຄວນສົມເຫດສົມຜົນ ແລະ ບໍ່ຄວນປ່ອຍໃຫ້ເຂົາເຈົ້າແບກຫາບພາລະໜີ້ສິນທີ່ບໍ່ສາມາດຄຸ້ມຄອງໄດ້. ສຳລັບຜູ້ທີ່ສະລະສິດຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຄວນໄດ້ຮັບການຈ່າຍເງິນໃນມູນຄ່າທຽບເທົ່າຢ່າງທັນການ.

15.5 ເມື່ອເລືອກທີ່ຈະຈັດຕັ້ງປະຕິບັດການປະຕິຮູບການແຈກຢາຍຄືນ, ລັດຄວນກຳນົດຈຸດປະສົງຂອງໂຄງການປະຕິຮູບຢ່າງລະອຽດ ແລະ ລະບຸທີ່ດິນທີ່ຈະຖືກຍົກເວັ້ນຈາກວຽກການແຈກຢາຍຄືນດັ່ງກ່າວ. ຄວນກຳນົດເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດຢ່າງຈະແຈ້ງ ເຊັ່ນຄອບຄົວລວມທັງຜູ້ເຮັດສວນຄົວ, ແມ່ຍິງ, ຜູ້ທີ່ມາຕັ້ງຖິ່ນຖານຢູ່ຢ່າງບໍ່ເປັນທາງການ, ຜູ້ລ້ຽງສັດ, ກຸ່ມຄົນທີ່ເສຍປຽບໂດຍພື້ນຖານ, ກຸ່ມຄົນທີ່ດ້ອຍໂອກາດ, ຊາວໜຸ່ມ, ຊາວພື້ນເມືອງ, ພວກເກັບຜົນຈາກປ່າ ແລະ ຜູ້ຜະລິດອາຫານຂະໜາດນ້ອຍ.

15.6 ເມື່ອລັດເລືອກທີ່ຈະເຮັດການປະຕິຮູບການແຈກຢາຍຄືນ, ລັດຄວນສ້າງນະໂຍບາຍ ແລະ ກົດໝາຍ ໂດຍຜ່ານຂັ້ນຕອນແບບມີສ່ວນຮ່ວມ ເພື່ອເຮັດໃຫ້ມີຄວາມຍືນຍົງ. ລັດຄວນຮັບປະກັນວ່ານະໂຍບາຍ ແລະ ກົດໝາຍດັ່ງກ່າວນັ້ນສາມາດຊ່ວຍຜູ້ໄດ້ຮັບຜົນປະໂຫຍດ ບໍ່ວ່າຈະເປັນຊຸມຊົນ, ຄອບຄົວ ຫຼື ບຸກຄົນ ໃຫ້ມີມາດຕະຖານການດຳລົງຊີບທີ່ພຽງພໍ ຈາກທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ເຂົາເຈົ້າໄດ້ມາ ແລະ ຮັບປະກັນຄວາມສະເໝີພາບລະຫວ່າງຍິງຊາຍໃນການປະຕິຮູບການແຈກຢາຍຄືນ. ລັດຄວນປັບປຸງນະໂຍບາຍ ຊຶ່ງອາດຍັງກີດກັນ ການບັນລຸຜົນກໍຄືຄວາມຍືນຍົງຂອງໝາກຜົນທີ່ຕັ້ງໃຈໄວ້ຂອງການປະຕິຮູບການແຈກຢາຍຄືນ.

15.7 ໃນເວລາພິຈາລະນາການປະຕິຮູບການແຈກຢາຍຄືນ, ຖ້າຈຳເປັນ, ລັດອາດດຳເນີນການປະເມີນຜົນກ່ຽວກັບຜົນກະທົບດ້ານບວກ ແລະ ດ້ານລົບທີ່ອາດເກີດຂຶ້ນຈາກການປະຕິຮູບດັ່ງກ່າວຕໍ່ກັບສິດຄອບຄອງນຳໃຊ້, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການປະຕິບັດຕົວຈິງຢ່າງຕັ້ງໜ້າ ຕໍ່ສິດທິຕໍ່ການມີອາຫານພຽງພໍ, ການດຳລົງຊີວິດ ແລະ ສິ່ງແວດລ້ອມ. ຂັ້ນຕອນການປະ

4

ເມີນນີ້ຄວນຖືກດຳເນີນໃຫ້ສອດຄ່ອງກັບຫຼັກການຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳສະບັບນີ້. ການປະເມີນຜົນອາດຖືກນຳໃຊ້ເປັນພື້ນຖານໃນການກຳນົດມາດຕະການທີ່ຈຳເປັນເພື່ອຊ່ວຍເຫຼືອຜູ້ໄດ້ຮັບຜົນປະໂຫຍດ ແລະ ປັບປຸງໂຄງການແຈກຢາຍຄືນ.

15.8 ລັດຄວນຮັບປະກັນວ່າໂຄງການປະຕິຮູບການແຈກຢາຍຄືນ ມີມາດຕະການເຕັມຮູບແບບໃນການຊ່ວຍເຫຼືອທີ່ຈຳເປັນແກ່ຜູ້ໄດ້ຮັບຜົນປະໂຫຍດ ເຊັ່ນ: ການເຂົ້າເຖິງລະບົບສິນເຊື່ອ, ການປະກັນຜົນລະປູກ, ປັດໄຈການຜະລິດ, ຕະຫຼາດ, ການຊ່ວຍເຫຼືອທາງດ້ານວິຊາການ ໃນການຜັນຂະຫຍາຍໄປສູ່ຊົນນະບົດ, ການພັດທະນາກະສິກຳ ແລະ ທີ່ຢູ່ອາໃສ. ການໃຫ້ບໍລິການສະໜັບສະໜູນ ຄວນປະສານສົມທົບກັບການເຄື່ອນໄຫວບົນທີ່ດິນ ຂອງຜູ້ໄດ້ຮັບປະໂຫຍດ. ຕົ້ນທຶນເຕັມຂອງການປະຕິຮູບທີ່ດິນ ລວມທັງຕົ້ນທຶນຂອງການບໍລິການສະໜັບສະໜູນ ຄວນຖືກກຳນົດໄວ້ລ່ວງໜ້າ ແລະ ລວມເຂົ້າໃນງົບປະມານທີ່ກ່ຽວຂ້ອງ.

15.9 ລັດຄວນຈັດຕັ້ງປະຕິບັດການປະຕິຮູບການແຈກຢາຍຄືນ ໂດຍຜ່ານຂັ້ນຕອນ ແລະ ວິທີການທີ່ໂປ່ງໃສ, ແບບມີສ່ວນຮ່ວມ ແລະ ມີຄວາມຮັບຜິດຊອບ. ພາກສ່ວນທີ່ໄດ້ຮັບຜົນກະທົບທັງໝົດຄວນໄດ້ເຫັນດີເຫັນພ້ອມ ກັບຂັ້ນຕອນ ແລະ ການຊົດເຊີຍທີ່ກຳນົດໄວ້ ໂດຍອີງຕາມກົດໝາຍຂອງຊາດ ແລະ ເນື້ອໃນຂອງຂໍ້ 16. ທຸກພາກສ່ວນທີ່ໄດ້ຮັບຜົນກະທົບ ລວມທັງກຸ່ມຜູ້ດ້ອຍໂອກາດ ຄວນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການປະຕິຮູບຢ່າງຄົບຖ້ວນ ແລະ ຈະແຈ້ງ ລວມທັງຜ່ານຂໍ້ຄວາມແນໃສ່ບົດບາດຍິງຊາຍ. ຜູ້ໄດ້ຮັບຜົນປະໂຫຍດຄວນຖືກຄັດເລືອກຜ່ານຂັ້ນຕອນເປີດເຜີຍ ແລະ ເຂົາເຈົ້າຄວນໄດ້ຮັບສິດຄອບຄອງນຳໃຊ້ທີ່ໝັ້ນຄົງ ຊຶ່ງຖືກບັນທຶກໄວ້ຢ່າງເປີດເຜີຍ. ການເຂົ້າເຖິງກົນໄກການແກ້ໄຂຂໍ້ຂັດແຍ່ງຄວນຖືກກຳນົດໄວ້ໃນກົດໝາຍຂອງຊາດ. ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ ໃນການດຳເນີນໂຄງການປະຕິຮູບການແຈກຢາຍຄືນ ໂດຍສະເພາະເນັ້ນໃສ່ຄວາມໂປ່ງໃສ ແລະ ການມີສ່ວນຮ່ວມໃຫ້ຫຼາຍຂຶ້ນ.

15.10 ໂດຍການເຂົ້າຮ່ວມຂອງພາກສ່ວນກ່ຽວຂ້ອງ, ລັດຄວນຕິດຕາມ ແລະ ປະເມີນຜົນໄດ້ຮັບຂອງໂຄງການປະຕິຮູບການແຈກຢາຍຄືນ ລວມທັງນະໂຍບາຍສະໜັບສະໜູນທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກຳນົດໄວ້ຢູ່ໃນວັກທີ 15.8 ແລະ ຜົນກະທົບຕໍ່ການເຂົ້າເຖິງທີ່ດິນ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ຂອງທັງຜູ້ຍິງ ແລະ ຜູ້ຊາຍ , ແລະ ເມື່ອຈຳເປັນ, ລັດຄວນນຳໃຊ້ມາດຕະການແກ້ໄຂໃຫ້ຖືກຕ້ອງ.

## 16. ການເວນຄືນ ແລະ ການຊົດເຊີຍ

16.1 ພາຍໃຕ້ກົດໝາຍ ແລະ ນິຕິກຳຂອງຊາດ ແລະ ໂດຍສອດຄ່ອງກັບເງື່ອນໄຂຂອງປະເທດ, ລັດຄວນເວນຄືນໃນກໍລະນີມີຄວາມຈຳເປັນຕ້ອງໃຊ້ສິດຄອບຄອງນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ເຂົ້າໃນເປົ້າໝາຍສາທາລະນະປະໂຫຍດເທົ່ານັ້ນ. ລັດຄວນກຳນົດແນວຄວາມຄິດຂອງເປົ້າໝາຍສາທາລະນະປະໂຫຍດຢ່າງຈະແຈ້ງຢູ່ໃນກົດໝາຍ ເພື່ອໃຫ້ສາມາດທົບທວນລະບຽບກົດໝາຍ. ລັດຄວນຮັບປະກັນວ່າມາດຕະການທັງໝົດສອດຄ່ອງກັບກົດໝາຍຂອງຊາດ ກໍຄືພັນທະທີ່ມີຢູ່ຂອງຕົນພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ມີຜົນປະຕິບັດໃນພາກພື້ນແລະສາກົນ. ລັດຄວນເຄົາລົບຜູ້ຖືສິດຄອບຄອງນຳໃຊ້ທີ່ຊອບທຳທັງໝົດ ໂດຍສະເພາະກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ ໂດຍເວນຄືນຊັບພະຍາກອນທີ່ຈຳເປັນຂັ້ນຕ່ຳສຸດ ແລະ ໃຫ້ການຊົດເຊີຍທີ່ເປັນທຳໃຫ້ເຂົາເຈົ້າຢ່າງທັນການ ອີງຕາມກົດໝາຍຂອງຊາດ.

16.2 ລັດຄວນຮັບປະກັນວ່າການວາງແຜນ ແລະ ຂັ້ນຕອນສຳລັບການເວນຄືນ ໂປ່ງໃສ ແລະ ແບບມີ

ສ່ວນຮ່ວມ. ບຸກຄົນທີ່ມີແນວໂນ້ມຈະໄດ້ຮັບຜົນກະທົບຄວນຖືກລະບຸ ແລະ ຖືກແຈ້ງໃຫ້ຊາບຢ່າງຖືກຕ້ອງ ແລະ ໄດ້ມີການປຶກສາຫາລືກັບເຂົາເຈົ້າໃນທຸກຂັ້ນຕອນ. ເພື່ອໃຫ້ສອດຄ່ອງກັບຫຼັກການຂອງບົດແນະນຳສະບັບນີ້,ການປຶກສາຫາລືຄວນສະໜອງຂໍ້ມູນກ່ຽວກັບວິທີທາງເລືອກອື່ນທີ່ເປັນໄປໄດ້ ເພື່ອບັນລຸເປົ້າໝາຍສາທາລະນະປະໂຫຍດ ແລະ ຄວນຄຳນຶງເຖິງຍຸດທະສາດຈຳກັດການລົບກວນການດຳລົງຊີວິດໃຫ້ໜ້ອຍສຸດ.ລັດຄວນມີຄວາມລະອຽດອ່ອນກໍລະນີພື້ນທີ່ສະເໜີການເວນຄືນຢູ່ໃນເຂດວັດທະນະທຳ, ສາດສະໜາ ຫຼື ມີຄວາມສຳຄັນກັບສິ່ງແວດລ້ອມ ຫຼື ບ່ອນທີ່ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ມີຄວາມສຳຄັນເປັນພິເສດ ຕໍ່ການດຳລົງຊີວິດຂອງຜູ້ທຸກຍາກ ແລະ ຜູ້ມີຄວາມສ່ຽງ.

16.3 ລັດຄວນຮັບປະກັນການປະເມີນມູນຄ່າທີ່ເປັນທຳ ແລະ ການຊົດເຊີຍຢ່າງທັນການ ອີງຕາມກົດໝາຍຂອງຊາດ. ໃນບັນດາຮູບແບບຕ່າງໆ, ການຊົດເຊີຍອາດຈະໃຫ້ເປັນເງິນສົດ, ເປັນສິດຢູ່ບ່ອນອື່ນປ່ຽນແທນ ຫຼື ທັງສອງຢ່າງພ້ອມກັນ.

16.4 ໃນຂອບເຂດທີ່ມີຊັບພະຍາກອນທີ່ເອື້ອອຳນວຍ, ລັດຄວນຮັບປະກັນວ່າອົງການຈັດຕັ້ງປະຕິບັດ ມີບຸກຄະລາກອນ, ມີສະຖານທີ່, ມີງົບປະມານ ແລະ ມີຄວາມອາດສາມາດໃນຮູບແບບອື່ນໆເພື່ອຈັດຕັ້ງປະຕິບັດ.

16.5 ເມື່ອບໍ່ມີຄວາມຈຳເປັນນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຍ້ອນມີການປ່ຽນແປງແຜນການ, ລັດຄວນໃຫ້ຜູ້ຖືສິດເດີມມີໂອກາດໄດ້ຮັບຊັບພະຍາກອນດັ່ງກ່າວຄືນ ເປັນຜູ້ທຳອິດ. ໃນກໍລະນີດັ່ງກ່າວນີ້, ການໄດ້ຄືນມາຂອງຊັບພະຍາກອນຄວນຄຳນຶງເຖິງຈຳນວນການຊົດເຊີຍການເວນຄືນທີ່ໄດ້ຮັບແລ້ວ.

16.6 ທຸກພາກສ່ວນຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ ໂດຍສະເພາະດ້ວຍການນຳໃຊ້ມູນຄ່າທີ່ປະເມີນຢ່າງເປັນກາງ, ຂັ້ນຕອນແລະ ການບໍລິການທີ່ໂປ່ງໃສ ແລະ ໄດ້ຮັບການມອບອຳນາດ, ແລະ ມີສິດໃນການອຸທອນ.

16.7 ເມື່ອພິຈາລະນາວ່າໃຫ້ອອກຈາກພື້ນທີ່ມີເຫດມີຜົນ ຍ້ອນເປົ້າໝາຍສາທາລະນະປະໂຫຍດພາໃຫ້ມີການເວນຄືນ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້; ລັດຄວນປະຕິບັດຕໍ່ຜູ້ທີ່ຖືກຜົນກະທົບທັງໝົດໂດຍສອດຄ່ອງກັບພັນທະທີ່ກ່ຽວຂ້ອງຂອງຕົນ ເພື່ອເຄົາລົບ, ປົກປ້ອງ ແລະ ປະຕິບັດສິດທິມະນຸດ.

16.8 ກ່ອນທີ່ຈະໃຫ້ອອກຈາກພື້ນທີ່ ຫຼື ປ່ຽນການນຳໃຊ້ທີ່ດິນ ຊຶ່ງອາດເປັນການເຮັດໃຫ້ບຸກຄົນ ແລະ ຊຸມຊົນ ບໍ່ສາມາດເຂົ້າຫາແຫຼ່ງຊັບພະຍາກອນການຜະລິດຂອງຕົນ, ລັດຄວນຊອກຫາທາງເລືອກທີ່ເປັນໄປໄດ້ອື່ນໆ ໂດຍການປຶກສາຫາລືກັບພາກສ່ວນທີ່ໄດ້ຮັບຜົນກະທົບ ຊຶ່ງສອດຄ່ອງກັບຫຼັກການຂອງບົດແນະນຳສະບັບນີ້ ເພື່ອຫຼີກລຽງ ຫຼື ຈຳກັດໃຫ້ໜ້ອຍສຸດຕໍ່ຄວາມຈຳເປັນໃຫ້ອອກຈາກພື້ນທີ່.

16.9 ການໃຫ້ອອກຈາກພື້ນທີ່ ແລະ ການຍົກຍ້າຍຈັດສັນບ່ອນຢູ່ອາໃສໃໝ່ ບໍ່ຄວນເປັນສາເຫດໃຫ້ບຸກຄົນຂາດທີ່ຢູ່ອາໄສ ແລະ ສ່ຽງທີ່ຈະມີການລະເມີດສິດທິມະນຸດ. ເມື່ອຜູ້ທີ່ຖືກຜົນກະທົບເຫຼົ່ານັ້ນບໍ່ສາມາດຫາພື້ນທີ່ດ້ວຍຕົນເອງ ແລະ ໃນກໍລະນີມີຊັບພະຍາກອນທີ່ເອື້ອອຳນວຍ, ລັດຄວນມີມາດຕະການທີ່ເໝາະສົມເພື່ອສະໜອງທີ່ຢູ່ອາໄສ, ການຍົກຍ້າຍຈັດສັນ ຫຼື ໃຫ້ເຂົາເຈົ້າເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ທີ່ສາມາດໃຫ້ຜົນຜະຫຼິດ ຕາມແຕ່ລະກໍລະນີ.

4

ພາກ 5

# ການບໍລິຫານການຄອບຄອງນຳໃຊ້

ພາກນີ້ແມ່ນເວົ້າເຖິງການຄຸ້ມຄອງບໍລິຫານ ໃນການບໍລິຫານການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຊຶ່ງຕິດພັນກັບການບັນທຶກສິດຄອບຄອງນຳໃຊ້, ການປະເມີນມູນຄ່າ, ການເກັບພາສີ, ການວາງແຜນຜັງຢ່າງມີການຄຸ້ມຄອງ, ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບສິດຄອບຄອງນຳໃຊ້ ແລະ ບັນຫາທີ່ຂ້າມເຂດຊາຍແດນ.

## 17. ການບັນທຶກສິດຄອບຄອງນຳໃຊ້

17.1 ລັດຄວນມີລະບົບການບັນທຶກສິດຄອບຄອງນຳໃຊ້ຂອງບຸກຄົນ (ເຊັ່ນ: ການຂຶ້ນທະບຽນ, ການເຮັດສຳມະໂນຕາດິນ ແລະ ລະບົບການອະນຸຍາດ) ເພື່ອບັນທຶກສິດຄອບຄອງນຳໃຊ້ຂອງບຸກຄົນ ແລະ ຂອງລວມໝູ່ ແນໃສ່ເພີ່ມທະວີຄວາມໝັ້ນຄົງຂອງສິດຄອບຄອງນຳໃຊ້ ລວມທັງສິດທີ່ເປັນຂອງລັດ, ເອກະຊົນ ແລະ ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ; ແລະ ເພື່ອການເຄື່ອນໄຫວທາງສັງຄົມທ້ອງຖິ່ນ ແລະ ຂອງຕະຫຼາດ. ລະບົບດັ່ງກ່າວນີ້ ຄວນບັນທຶກ, ຮັກສາ ແລະ ເຜີຍແຜ່ສິດ ແລະ ໜ້າທີ່ ໃນການຄອບຄອງນຳໃຊ້ ລວມທັງຜູ້ທີ່ຖືສິດ ແລະ ໜ້າທີ່ໃນການຄອບຄອງນຳໃຊ້ເຫຼົ່ານັ້ນ, ພ້ອມດ້ວຍຕອນດິນ ຫຼື ການຖືສິດໃນທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ພົວພັນກັບສິດ ແລະ ໜ້າທີ່ດັ່ງກ່າວ.

17.2 ລັດຄວນມີບັນດາລະບົບບັນທຶກຂໍ້ມູນທີ່ເໝາະສົມກັບການນຳໃຊ້ສະເພາະດ້ານ, ເຊິ່ງລວມທັງຄວາມພ້ອມທາງດ້ານບຸກຄະລາກອນ ແລະ ການເງິນ. ວິທີການດ້ານວັດທະນະທຳ-ສັງຄົມທີ່ເໝາະສົມສຳລັບບັນທຶກສິດ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ຄວນຖືກສ້າງຂຶ້ນ ແລະ ນຳໃຊ້. ເພື່ອປັບປຸງໃຫ້ມີຄວາມໂປ່ງໃສ ແລະ ຄວາມສາມາດເຂົ້າກັນໄດ້ກັບແຫຼ່ງຂໍ້ມູນອື່ນໆ ເພື່ອການວາງແຜນຜັງພື້ນທີ່ ແລະ ເພື່ອຈຸດປະສົງອື່ນ, ແຕ່ລະປະເທດ ຄວນພະຍາຍາມພັດທະນາໂຄງສ້າງຄົບຊຸດ ຊຶ່ງລວມເອົາລະບົບບັນທຶກທີ່ມີຢູ່ ແລະ ລະບົບຂໍ້ມູນຂ່າວສານດ້ານແຜນຜັງອື່ນໆ. ໃນແຕ່ລະເຂດອຳນາດການປົກຄອງ, ການບັນທຶກສິດຄອບຄອງນຳໃຊ້ຂອງລັດ ແລະ ຂະແໜງການລັດ, ຂະແໜງການເອກະຊົນ ແລະ ຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ຄວນໄດ້ຖືກເກັບກຳໄວ້ໃນລະບົບການບັນທຶກຂໍ້ມູນຄົບຊຸດ. ເມື່ອໃດກໍຕາມທີ່ບໍ່ສາມາດບັນທຶກສິດຄອບຄອງນຳໃຊ້ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ຫຼື ການຄອບຄອງດ້ວຍການຕັ້ງຖິ່ນຖານຢ່າງບໍ່ເປັນທາງການ, ຄວນເອົາໃຈໃສ່ເປັນພິເສດ ໃນການປ້ອງກັນການຂຶ້ນທະບຽນສິດທີ່ຊ້ຳຊ້ອນກັນໃນເຂດນັ້ນ.

17.3 ລັດຄວນພະຍາຍາມເພື່ອຮັບປະກັນວ່າທຸກຄົນສາມາດບັນທຶກສິດຄອບຄອງຂອງເຂົາເຈົ້າ ແລະ ໄດ້ຮັບຂໍ້ມູນຂ່າວສານໂດຍບໍ່ມີການຈຳແນກບົນພື້ນຖານໃດໆ. ຢູ່ບ່ອນທີ່ເໝາະສົມ, ອົງການ

ຈັດຕັ້ງປະຕິບັດ ເຊັ່ນ: ພາກສ່ວນທະບຽນທີ່ດິນ ຄວນສ້າງສູນບໍລິການ ຫຼື ຫ້ອງການເຄື່ອນທີ່ ໂດຍຄຳນຶງເຖິງການເຂົ້າເຖິງຂອງແມ່ຍິງ, ຜູ້ທຸກຍາກ ແລະ ກຸ່ມທີ່ມີຄວາມສ່ຽງ. ລັດຄວນພິຈາລະນານຳໃຊ້ນັກວິຊາການທີ່ຢູ່ທ້ອງຖິ່ນ ເຊັ່ນ: ທະນາຍຄວາມ, ນາຍທະບຽນສານ, ນັກສຳຫຼວດວັດແທກ ແລະ ນັກສັງຄົມວິທະຍາ ເພື່ອສົ່ງຂໍ້ມູນຂ່າວສານກ່ຽວກັບສິດຄອບຄອງນຳໃຊ້ໃຫ້ແກ່ສາທາລະນະ.

17.4 ອົງການຈັດຕັ້ງປະຕິບັດຄວນວາງຂັ້ນຕອນງ່າຍດາຍ ແລະ ເທັກໂນໂລຢີທີ່ເໝາະສົມກັບທ້ອງຖິ່ນ ເພື່ອຫຼຸດຜ່ອນຕົ້ນທຶນ ແລະ ໄລຍະເວລາທີ່ໃຊ້ໃນການໃຫ້ການບໍລິການ. ຄວາມຊັດເຈນທາງດ້ານທີ່ຕັ້ງພື້ນທີ່ສຳລັບຕອນດິນ ແລະ ຫົວໜ່ວຍຮູບຮ່າງອື່ນໆ ຄວນດີພໍສຳລັບການລະບຸຄືນ ຕາມຄວາມຕ້ອງການຂອງທ້ອງຖິ່ນ, ໂດຍສາມາດໃຫ້ຄວາມຊັດເຈນເພີ້ມຂຶ້ນຖ້າຕ້ອງການໃນແຕລະໄລຍະ. ເພື່ອເອື້ອອຳນວຍໃຫ້ແກ່ການນຳໃຊ້ຂໍ້ມູນການບັນທຶກສິດຄອບຄອງນຳໃຊ້, ອົງການຈັດຕັ້ງປະຕິບັດຄວນເຊື່ອມຂໍ້ມູນກ່ຽວກັບສິດ, ເຈົ້າຂອງສິດດັ່ງກ່າວ ແລະ ຫົວໜ່ວຍຮູບຮ່າງທີ່ຕິດພັນກັບສິດເຫຼົ່ານັ້ນ. ຂໍ້ມູນການບັນທຶກຄວນໃສ່ສາລະບານຕາມຕົວເລກຕອນດິນກໍຄືຈັດລຽງຕາມຜູ້ຖືສິດຄອບຄອງນຳໃຊ້ ເພື່ອໃຫ້ສາມາດເຫັນໄດ້ສິດທີ່ຊ້ຳຊ້ອນກັນ. ໃນຖານະເປັນສ່ວນໜຶ່ງຂອງການແລກປ່ຽນຂໍ້ມູນຂ່າວສານທາງສາທາລະນະຢ່າງກ້ວາງຂວາງ, ການບັນທຶກສິດຄອບຄອງນຳໃຊ້ ຄວນຈະມີຢູ່ໃນໜ່ວຍງານຂອງລັດ ແລະ ລັດຖະບານຂັ້ນທ້ອງຖິ່ນ ເພື່ອປັບປຸງການບໍລິການຂອງເຂົາເຈົ້າ. ຂໍ້ມູນຂ່າວສານຄວນຖືກແລກປ່ຽນ ຕາມມາດຕະຖານແຫ່ງຊາດ, ແລະ ບັນຈຸຂໍ້ມູນທີ່ແຍກຍ່ອຍກ່ຽວກັບສິດຄອບຄອງນຳໃຊ້.

17.5 ລັດຄວນຮັບປະກັນວ່າຂໍ້ມູນຂ່າວສານກ່ຽວກັບສິດຄອບຄອງນຳໃຊ້ ສາມາດສະໜອງໃຫ້ໝົດທຸກຄົນໄດ້ ພາຍໃຕ້ຂໍ້ຈຳກັດດ້ານສິດທີ່ສ່ວນບຸກຄົນ. ຂໍ້ຈຳກັດດັ່ງກ່າວບໍ່ຄວນເປັນການປ້ອງກັນທີ່ບໍ່ຈຳເປັນຕໍ່ການກວດສອບຂອງປະຊາຊົນ ເພື່ອຊອກເຫັນການສໍ້ໂກງ ແລະ ການປ່ຽນໂອນທີ່ຜິດກົດໝາຍ. ລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງໃນການບັນທຶກສິດຄອບຄອງນຳໃຊ້ ໂດຍເຜີຍແຜ່ຢ່າງກ້ວາງຂວາງ ກ່ຽວກັບຂະບວນການ, ຂໍ້ຮຽກຮ້ອງ, ຄ່າທຳນຽມ ແລະ ການຍົກເວັ້ນຄ່າໃຊ້ຈ່າຍທຸກຢ່າງ, ແລະ ກຳນົດເວລາສຳລັບຕອບສະໜອງຕໍ່ການສະເໜີຂໍຮັບບໍລິການ.

## 18. ການປະເມີນມູນຄ່າ

18.1 ລັດຄວນຮັບປະກັນວ່າລະບົບທີ່ເໝາະສົມໄດ້ຖືກນຳໃຊ້ສຳລັບການປະເມີນມູນຄ່າສິດຄອບຄອງນຳໃຊ້ ເພື່ອຈຸດປະສົງສະເພາະຢ່າງເປັນທຳ ແລະ ທັນເວລາ ເຊັ່ນ: ການເຄື່ອນໄຫວຂອງຕະຫຼາດ, ໃຊ້ເປັນຫຼັກຊັບຄ້ຳປະກັນ, ການປ່ຽນໂອນສິດຄອບຄອງນຳໃຊ້ ທີ່ເປັນຜົນຈາກການລົງທຶນ, ການເວນຄືນ ແລະ ການເກັບພາສີອາກອນ. ລະບົບດັ່ງກ່າວຄວນສົ່ງເສີມຢ່າງກວ້າງຂວາງຕໍ່ຈຸດປະສົງດ້ານສັງຄົມ, ເສດຖະກິດ, ສະພາບແວດລ້ອມ ແລະ ການພັດທະນາແບບຍືນຍົງ.

18.2 ບັນດານະໂຍບາຍ ແລະ ກົດໝາຍກ່ຽວກັບການປະເມີນມູນຄ່າ ຄວນມຸ້ງໝາຍເພື່ອຮັບປະກັນວ່າລະບົບປະເມີນມູນຄ່າໄດ້ຄຳນຶງເຖິງມູນຄ່າທີ່ບໍ່ແມ່ນທາງຕະຫຼາດ ເຊັ່ນ: ມູນຄ່າດ້ານສັງຄົມ, ວັດທະນະທຳ, ສາດສະໜາ, ຈິດວິນຍານ ແລະ ສະພາບແວດລ້ອມ ໃນບ່ອນທີ່ສາມາດໃຊ້ໄດ້.

18.3 ລັດຄວນພັດທະນານະໂຍບາຍ ແລະ ກົດໝາຍທີ່ສົ່ງເສີມ ແລະ ຮຽກຮ້ອງຄວາມໂປ່ງໃສໃນການປະເມີນມູນຄ່າສິດຄອບຄອງນຳໃຊ້. ລາຄາຂາຍ ແລະ ຂໍ້ມູນກ່ຽວຂ້ອງອື່ນໆຄວນຖືກບັນທຶກ, ວິເຄາະ ແລະ ເຮັດໃຫ້ສາມາດເຂົ້າເຖິງໄດ້ ເພື່ອເປັນພື້ນຖານສຳລັບການປະເມີນມູນຄ່າທີ່ຖືກຕ້ອງ ແລະ ໜ້າເຊື່ອຖື.

5

18.4 ລັດ ແລະ ພາກສ່ວນອື່ນໆ ຄວນພັດທະນາ ແລະ ເຜີຍແຜ່ມາດຕະຖານແຫ່ງຊາດ ສຳລັບການປະເມີນມູນຄ່າ ເພື່ອເປົ້າໝາຍຂອງລັດຖະບານ, ເປົ້າໝາຍທາງການຄ້າ ແລະ ເປົ້າໝາຍອື່ນໆ. ມາດຕະຖານແຫ່ງຊາດຄວນສອດຄ່ອງກັບມາດຕະຖານສາກົນທີ່ກ່ຽວຂ້ອງ. ການຝຶກອົບຮົມພະນັກງານຄວນລວມເອົາທັງວິທີການ ແລະ ບັນດາມາດຕະຖານສາກົນ.

18.5 ອົງການຈັດຕັ້ງປະຕິບັດ ຄວນເຮັດໃຫ້ສາທາລະນະຊົນ ສາມາດເຂົ້າເຖິງຂໍ້ມູນການປະເມີນມູນຄ່າ ແລະ ການວິເຄາະ ອີງຕາມມາດຕະຖານແຫ່ງຊາດ. ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງໃນການປະເມີນມູນຄ່າ ດ້ວຍຂໍ້ມູນ ແລະ ວິທີການ ທີ່ໂປ່ງໃສ ໃນການບໍລິຫານຊັບພະຍາກອນຂອງລັດ ແລະ ການຊົດເຊີຍ, ແລະ ໃນບັນຊີຂອງບໍລິສັດ ແລະ ການໃຫ້ກູ້ຢືມ.

## 19. ການເກັບພາສີອາກອນ

19.1 ລັດມີອຳນາດສ້າງລາຍຮັບຈາກການເກັບພາສີອາກອນທີ່ກ່ຽວຂ້ອງກັບສິດຄອບຄອງນຳໃຊ້ ເພື່ອປະ ກອບສ່ວນເຂົ້າໃນການບັນລຸຈຸດປະສົງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມໃນວົງກ້ວາງ. ຈຸດປະສົງເຫຼົ່ານີ້ອາດລວມທັງການສົ່ງເສີມການລົງທຶນ ຫຼື ການປ້ອງກັນຜົນກະທົບທີ່ບໍ່ເພິ່ງປາດຖະໜາຊຶ່ງອາດຈະເກີດຂຶ້ນ ເຊັ່ນ: ຈາກການເກັງກຳໄລ ແລະ ການສະສົມກຳມະສິດ ແລະ ສິດຄອບຄອງນຳໃຊ້ອື່ນໆ. ພາສີອາກອນຄວນຊຸກຍູ້ພຶດຕິກຳທີ່ເປັນທີ່ຕ້ອງການຂອງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ເຊັ່ນ: ການຈົດທະບຽນການປ່ຽນໂອນ ຫຼື ການແຈ້ງມູນຄ່າເຕັມຂອງການຂາຍ.

19.2 ລັດຄວນພະຍາຍາມພັດທະນານະໂຍບາຍ, ກົດໝາຍ ແລະ ກອບດ້ານການຈັດຕັ້ງ ເພື່ອວາງລະບຽບຄວບຄຸມທຸກໆດ້ານຂອງການເກັບພາສີອາກອນ ຈາກສິດຄອບຄອງນຳໃຊ້. ນະໂຍບາຍ ແລະ ກົດໝາຍພາສີອາກອນ ຄວນຖືກນຳໃຊ້ໃນບ່ອນທີ່ເໝາະສົມ ເພື່ອສາມາດຕອບສະໜອງດ້ານການເງິນທີ່ມີປະສິດທິຜົນ ໃຫ້ແກ່ລັດຖະບານຂັ້ນທ້ອງຖິ່ນ ແລະ ໃຫ້ແກ່ຜູ້ສະໜອງບໍລິການ ແລະ ພື້ນຖານໂຄງລ່າງ ຢູ່ຂັ້ນທ້ອງຖິ່ນ.

19.3 ລັດຄວນບໍລິຫານພາສີອາກອນຢ່າງມີປະສິດທິພາບ ແລະ ໂປ່ງໃສ. ພະນັກງານຂອງອົງການຈັດຕັ້ງປະຕິບັດຄວນໄດ້ຮັບການຝຶກອົບຮົມ ທີ່ລວມເອົາວິທີດຳເນີນການ. ພາສີອາກອນຄວນອີງໃສ່ມູນຄ່າທີ່ເໝາະສົມ. ການປະເມີນຜົນ ຕໍ່ການປະເມີນມູນຄ່າ ແລະ ຕໍ່ມູນຄ່າພາສີອາກອນທີ່ຕ້ອງຈ່າຍ ຄວນເຮັດເປັນສາທະລະນະ. ລັດຄວນໃຫ້ສິດແກ່ຜູ້ເສັຍພາສີອາກອນໃນການອຸທອນຕໍ່ການປະເມີນມູນຄ່າ. ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງໃນການບໍລິຫານການເກັບພາສີອາກອນ ໂດຍໃຫ້ມີຄວາມໂປ່ງໃສໃນການນຳໃຊ້ມູນຄ່າທີ່ໄດ້ປະເມີນຢ່າງເປັນກາງຫຼາຍຂຶ້ນ.

5

## 20. ການວາງແຜນຜັງພື້ນທີ່ແບບຄວບຄຸມ

20.1 ການວາງແຜນຜັງພື້ນທີ່ແບບຄວບຄຸມມີຜົນກະທົບຕໍ່ສິດຄອບຄອງນຳໃຊ້ ໂດຍການຈຳກັດຕາມກົດໝາຍຕໍ່ການນຳໃຊ້ສິດເຫຼົ່ານັ້ນ. ລັດຄວນດຳເນີນການວາງແຜນຜັງພື້ນທີ່ແບບຄວບຄຸມ, ພ້ອມທັງຕິດຕາມ ແລະ ບັງຄັບປະຕິບັດແຜນດັ່ງກ່າວ, ລວມທັງການພັດທະນາເຂດດິນແດນຢ່າງສົມດູນ ແລະ ຍືນຍົງ ດ້ວຍວິທີທີ່ສົ່ງເສີມຈຸດປະສົງຂອງບົດແນະນຳສະບັບນີ້. ກ່ຽວກັບບັນຫານີ້, ການວາງແຜນຜັງພື້ນທີ່ ຄວນກົມກຽວ ແລະ ເຊື່ອມປະສານບັນດາຈຸດປະສົງ ໃນການນຳໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້.

20.2 ໂດຍການປຶກສາຫາລື ແລະ ການມີສ່ວນຮ່ວມ, ລັດຄວນພັດທະນາ ແລະ ເຜີຍແຜ່ ບັນດານະໂຍບາຍ ແລະ ກົດໝາຍກ່ຽວກັບການວາງແຜນຜັງພື້ນທີ່ແບບຄວບຄຸມ ທີ່ໃຫ້ຄວາມສຳຄັນຕໍ່ບົດບາດຍິງຊາຍ. ບ່ອນທີ່ເໝາະສົມ, ລະບົບການວາງແຜນທີ່ເປັນທາງການ ຄວນພິຈາລະນາ ວິທີການໃນການວາງແຜນ ແລະ ການພັດທະນາເຂດດິນແດນ ທີ່ນຳໃຊ້ໂດຍຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ ຕາມປະເພນີ, ແລະ ບັນດາຂະບວນການຕັດສິນໃຈພາຍໃນຊຸມຊົນເຫຼົ່ານັ້ນ.

20.3 ລັດຄວນຮັບປະກັນວ່າການວາງແຜນຜັງພື້ນທີ່ແບບຄວບຄຸມ ໄດ້ຖືກດຳເນີນໃນລັກສະນະ ທີ່ຮັບຮູ້ຄວາມສຳພັນທີ່ເຊື່ອມໂຍງກັນລະຫວ່າງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ແລະ ການນຳໃຊ້ຊັບພະຍາກອນເຫຼົ່ານີ້, ລວມທັງດ້ານບົດບາດຍິງຊາຍໃນການນຳໃຊ້ດັ່ງກ່າວ. ລັດຄວນພະຍາຍາມສ້າງຄວາມກົມກຽວ ແລະ ໃຫ້ບຸລິມະສິດຕໍ່ສິດຜົນປະໂຫຍດຂອງສາທາລະນະຊົນ, ຊຸມຊົນ ແລະ ພາກເອກະຊົນ ແລະ ຕອບສະໜອງຄວາມຕ້ອງການໃນການນຳໃຊ້ທີ່ຫຼາກຫຼາຍ ເຊັ່ນ: ດ້ານຊົນນະບົດ, ກະສິກຳ, ການດຳລົງຊີວິດແບບພະເນຈອນ, ຕົວເມືອງ ແລະ ສິ່ງແວດລ້ອມ. ການວາງແຜນຜັງພື້ນທີ່ ຄວນຄຳນຶງເຖິງສິດຄອບຄອງນຳໃຊ້ທັງໝົດ ລວມທັງສິດທີ່ຊ້ຳຊ້ອນກັນ ແລະ ສິດເປັນຄັ້ງຄາວ. ຄວນຈະຕ້ອງມີການປະເມີນຄວາມສ່ຽງທີ່ເໝາະສົມ ສຳລັບການວາງແຜນຜັງພື້ນທີ່. ແຜນຜັງພື້ນທີ່ແຫ່ງຊາດ, ຂົງເຂດ ແລະ ທ້ອງຖິ່ນ ຄວນຈະເຊື່ອມປະສານເຂົ້າກັນ.

20.4 ລັດຄວນຮັບປະກັນວ່າປະຊາຊົນມີສ່ວນຮ່ວມຢ່າງກ້ວາງຂວາງໃນການສ້າງບົດສະເໜີການວາງແຜນ ແລະ ການທົບທວນຄືນຮ່າງແຜນຜັງພື້ນທີ່ ເພື່ອຮັບປະກັນການສະທ້ອນໃຫ້ເຫັນບຸລິມະສິດ ແລະ ຜົນປະໂຫຍດຂອງຊຸມຊົນ ລວມທັງຊາວພື້ນເມືອງ ແລະ ຊຸມຊົນຜູ້ຜະລິດສະບຽງອາຫານ. ຖ້າຫາກຈຳເປັນ, ຊຸມຊົນຄວນໄດ້ຮັບການຊ່ວຍເຫຼືອໃນໄລຍະການວາງແຜນ. ອົງການຈັດຕັ້ງປະຕິບັດຄວນເປີດເຜີຍວ່າສິ່ງທີ່ໄດ້ມາຈາກການມີສ່ວນຮ່ວມຊົນ ຖືກສະແດງອອກຄືແນວໃດ ຢູ່ໃນແຜນຜັງພື້ນທີ່ສະບັບສົມບູນ. ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງ ດ້ວຍການສ້າງມາດຕະການປ້ອງກັນການນຳໃຊ້ອຳນາດການວາງແຜນຜັງພື້ນທີ່ໂດຍບໍ່ຖືກຕ້ອງ ໂດຍສະເພາະກ່ຽວກັບການປ່ຽນແປງຕໍ່ການນຳໃຊ້ແບບຄວບຄຸມ. ອົງການຈັດຕັ້ງປະຕິບັດຄວນລາຍງານຜົນໄດ້ຮັບຂອງການຕິດຕາມການປະຕິບັດຕາມລະບຽບການ.

20.5 ການວາງແຜນຜັງພື້ນທີ່ ຄວນຄຳນຶງເຖິງຄວາມຕ້ອງການເພື່ອສົ່ງເສີມການຄຸ້ມຄອງແບບຍືນຍົງທີ່ຫຼາກຫຼາຍ ຕໍ່ກັບທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ລວມທັງວິທີການກະສິກຳແບບຖະໜອມລະບົບນິເວດ ແລະ ການກະເສດສຸມແບບຍືນຍົງ ແລະ ເພື່ອຮັບມືກັບສິ່ງທ້າທາຍຂອງການປ່ຽນແປງສະພາບດິນຟ້າອາກາດ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.

5

## 21. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້

21.1 ໂດຍຜ່ານອົງການຕຸລາການ ແລະ ອົງການບໍລິຫານ ທີ່ເປັນກາງ ແລະ ມີຄວາມສາມາດ, ລັດຄວນສະໜອງການເຂົ້າເຖິງກົນໄກການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ຢ່າງທັນການ, ມີປະສິດທິຜົນ ແລະ ສາມາດຈ່າຍໄດ້ ລວມທັງວິທີທາງເລືອກອື່ນໃນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ, ແລະ ຄວນມີການຢຽວຢາທີ່ມີປະສິດທິຜົນ ແລະ ມີສິດໃນການອຸທອນ. ການຢຽວຢາດັ່ງກ່າວນັ້ນຄວນຖືກບັງຄັບໃຊ້ຢ່າງທັນການ. ລັດຄວນມີກົນໄກສຳລັບທຸກຄົນ, ເພື່ອຫຼີກລ່ຽງ ຫຼື ແກ້ໄຂຂໍ້ຂັດແຍ່ງທີ່ມີແນວໂນ້ມຈະເກີດຂຶ້ນ ຕັ້ງແຕ່ໃນໄລຍະເລີ່ມຕົ້ນ, ທັງຢູ່ພາຍໃນອົງການຈັດຕັ້ງປະຕິບັດ ແລະ ຢູ່ພາຍນອກ. ການບໍລິການແກ້ໄຂຂໍ້ຂັດແຍ່ງ ຄວນໃຫ້ທຸກຄົນເຂົ້າເຖິງໄດ້: ທັງຍິງ ແລະ ຊາຍ, ບໍ່ວ່າດ້ານທີ່ຕັ້ງ, ພາສາ ແລະ ຂັ້ນຕອນດຳເນີນ.

21.2 ລັດອາດພິຈາລະນານຳໃຊ້ສານ ຫຼື ອົງການ ແບບພິເສດສະເພາະ ເພື່ອຮັບຜິດຊອບແກ້ໄຂຂໍ້ຂັດ

ແຍ່ງກ່ຽວກັບສິດຄອບຄອງນຳໃຊ້ໂດຍສະເພາະ, ແລະ ສ້າງຕຳແໜ່ງຜູ້ຊ່ຽວຊານ ຢູ່ພາຍໃນອົງການຕຸລາການ ເພື່ອຮັບມືກັບບັນຫາທາງດ້ານເຕັກນິກ. ລັດອາດພິຈາລະນາຕັ້ງສານພິເສດເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບການວາງແຜນຜັງພື້ນທີ່, ການສຳຫຼວດວັດແທກ ແລະ ການປະເມີນມູນຄ່າ. .

21.3 ລັດຄວນຮັດແໜ້ນ ແລະ ພັດທະນາຮູບແບບທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງ, ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ. ບ່ອນທີ່ມີຮູບແບບການແກ້ໄຂຂໍ້ຂັດແຍ່ງຕາມປະເພນີ ຫຼື ຮູບແບບອື່ນໆທີ່ຈັດຕັ້ງຂຶ້ນ, ຮູບແບບເຫຼົ່ານັ້ນ ຄວນສະໜອງວິທີທາງທີ່ເປັນທຳ, ໜ້າເຊື່ອຖື, ເຂົ້າເຖິງໄດ້ ແລະ ບໍ່ມີລັກສະນະຈຳແນກ ໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ຢ່າງທັນການ.

21.4 ລັດອາດພິຈາລະນານຳໃຊ້ອົງການຈັດຕັ້ງປະຕິບັດເພື່ອແກ້ໄຂຂໍ້ຂັດແຍ່ງພາຍໃນດ້ານວິຊາສະເພາະຂອງຕົນ ເຊັ່ນ: ພາກສ່ວນຮັບຜິດຊອບການສຳຫຼວດວັດແທກ ເປັນຜູ້ແກ້ໄຂຂໍ້ຂັດແຍ່ງກ່ຽວກັບເຂດແດນ ລະຫວ່າງທີ່ດິນບຸກຄົນ ພາຍໃນສະພາບເງື່ອນໄຂຂອງປະເທດ. ການຕັດສິນໃຈ ຄວນເຮັດເປັນລາຍລັກອັກສອນ ແລະ ອີງໃສ່ເຫດຜົນທີ່ເປັນກາງ ແລະ ຄວນມີສິດໃນການອຸທອນຕໍ່ອົງການຕຸລາການ.

21.5 ລັດຄວນພະຍາຍາມປ້ອງກັນການສໍ້ລາດບັງຫຼວງໃນຂະບວນການແກ້ໄຂຂໍ້ຂັດແຍ່ງ.

21.6 ໃນການສະໜອງກົນໄກແກ້ໄຂຂໍ້ຂັດແຍ່ງ, ລັດຄວນພະຍາຍາມໃຫ້ຄວາມຊ່ວຍເຫຼືອດ້ານກົດໝາຍແກ່ບຸກຄົນທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ ເພື່ອຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງຄວາມຍຸຕິທຳຢ່າງປອດໄພ ໂດຍບໍ່ມີການຈຳແນກ. ອົງການຕຸລາການ ແລະ ອົງການອື່ນໆຄວນຮັບປະກັນວ່າພະນັກງານຂອງຕົນມີທັກສະ ແລະ ຄວາມສາມາດທີ່ຈຳເປັນ ໃນການໃຫ້ບໍລິການປະເພດດັ່ງກ່າວ.

## 22. ປະເດັນທີ່ຂ້າມເຂດຊາຍແດນ

22.1 ລັດຄວນຮ່ວມມືກັນ, ໃນກອບກົນໄກທີ່ສອດຄ່ອງ ແລະ ໂດຍການເຂົ້າຮ່ວມຂອງພາກສ່ວນທີ່ໄດ້ຮັບຜົນກະທົບ, ໃນການແກ້ໄຂບັນຫາສິດຄອບຄອງນຳໃຊ້ ທີ່ພົວພັນກັບທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ຂ້າມເຂດຊາຍແດນຂອງປະເທດ. ລັດຄວນຮັບປະກັນວ່າທຸກມາດຕະການ ແມ່ນສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນພາຍໃຕ້ກົດໝາຍຂອງຊາດ ແລະ ກົດໝາຍສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈພາຍໃຕ້ສົນທິສັນຍາທີ່ນຳໃຊ້ໃນພາກພື້ນແລະສາກົນ. ໃນລັດທີ່ເກີດມີປະເດັນທີ່ຂ້າມເຂດຊາຍແດນກ່ຽວກັບສິດຄອບຄອງນຳໃຊ້, ພາກສ່ວນຕ່າງໆຄວນເຮັດວຽກຮ່ວມກັນເພື່ອປົກປ້ອງສິດຄອບຄອງນຳໃຊ້ດັ່ງກ່າວ, ປົກປ້ອງການດຳລົງຊີວິດ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ ຂອງປະຊາຊົນທີ່ຍ້າຍຖິ່ນຖານ ໃນອະນາເຂດທີ່ກ່ຽວຂ້ອງຂອງຕົນ.

22.2 ລັດ ແລະ ພາກສ່ວນອື່ນໆ ຄວນປະກອບສ່ວນໃນການສ້າງຄວາມເຂົ້າໃຈກ່ຽວກັບບັນຫາສິດຄອບຄອງນຳໃຊ້ທີ່ຂ້າມເຂດຊາຍແດນ ຊຶ່ງກະທົບຕໍ່ຊຸມຊົນ ເຊັ່ນ ທົ່ງຫຍ້າລ້ຽງສັດ ຫຼື ເສັ້ນທາງເຄື່ອນຍ້າຍຕາມລະດູການຂອງຜູ້ລ້ຽງສັດ, ພື້ນທີ່ການຫາປາຂອງຊາວປະມົງຂະໜາດນ້ອຍ ຊຶ່ງຕັ້ງຢູ່ຂ້າມຊາຍແດນລະຫວ່າງປະເທດ.

22.3 ບ່ອນທີ່ເໝາະສົມ, ລັດຄວນປະສົມປະສານບັນດາມາດຕະຖານດ້ານກົດໝາຍ ກ່ຽວກັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ໂດຍສອດຄ່ອງກັບພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈຂອງຕົນພາຍໃຕ້ສົນທິສັນຍາ

5

ທີ່ໃຊ້ໃນພາກພື້ນ ແລະ ສາກົນ. ບ່ອນທີ່ເໝາະສົມ, ຄວນປະສານບັນຫາດັ່ງ ກັບອົງການທີ່ກ່ຽວຂ້ອງປະຈຳພາກພື້ນ ແລະ ພາກສ່ວນທີ່ຖືກກະທົບ. ໂດຍການເຂົ້າຮ່ວມຂອງພາກສ່ວນທີ່ຖືກກະທົບ ຕາມຄວາມເໝາະສົມ, ລັດຄວນພັດທະນາ ຫຼື ເສີມສ້າງມາດຕະການສາກົນທີ່ມີຢູ່ ເພື່ອຄຸ້ມຄອງສິດຄອບຄອງນຳໃຊ້ ທີ່ຂ້າມເຂດຊາຍແດນລະຫວ່າງປະເທດ. ບ່ອນທີ່ເໝາະສົມ, ລັດຄວນປະສານກັບພາກສ່ວນທີ່ກ່ຽວຂ້ອງປະຈຳພາກພື້ນ, ເຊິ່ງຄວນດຳເນີນໂດຍສະເພາະ ເພື່ອປົກປ້ອງການດຳລົງຊີວິດ ແລະ ສອດຄ່ອງກັບວັກ 4.8 ກ່ຽວກັບສິດທິຂອງທຸກຄົນທີ່ໄດ້ຮັບຜົນກະທົບ.

5

ພາກ 6

# ການໂຕ້ຕອບຕໍ່ການປ່ຽນແປງສະພາບດິນຟ້າອາກາດ ແລະ ພາວະສຸກເສີນ

ພາກນີ້ເວົ້າເຖິງການຄຸ້ມຄອງບໍລິຫານການຄອບຄອງນໍາໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໃນເງື່ອນໄຂການປ່ຽນແປງສະພາບດິນຟ້າອາກາດ, ໄພພິບັດທໍາມະຊາດ ແລະ ຂໍ້ຂັດແຍ່ງ.

## 23. ການປ່ຽນແປງສະພາບດິນຟ້າອາກາດ

23.1 ລັດຄວນຮັບປະກັນວ່າສິດຄອບຄອງນໍາໃຊ້ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ທີ່ຊອບທໍາຂອງໝົດທຸກຄົນ, ຊຸມຊົນ ຫຼື ຜູ້ທີ່ອາດຈະໄດ້ຮັບຜົນກະທົບ, ໂດຍເນັ້ນໃສ່ຊາວກະສິກອນ, ຜູ້ທໍາການຜະລິດຂະໜາດນ້ອຍ, ແລະ ກຸ່ມຄົນທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ ໄດ້ຮັບການເຄົາລົບ ແລະ ປົກປ້ອງໂດຍກົດໝາຍ, ນະໂຍບາຍ, ຍຸດທະສາດ ແລະ ມາດຕະການ ແນໃສ່ປ້ອງກັນ ແລະ ໂຕ້ຕອບຕໍ່ຜົນກະທົບຂອງການປ່ຽນແປງສະພາບດິນຟ້າອາກາດ ໂດຍສອດຄ່ອງກັບພັນທະທີ່ກ່ຽວຂ້ອງຂອງຕົນ, ຕາມທີ່ມີຜົນນໍາໃຊ້, ໃນດ້ານຂໍ້ຕົກລົງກ່ຽວກັບກອບການປ່ຽນແປງສະພາບດິນຟ້າອາກາດທີ່ກ່ຽວຂ້ອງ.

23.2 ບ່ອນທີ່ເໝາະສົມ, ລັດຄວນສູ້ຊົນເພື່ອກະກຽມ ແລະ ຈັດຕັ້ງປະຕິບັດຍຸດທະສາດ ແລະ ມາດຕະການໂດຍມີການປຶກສາຫາລື ແລະ ການມີສ່ວນຮ່ວມຂອງທຸກຄົນ, ທັງຍິງ ແລະ ຊາຍ ຊຶ່ງອາດຖືກຍົກຍ້າຍບ່ອນຢູ່ເນື່ອງຈາກການປ່ຽນແປງສະພາບດິນຟ້າອາກາດ. ທຸກໆການສະໜອງທີ່ດິນ, ພື້ນທີ່ປະມົງ, ປ່າໄມ້, ແລະ ການດໍາລົງຊີວິດ ທີ່ເປັນທາງເລືອກສໍາລັບຜູ້ທີ່ຖືກຍົກຍ້າຍຄວນບໍ່ກະທົບກະເທືອນຕໍ່ການດໍາລົງຊີວິດຂອງຄົນອື່ນ. ລັດອາດຕ້ອງພິຈາລະນາໃຫ້ການຊ່ວຍເຫຼືອພິເສດໃຫ້ແກ່ເກາະດອນນ້ອຍ ແລະ ລັດທີ່ກໍາລັງພັດທະນາອື່ນໆ.

23.3 ໂດຍສອດຄ່ອງກັບຫຼັກການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນໍາສະບັບນີ້, ລັດຄວນເອື້ອອໍານວຍໃຫ້ແກ່ການມີສ່ວນຮ່ວມຂອງທຸກຄົນ, ຊຸມຊົນ ຫຼື ປະຊາຊົນທົ່ວໄປ, ໂດຍເນັ້ນໃສ່ຊາວກະສິກອນ, ຜູ້ທໍາການຜະລິດຂະໜາດນ້ອຍ, ກຸ່ມຄົນທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ ທີ່ຖືສິດຄອບຄອງນໍາໃຊ້ຢ່າງຊອບທໍາ ໃນການເຈລະຈາ ແລະ ຈັດຕັ້ງປະຕິບັດໂຄງການການປັບຕົວ ແລະ ຜ່ອນເບົາຜົນກະທົບ.

6

## 24. ໄພພິບັດທາງທຳມະຊາດ

24.1 ທຸກພາກສ່ວນຄວນຮັບປະກັນວ່າປະເດັນການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຖືກເອົາໃຈໃສ່ໃນເວລາປ້ອງກັນແລະກຽມຄວາມພ້ອມສຳລັບໄພພິບັດທຳມະຊາດແລະໃນການໂຕ້ຕອບໄພພິບັດດັ່ງກ່າວ. ໂຄງສ້າງດ້ານລະບຽບກົດໝາຍສຳລັບການຄອບຄອງນຳໃຊ້ ລວມທັງແຜນຜັງພື້ນທີ່ ຄວນຖືກອອກແບບ ໃຫ້ຫຼີກລ່ຽງ ຫຼື ຈຳກັດຜົນກະທົບທີ່ອາດເກີດຂຶ້ນຈາກໄພພິບັດທຳມະຊາດ ໃຫ້ໜ້ອຍສຸດ.

24.2 ລັດຄວນຮັບປະກັນວ່າ ທຸກມາດຕະການ ສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນ ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ນຳໃຊ້ໃນພາກພື້ນ ແລະ ສາກົນ. ທຸກພາກສ່ວນຄວນດຳເນີນການ ໂດຍຄຳນຶງເຖິງຫຼັກການສາກົນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ ລວມທັງຫຼັກການແຫ່ງສະຫະປະຊາຊາດວ່າດ້ວຍເຮືອນຢູ່ອາໄສ ແລະ ການທົດແທນຄືນຊັບສິນໃຫ້ຊາວອົບພະຍົບ ແລະ ປະຊາຊົນທີ່ຖືກຍົກຍ້າຍຖິ່ນຖານ (“Pinheiro Principles”) ແລະ ກົດບັດດ້ານມະນຸດສະທຳ ແລະ ມາດຖານຂັ້ນຕ່ຳສຸດໃນການໂຕ້ຕອບໄພພິບັດ.

24.3 ລັດຄວນເອົາໃຈໃສ່ເລື່ອງການຄອບຄອງນຳໃຊ້ ຢູ່ໃນໂຄງການປ້ອງກັນ ແລະ ຕ້ານໄພພິບັດ. ຄວນມີການເກັບກຳຂໍ້ມູນຂ່າວສານກ່ຽວກັບສິດຄອບຄອງນຳໃຊ້ທີ່ຊອບທຳ ໃນເຂດທີ່ອາດຖືກຜົນກະທົບ, ໂດຍຜ່ານຂັ້ນຕອນທີ່ສອດຄ່ອງກັບຫຼັກການການປຶກສາຫາລືແລະການມີສ່ວນຮ່ວມຂອງບົດແນະນຳສະບັບນີ້. ບັນດາລະບົບບັນທຶກສິດຄອບຄອງນຳໃຊ້ທີ່ຊອບທຳ ຄວນສາມາດຟື້ນຟູຄືນຈາກໄພພິບັດທຳມະຊາດ, ລວມທັງການເກັບມ້ຽນຂໍ້ມູນບັນທຶກໄວ້ນອກລະບົບຖານຂໍ້ມູນ ເພື່ອເຮັດໃຫ້ເຈົ້າຂອງສິດຄອບຄອງນຳໃຊ້ ສາມາດພິສູດສິດຂອງຕົນ ແລະ ຊອກເຫັນຕອນດິນ ຫຼື ພື້ນທີ່ອື່ນໆ. ລັດຄວນສູ້ຊົນເພື່ອກຳນົດພື້ນທີ່ສຳລັບການຈັດສັນທີ່ຢູ່ຊົ່ວຄາວ ໃຫ້ແກ່ປະຊາຊົນຜູ້ທີ່ອາດຈະຖືກຍົກຍ້າຍບ່ອນຢູ່ຍ້ອນໄພພິບັດທຳມະຊາດ ແລະ ຄວນສ້າງລະບຽບການຂຶ້ນເພື່ອໃຫ້ມີຄວາມໝັ້ນຄົງໃນການຄອບຄອງນຳໃຊ້ ໃນພື້ນທີ່ນັ້ນ.

24.4 ລັດ ແລະ ພາກສ່ວນອື່ນໆ ຄວນເອົາໃຈໃສ່ເລື່ອງການຄອບຄອງນຳໃຊ້ ໃນໄລຍະໂຕ້ຕອບພາວະສຸກເສີນ. ທຸກໆການສະໜອງທີ່ດິນ, ພື້ນທີ່ປະມົງ, ປ່າໄມ້ ແລະ ການດຳລົງຊີວິດທີ່ເປັນທາງເລືອກແກ່ຜູ້ຖືກຍົກຍ້າຍ ຄວນບໍ່ກະທົບກະເທືອນສິດທິ ແລະ ການດຳລົງຊີວິດຂອງຜູ້ອື່ນ. ສິດຄອບຄອງນຳໃຊ້ທີ່ຊອບທຳຂອງຜູ້ທີ່ຖືກຍົກຍ້າຍຄວນຖືກຮັບຮູ້, ເຄົາລົບ ແລະ ປົກປ້ອງ. ຂໍ້ມູນກ່ຽວກັບສິດຄອບຄອງນຳໃຊ້ ແລະ ການນຳໃຊ້ແບບບໍ່ໄດ້ຮັບອະນຸຍາດ ຄວນຖືກເຜີຍແຜ່ໃຫ້ທຸກຄົນທີ່ໄດ້ຮັບຜົນກະທົບຊາບ.

24.5 ລັດ ແລະ ພາກສ່ວນອື່ນໆ ຄວນເອົາໃຈໃສ່ເລື່ອງການຄອບຄອງນຳໃຊ້ ໃນໄລຍະຟື້ນຟູ. ຜູ້ທີ່ຖືກຍົກຍ້າຍບ່ອນຢູ່ຊົ່ວຄາວຄວນໄດ້ຮັບການຊ່ວຍເຫຼືອຢ່າງສະໝັກໃຈ, ປອດໄພ ແລະ ດ້ວຍກຽດສັກສີໃນການກັບຄືນສູ່ຖິ່ນຖານເດີມຂອງຕົນ. ຄວນມີວິທີທາງແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້. ບ່ອນທີ່ຈະຕ້ອງກຳນົດເຂດແດນຂອງຕອນດິນ ແລະ ຫົວໜ່ວຍພື້ນທີ່ອື່ນໆ ຄືນໃໝ່, ກໍຄວນດຳເນີນ ໃຫ້ສອດຄ່ອງກັບຫຼັກການການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບົດແນະນຳສະບັບນີ້. ບ່ອນທີ່ປະຊາຊົນບໍ່ສາມາດກັບຄືນຖິ່ນຖານເດີມໄດ້ ເຂົາເຈົ້າຄວນຕັ້ງຖິ່ນຖານຖາວອນຢູ່ບ່ອນອື່ນ. ໃນການຕັ້ງຖິ່ນຖານໃໝ່ດັ່ງກ່າວ ຄວນມີການເຈລະຈາກັບຊຸມຊົນເຈົ້າພາບເພື່ອຮັບປະກັນການເຂົ້າເຖິງ ທີ່ດິນ, ພື້ນທີ່ປະມົງ, ປ່າໄມ້ ແລະ ການດຳລົງຊີວິດ ທີ່ເປັນທາງເລືອກ ໃນວິທີທາງທີ່ບໍ່ກະທົບກະເທືອນຕໍ່ສິດທິ ແລະ ການດຳລົງຊີວິດຂອງຜູ້ອື່ນ.

6

## 25. ການຂັດແຍ່ງທີ່ພົວພັນກັບການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້

25.1 ທຸກພາກສ່ວນຄວນດໍາເນີນບາດກ້າວໃນການປ້ອງກັນ ແລະ ກຳຈັດບັນຫາກ່ຽວກັບການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ເປັນສາເຫດຂອງການຂັດແຍ່ງ ແລະ ຄວນຮັບປະກັນວ່າທຸກດ້ານຂອງການຄອບຄອງນຳໃຊ້ຈະຖືກເອົາໃຈໃສ່ ກ່ອນ, ໃນຊ່ວງໄລຍະ ແລະ ຫຼັງການຂັດແຍ່ງ ລວມທັງໃນສະພາບທີ່ມີການຄອບຄອງ ຊຶ່ງພາກສ່ວນຕ່າງໆຄວນດໍາເນີນການໄປຕາມກົດໝາຍມະນຸດສະທຳສາກົນທີ່ມີຜົນນຳໃຊ້.

25.2 ລັດຄວນຮັບປະກັນວ່າທຸກມາດຕະການ ລ້ວນແຕ່ສອດຄ່ອງກັບພັນທະທີ່ມີຢູ່ຂອງຕົນ ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ ພ້ອມທັງຄຳນຶງເຖິງພັນທະສັນຍາແບບສະໝັກໃຈ ພາຍໃຕ້ສົນທິສັນຍາທີ່ນຳໃຊ້ຢູ່ໃນພາກພື້ນ ແລະ ສາກົນ, ແລະ ຫາກເໝາະສົມ ລວມທັງສົນທິສັນຍາວ່າດ້ວຍສະຖານະພາບຂອງຊາວອົບພະຍົບ ແລະ ອະນຸສັນຍາຂອງສົນທິສັນຍາດັ່ງກ່າວ, ແລະ ຫຼັກການແຫ່ງສະຫະປະຊາຊາດວ່າດ້ວຍເຮືອນຢູ່ອາໄສ ແລະ ການທົດແທນຄືນຊັບສິນໃຫ້ຊາວອົບພະຍົບ ແລະ ປະຊາຊົນທີ່ຖືກຍົກຍ້າຍຖິ່ນຖານ (“Pinheiro Principles”). ໃນຊ່ວງໄລຍະ ແລະ ພາຍຫຼັງການຂັດແຍ່ງ ລັດຄວນເຄົາລົບກົດໝາຍມະນຸດສະທຳສາກົນທີ່ມີຜົນນຳໃຊ້ກ່ຽວກັບສິດຄອບຄອງນຳໃຊ້ທີ່ຊອບທຳ.

25.3 ເພື່ອບໍ່ໃຫ້ບັນຫາການຄອບຄອງນຳໃຊ້ ຊັກນຳໄປສູ່ການຂັດແຍ່ງ, ທຸກພາກສ່ວນຄວນດໍາເນີນບາດກ້າວໃນການແກ້ໄຂບັນຫາດັ່ງກ່າວ ຢ່າງສັນຕິວິທີ. ລັດຄວນປັບປຸງນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງ ເພື່ອກຳຈັດການຈຳແນກ ແລະ ປັດໄຈອື່ນໆ ຊຶ່ງອາດເປັນສາເຫດຂອງການຂັດແຍ່ງ. ບ່ອນທີ່ເໝາະສົມ, ລັດອາດພິຈາລະນານຳໃຊ້ກົນໄກຕາມປະເພນີ ແລະ ກົນໄກອື່ນໆຂອງທ້ອງຖິ່ນທີ່ສະໜອງການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງທັນການ, ເປັນທຳ, ເຊື່ອຖືໄດ້, ແນໃສ່ບົດບາດຍິງຊາຍ, ເຂົ້າເຖິງໄດ້ ແລະ ບໍ່ມີການຈຳແນກ.

25.4 ເມື່ອມີການຂັດແຍ່ງເກີດຂຶ້ນ, ລັດ ແລະ ພາກສ່ວນອື່ນຄວນພະຍາຍາມເຄົາລົບ ແລະ ປົກປ້ອງສິດຄອບຄອງນຳໃຊ້ທີ່ຊອບທຳທີ່ມີຢູ່ແລ້ວ ແລະ ຮັບປະກັນວ່າສິດເຫຼົ່ານີ້ຈະບໍ່ຖືກຍົກເລີກໂດຍພາກສ່ວນອື່ນ. ໂດຍສອດຄ່ອງກັບພັນທະທີ່ມີຢູ່ພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ, ລັດບໍ່ຄວນຮັບຮູ້ສິດຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ພາຍໃນດິນແດນຂອງຕົນທີ່ໄດ້ມາດ້ວຍການບັງຄັບ ແລະ/ຫຼື ດ້ວຍຄວາມຮຸນແຮງ. ຊາວອົບພະຍົບ ແລະ ປະຊາຊົນທີ່ຖືກຍົກຍ້າຍຖິ່ນຖານ ແລະ ຜູ້ອື່ນໆທີ່ໄດ້ຮັບຜົນກະທົບຈາກການຂັດແຍ່ງ ຄວນຖືກຈັດສັນຖິ່ນຖານໃຫ້ ໃນສະພາບທີ່ປອດໄພ ຊຶ່ງປົກປ້ອງສິດຄອບຄອງນຳໃຊ້ຂອງຊຸມຊົນເຈົ້າພາບ. ການລະເມີດສິດຄອບຄອງນຳໃຊ້ ຄວນຖືກບັນທຶກເປັນເອກກະສານ ແລະ ຖືກແກ້ໄຂຊົດເຊີຍຕາມພາຍຫຼັງ ໃນບ່ອນທີ່ເໝາະສົມ. ຂໍ້ມູນການບົດບັນທຶກສິດຄອບຄອງນຳໃຊ້ ຢ່າງເປັນທາງການຄວນຖືກປົກປ້ອງຈາກການຖືກທຳລາຍ ແລະ ການລັກຂະໂມຍ ເພື່ອນຳໃຊ້ເປັນຫຼັກຖານສຳລັບຂັ້ນຕອນຕໍ່ໄປໃນການແກ້ໄຂບັນຫາການລະເມີດດັ່ງກ່າວ ແລະ ເອື້ອອຳນວຍໃຫ້ແກ່ມາດຕະການແກ້ໄຂທີ່ເໝາະສົມ, ແລະ ໃນເຂດທີ່ບໍ່ມີຂໍ້ມູນການບັນທຶກດັ່ງກ່າວ ຖ້າເປັນໄປໄດ້ຄວນບັນທຶກສິດຄອບຄອງນຳໃຊ້ທີ່ມີຢູ່ ໃຫ້ດີທີ່ສຸດ ໂດຍຄຳນຶງເຖິງຄວາມສຳຄັນດ້ານບົດບາດຍິງຊາຍ, ລວມທັງຈາກການເລົ່າປະຫວັດ ແລະ ຈາກຄຳໃຫ້ການ. ສິດຄອບຄອງທີ່ຊອບທຳຂອງຊາວອົບພະຍົບ ແລະ ປະຊາຊົນທີ່ຍົກຍ້າຍຖິ່ນຖານຄວນຖືກຮັບຮູ້, ເຄົາລົບ ແລະ ປົກປ້ອງ. ຂໍ້ມູນກ່ຽວກັບສິດຄອບຄອງນຳໃຊ້ ແລະ ການນຳໃຊ້ທີ່ບໍ່ໄດ້ຮັບອະນຸຍາດ ຄວນຖືກເຜີຍແຜ່ໃຫ້ຜູ້ໄດ້ຮັບຜົນກະທົບທັງໝົດຮັບຊາບ.

25.5 ໃນສະພາບທີ່ເກີດການຂັດແຍ່ງ, ຖ້າເປັນໄປໄດ້ ຫຼື ໃນກໍລະນີການຂັດແຍ່ງຢຸດຕິລົງແລ້ວ, ລັດ

ແລະ ພາກສ່ວນອື່ນໆຄວນຮັບປະກັນວ່າ ບັນຫາການຄອບຄອງນຳໃຊ້ ໄດ້ຖືກແກ້ໄຂໄປໃນທາງທີ່ປະກອບສ່ວນເຂົ້າໃນຄວາມສະເໝີພາບຍິງຊາຍ ແລະ ສະໜັບສະໜູນແນວທາງແກ້ໄຂທີ່ຍາວນານ ສຳລັບຜູ້ທີ່ໄດ້ຮັບຜົນກະທົບ. ບ່ອນທີ່ສາມາດທົດແທນຄືນໄດ້, ຕາມຄວາມເໝາະສົມ, ໂດຍການຊ່ວຍເຫຼືອຂອງ ອົງການຂ້າຫຼວງໃຫຍ່ແຫ່ງສະຫະປະຊາຊາດ ວ່າດ້ວຍຊາວອົບພະຍົບ (UNHCR) ແລະ ອົງການກ່ຽວຂ້ອງອື່ນໆ, ຊາວອົບພະຍົບ ແລະ ປະຊາຊົນທີ່ຖືກຍົກຍ້າຍຖິ່ນຖານ ຄວນໄດ້ຮັບການຊ່ວຍເຫຼືອ ຢ່າງສະໝັກໃຈ, ປອດໄພ ແລະ ມີກຽດສັກສີ ໃນການກັບຄືນສູ່ຖິ່ນຖານເດີມຂອງເຂົາເຈົ້າ ໂດຍສອດຄ່ອງກັບມາດຖານສາກົນທີ່ນຳໃຊ້ຢູ່. ຂັ້ນຕອນໃນການທົດແທນຄືນ, ການຟື້ນຟູ ແລະ ການຊົດໃຊ້ ຄວນບໍ່ມີລັກສະນະຈຳແນກ, ແນໃສ່ບົດບາດຍິງຊາຍ ແລະ ຖືກເຜີຍແຜ່ຢ່າງກ້ວາງຂວາງ, ແລະ ການຮຽກຮ້ອງສິດການທົດແທນຄືນຄວນຖືກດຳເນີນຢ່າງທັນການ. ຂັ້ນຕອນໃນການທົດແທນຄືນສຳລັບສິດຄອບຄອງນຳໃຊ້ ຂອງຊາວພື້ນເມືອງ ແລະ ຊຸມຊົນອື່ນໆ ທີ່ມີລະບົບການຄອບຄອງນຳໃຊ້ຕາມປະເພນີ ຄວນມີນຳໃຊ້ແຫຼ່ງຂໍ້ມູນຂ່າວສານແບບພື້ນເມືອງ.

25.6 ບ່ອນທີ່ບໍ່ສາມາດທົດແທນຄືນໄດ້, ຄວນສະໜອງການເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ, ປ່າໄມ້ ແລະ ການດຳລົງຊີວິດທີ່ເປັນທາງເລືອກທົດແທນ ສຳລັບຊາວອົບພະຍົບ ແລະ ຜູ້ຍົກຍ້າຍຖິ່ນຖານ ໂດຍເຈລະຈາກັບຊຸມຊົນເຈົ້າພາບ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອຮັບປະກັນວ່າການຕັ້ງຖິ່ນຖານໃໝ່ຈະບໍ່ກະທົບກະເທືອນຕໍ່ການດຳລົງຊີວິດຂອງຜູ້ອື່ນ. ບ່ອນທີ່ເປັນໄປໄດ້, ຄວນມີຂັ້ນຕອນພິເສດ ສຳລັບຜູ້ມີຄວາມສ່ຽງ, ລວມທັງແມ່ໝ້າຍ ແລະ ເດັກກຳພ້າ ເພື່ອໃຫ້ເຂົ້າເຖິງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຢ່າງໝັ້ນຄົງ

25.7 ບ່ອນທີ່ເໝາະສົມ, ນະໂຍບາຍ ແລະ ກົດໝາຍຄວນຖືກປັບປຸງຄືນ ເພື່ອແກ້ໄຂບັນຫາການຈຳແນກທີ່ມີຢູ່ກ່ອນ ກໍຄືການຈຳແນກທີ່ເກີດມີຂຶ້ນໃນຊ່ວງເວລາຂອງການຂັດແຍ່ງ. ບ່ອນທີ່ເໝາະສົມ ຫຼື ຖ້າຈຳເປັນ, ຄວນສ້າງຕັ້ງອົງການທີ່ກ່ຽວຂ້ອງຂຶ້ນໃໝ່ ເພື່ອໃຫ້ບໍລິການທີ່ຈຳເປັນສຳລັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ.

6

ພາກ 7

# ການສົ່ງເສີມ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ.

26.1 ອີງຕາມລັກສະນະແບບສະໝັກໃຈຂອງບົດແນະນຳສະບັບນີ້, ລັດມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ ບົດແນະນຳສະບັບນີ້.

26.2 ລັດຖືກຊຸກຍູ້ໃຫ້ສ້າງຕັ້ງເວທີ ແລະ ກອບວຽກ ທີ່ປະກອບດ້ວຍຫຼາຍພາກສ່ວນກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນ, ລະດັບຊາດ ແລະ ລະດັບພາກພື້ນ ຫຼື ນຳໃຊ້ເວທີ ແລະ ກອບວຽກທີ່ມີຢູ່ແລ້ວເພື່ອປະສານສົມທົບກັນຈັດຕັ້ງປະຕິບັດບົດແນະນຳສະບັບນີ້; ເພື່ອຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນຂອບເຂດອຳນາດຂອງຕົນ; ແລະ ເພື່ອປະເມີນຜົນກະທົບຕໍ່ການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ ທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ທີ່ດີຂຶ້ນ ແລະ ຜົນກະທົບຕໍ່ການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການປະຕິບັດຕົວຈິງຢ່າງຕັ້ງໜ້າຕໍ່ສິດໃນການມີອາຫານພຽງພໍ ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ ແລະ ການພັດທະນາແບບຍືນຍົງ. ຂັ້ນຕອນດັ່ງກ່າວນີ້ ຄວນເປັນແບບຮອບດ້ານ, ມີສ່ວນຮ່ວມ, ແນໃສ່ບົດບາດຍິງຊາຍ, ສາມາດຈັດຕັ້ງປະຕິບັດໄດ້, ຄຸ້ມຄ່າ ແລະ ຍືນຍົງ. ໃນການດຳເນີນໜ້າວຽກເຫຼົ່ານີ້, ລັດອາດຊອກຫາການຊ່ວຍເຫຼືອດ້ານວິຊາການຈາກອົງການປະຈຳພາກພື້ນ ແລະ ສາກົນ.

26.3 ຄູ່ຮ່ວມພັດທະນາ, ອົງການວິຊາສະເພາະຂອງສະຫະປະຊາຊາດ ແລະ ອົງການຈັດຕັ້ງປະຈຳພາກພື້ນ ຖືກຊຸກຍູ້ໃຫ້ສະໜັບສະໜູນຄວາມພະຍາຍາມແບບສະໝັກໃຈຂອງລັດ ໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຊຶ່ງລວມທັງຜ່ານການຮ່ວມມືຂອງປະເທດກຳລັງພັດທະນາ (ການຮ່ວມມື ລະຫວ່າງ ໃຕ້-ໃຕ້- South-South cooperation). ການສະໜັບສະໜູນດັ່ງກ່າວອາດກວມເອົາການຮ່ວມມືດ້ານວິຊາການ, ການຊ່ວຍເຫຼືອດ້ານການເງິນ, ການພັດທະນາຂີດຄວາມສາມາດຂອງສະຖາບັນ, ການແລກປ່ຽນຄວາມຮູ້ ແລະ ປະສົບການ, ການຊ່ວຍເຫຼືອພັດທະນານະໂຍບາຍແຫ່ງຊາດກ່ຽວກັບການຄອບຄອງນຳໃຊ້ ແລະ ການຖ່າຍທອດເຕັກໂນໂລຊີ.

26.4 ຄະນະກຳມະການຄວາມໝັ້ນຄົງດ້ານສະບຽງອາຫານໂລກ ຄວນເປັນເວທີໜຶ່ງຂອງໂລກທີ່ທຸກພາກສ່ວນກ່ຽວຂ້ອງຮຽນຮູ້ປະສົບການຂອງກັນ ແລະ ກັນ, ແລະ ປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ແລະ ຄວາມສອດຄ່ອງ, ປະສິດທິຜົນ ແລະ ຜົນກະທົບຂອງມັນ. ດັ່ງນັ້ນ, ກອງເລຂາຂອງຄະນະກຳມະການຄວາມໝັ້ນຄົງດ້ານສະບຽງອາຫານໂລກ, ໂດຍການປະສານສົມທົບກັບກຸ່ມທີ່ປຶກສາ, ຄວນລາຍງານໃຫ້ຄະນະກຳມະການຄວາມໝັ້ນຄົງດ້ານສະບຽງອາຫານໂລກ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບົດແນະນຳສະບັບນີ້, ລວມທັງປະເມີນຜົນກະທົບ ແລະ ການປະກອບສ່ວນຂອງມັນ ເຂົ້າໃນການປັບປຸງການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້. ບົດລາຍງານດັ່ງກ່າວຄວນເປັນສາກົນ ແລະ ລວມເອົາປະສົບການຂອງພາກພື້ນ, ພາກປະຕິບັດທີ່ດີເລີດ ແລະ ບົດຮຽນທີ່ຖອດຖອນໄດ້.

26.5 ທຸກພາກສ່ວນ ລວມທັງອົງການຈັດຕັ້ງປະຊາສັງຄົມ ແລະ ພາກເອກະຊົນ ແມ່ນຖືກຊຸກຍູ້ໃຫ້ນຳໃຊ້ຄວາມພະຍາຍາມຮ່ວມກັນເພື່ອສົ່ງເສີມ ແລະ ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ອີງຕາມບຸລິມະສິດ ແລະ ເງື່ອນໄຂຂອງປະເທດ. ທຸກພາກສ່ວນ ແມ່ນຖືກຊຸກຍູ້ໃຫ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການຄຸ້ມຄອງບໍລິຫານການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບເພື່ອປັບປຸງພາກປະຕິບັດ.

Governance of Tenure

ບົດແນະນຳສະບັບນີ້ ເປັນເຄື່ອງມືທີ່ໃຫ້ຄວາມເຂົ້າໃຈລະອຽດ ລະດັບໂລກ ສະບັບທຳອິດ ກ່ຽວກັບການຄອບຄອງນຳໃຊ້ແລະການບໍລິຫານການຄອບຄອງນຳໃຊ້,ທີ່ຈະຖືກສ້າງຂື້ນໂດຍຜ່ານການເຈລະຈາລະຫວ່າງລັດຖະບານປະເທດຕ່າງໆ. ບົດແນະນຳສະບັບນີ້ ວາງບັນດາຫຼັກການ ແລະ ມາດຖານທີ່ສາກົນຍອມຮັບ ໃນພາກປະຕິບັດທີ່ມີຄວາມຮັບຜິດຊອບ ຕໍ່ການນຳໃຊ້ ແລະ ຄວບຄຸມທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້. ມັນໃຫ້ຄຳແນະນຳໃນການປັບປຸງນະໂຍບາຍ, ກອບດ້ານນິຕິກຳ ແລະ ກອບດ້ານການຈັດຕັ້ງ ທີ່ກຳນົດສິດຄອບຄອງນຳໃຊ້; ເພື່ອເພີ່ມທະວີຄວາມໂປ່ງໃສ ແລະ ການບໍລິຫານລະບົບການຄອບຄອງນຳໃຊ້; ແລະ ເພື່ອສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ແລະ ການປະຕິບັດງານໂດຍໜ່ວຍງານຂອງລັດ, ວິສາຫະກິດເອກະຊົນ, ອົງການຈັດຕັ້ງປະຊາສັງຄົມ ແລະ ປະຊາຊົນທີ່ກ່ຽວຂ້ອງກັບການຄອບຄອງນຳໃຊ້ ແລະ ການຄຸ້ມຄອງບໍລິຫານມັນ. ບົດແນະນຳສະບັບນີ້ ວາງການຄຸ້ມຄອງບໍລິຫານການຄຸ້ມຄອງນຳໃຊ້ ຢູ່ໃນສະພາບເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ ແລະ ແນໃສ່ປະກອບສ່ວນເຂົ້າໃນການບັນລຸຢ່າງຄືບໜ້າ ກ່ຽວກັບສິດທິໃນການມີອາຫານພຽງພໍ, ການລຶບລ້າງຄວາມທຸກຍາກ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາ ເສດຖະກິດ ແລະ ສັງຄົມແບບຍືນຍົງ

www.fao.org/nr/tenure

Schweizerische Eidgenossenschaft<br>
Confédération suisse<br>
Confederazione Svizzera<br>
Confederaziun svizra

**Swiss Agency for Development and Cooperation SDC**

MRLG<br>
MEKONG REGION<br>
LAND GOVERNANCE

ການ ຮ່ວມມື<br>
ເຢຍລະມັນ<br>
DEUTSCHE ZUSAMMENARBEIT

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ISBN 978-92-5-207277-5

9 789252 072775

I2801F/1/06.12